LAO WORLD
PUBLIC COMPANY

ບໍລິສັດ ລາວເວີ້ນ ມະຫາຊົ້ນ
ລວມຊ

ເລກທີ 267 / 23 -

ວັນທີ 07 APR 2023

ຈົດໝາຍເຊີນ

ເຖິງ : ທ່ານຜູ້ຖືຮຸ້ນ ຂອງບໍລິສັດລາວເວີ້ນມະຫາຊົ້ນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022

- ອີງຕາມກົດລະບຽບຂອງ ບໍລິສັດລາວເວີ້ນມະຫາຊົ້ນ ລົງວັນທີ 07 ມິຖຸນາ 2013
- ອີງຕາມມະຕິກອງປະຊຸມສາມັນຂອງສະພາບໍລິຫານ ເລກທີ 239-/23/ລວມຊ ລົງວັນທີ 28 ມີນາ 2023

ບໍລິສັດລາວເວີ້ນມະຫາຊົ້ນ ມີຄວາມຍິນດີຂໍເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດລາວເວີ້ນມະຫາຊົ້ນ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ທີ່ຈະໄດ້ຈັດຂຶ້ນໃນວັນທີ 27 ເມສາ 2023 ເວລາ ບ່າຍ 3:00 ໂມງ (ເລີ່ມລົງທະບຽນເວລາ ບ່າຍ 2:00 ໂມງ) ຢູ່ທີ່ຫ້ອງປະຊຸມຊັ້ນ 2, ອາຄານ ລາວ-ໄອເຕັກ (ອາຄານຫຼັງເກົ່າ), ຖະໜົນ ກຳແພງເມືອງ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ກອງປະຊຸມ ຈະໄດ້ພິຈາລະນາ ແລະ ຮັບຮອງເອົາມະຕິສຳຄັນຕ່າງໆທີ່ໄດ້ລະບຸໄວ້ໃນວາລະກອງປະຊຸມ ໃນເອກະສານຄັດຕິດມ້ດເຊີນປະຊຸມນີ້.

ທາງບໍລິສັດໄດ້ປະກາດແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຢູ່ເວັບໄຊ້ຂອງ ທາງຕະຫຼາດລັກຊັບ (www.lsx.com.la).

ພວກເຮົາຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ ດ້ວຍ.

ດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ລາວເວີ້ນ ມະຫາຊົ້ນ LAO WORLD PUBLIC COMPANY

ທັດນະຄອນ ທຳມະວົງ

ເອກະສານຄັດຕິດ

1. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021;
2. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022;
3. ຮ່າງບົດລາຍງານການເງິນລວມຂອງບໍລິສັດປະຈຳປີ 2022;
4. ຄຳເຫັນສະພາບໍລິຫານຂອງບໍລິສັດ ກ່ຽວກັບການຖອນທະບຽນ;
5. ຄຳເຫັນທີ່ປຶກສາການເງິນອິດສະຫຼະ ກ່ຽວກັບການຖອນທະບຽນ;
6. ໜັງສືສະເໜີຊື້ຮຸ້ນ;
7. ແບບຟອມໃບມອບສິດ;
8. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ;
9. ຄຳແນະນຳກ່ຽວກັບການລົງຄະແນນສຽງ;
10. ແຜນທີ່ບ່ອນປະຊຸມ.

ໝາຍເຫດ

1. ຜູ້ຖືຮຸ້ນທັງໝົດຈະໄດ້ຮັບຈົດໝາຍເຊີນ ແລະ ເອກະສານຄັດຕິດຢູ່ທີ່ຕະຫຼາດຫລັກຊັບ ເຊິ່ງເລີ່ມຈາກວັນທີ 07 ເມສາ 2023, ຊັ້ນ 4, ພະແນກຊຳລະ ແລະ ຮັບຝາກຫລັກຊັບ, ໂທລະສັບ 856 21 454361-4, ບ້ານໂພນທັນ, ຖະໜົນ ກຳແພງເມືອງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.
2. ຖ້າຫາກວ່າບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້, ກະລຸນາລົງລາຍລະອຽດໃນແບບຟອມໃບມອບສິດຕາມເອກະສານຄັດຕິດເລກທີ 5.
3. ສຳລັບຜູ້ຖືຮຸ້ນ ແລະ ຜູ້ຮັບສິດແມ່ນກະລຸນາອ່ານໃຫ້ລະອຽດຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ ຕາມເອກະສານຄັດຕິດເລກທີ 6.
4. ຖ້າທ່ານມີຄຳຖາມຫລືຂໍ້ຂ້ອງໃຈກ່ຽວກັບເອກະສານຢູ່ໃນຈົດໝາຍເຊີນນີ້ ກະລຸນາຕິດຕໍ່ ທ່ານ ພອນມະນີ ສີສຸລາດ ລະຫວ່າງໂມງເຂົ້າການ ເບີໂທ +856 20 5532 4555.

ເອກະສານຄັດຕິດ 1: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021

ໃນວັນທີ 27/04/2022 ເວລາ 15:00 ໂມງ, ໄດ້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021 ຂອງບໍລິສັດ ລາວເວີນ ມະຫາຊົນ ທີ່ຫ້ອງປະຊຸມ B2, ອາຄານຫລັງເກົ່າ ລາວ-ໄອເຕັກ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ທັດນະຄອນ ທຳມະວົງ. ກອງປະຊຸມໄດ້ມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ **07** ທ່ານ ຖືຮຸ້ນລວມທັງໝົດ ຈຳນວນ **38.978.509** ຮຸ້ນ ເທົ່າກັບ **99** ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ **582.400** ຮຸ້ນ ເທົ່າກັບ **1** ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ (ລາຍລະອຽດເອກະສານຄັດຕິດມາພ້ອມນີ້).

ສະພາບໍລິຫານທີ່ເຂົ້າຮ່ວມປະກອບມີ:

1) ທ່ານ ທັດນະຄອນ ທຳມະວົງ ປະທານສະພາບໍລິຫານ;
2) ທ່ານ ນາງ ສີພອນຄຳ ດວງດາລາ ຮອງປະທານສະພາບໍລິຫານ;
3) ທ່ານ ສີບຸນທຳ ສີບຸນມີ ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່;
4) ທ່ານ ຣສ. ເດດຜຸວົງ ມຸລຣັຕນ໌ ສະມາຊິກສະພາບໍລິຫານ, ກຳມະການອິດສະຫຼະ;

ນອກຈາກນັ້ນ ກໍ່ຍັງມີ ຄະນະຜູ້ຕ່າງໜ້າ ແລະ ແຂກຖືກເຊີນ ຈາກອົງການ ແລະ ບໍລິສັດທີ່ກ່ຽວຂ້ອງຈຳນວນໜຶ່ງ ເຊັ່ນ:

- ຜູ້ຕ່າງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ.
- ຜູ້ຕ່າງໜ້າຈາກຕະຫລາດຫລັກຊັບລາວ.

ປະທານກອງປະຊຸມ ທ່ານ ທັດນະຄອນ ທຳມະວົງ ປະທານສະພາບໍລິຫານ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ. ຫລັງຈາກນັ້ນ ທ່ານ ຄຳເຝືອງ ດວງບຸດດີ ໄດ້ຂຶ້ນກ່າວແນະນຳ ລະບຽບໃນການລົງຄະແນນສຽງ ເຊິ່ງມີລາຍລະອຽດຄື:

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດ ແລະ ໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດລາວເວີນມະຫາຊົນ ຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງອີກ.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ບໍ່ເຫັນດີ ຕໍ່ວາລະໃດໜຶ່ງ ຫລື ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີ ຕໍ່ວາລະດັ່ງກ່າວ ຫລື ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນຕ້ອງລະບຸຢ່າງ ຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດລາວເວີນມະຫາຊົນ ທີ່ທ່ານຖືຢູ່ ແລະ ໃຫ້ ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າ ກັບໜຶ່ງຄະແນນສຽງ
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອ ມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນຂອງ ບໍລິສັດລາວເວີນມະຫາຊົນທັງໝົດໃນທີ່ປະຊຸມ ລົງຄະແນນບໍ່ເຫັນດີ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດ ໝາຍວ່າດ້ວຍວິສະຫະກິດ.

ໝາຍເຫດ

1. ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງ ຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

ຫຼັງຈາກນັ້ນກອງປະຊຸມໄດ້ດຳເນີນລາຍງານຕາມແຕ່ລະວາລະຂອງກອງປະຊຸມ ແລະ ຂໍມະຕິຈາກກອງປະຊຸມ ໂດຍແມ່ນ ປະທານກອງປະຊຸມ ທ່ານ ທັດນະຄອນ ທຳມະວົງ ເປັນຜູ້ດຳເນີນການ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ວາລະທີ 1:** ລາຍງານ ຜົນໄດ້ຮັບ ຂອງມະຕິຕົກລົງ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ຄັ້ງກ່ອນ ເພື່ອເປັນຂໍ້ມູນເພີ່ມຕື່ມ.

- ວາລະນີ້ແມ່ນບໍ່ຕ້ອງການໃຫ້ມີການລົງຄະແນນສຽງ ເພາະເປັນການລາຍງານການປະຕິບັດມະຕິໃນກອງປະຊຸມຄັ້ງກ່ອນ.

2. **ວາລະທີ 2:** ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.

- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38,978,509 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

3. **ວາລະທີ 3:** ພິຈາລະນາ ແລະ ຮັບຮອງເອົາການລາອອກ ຂອງທ່ານຜູ້ອຳນວຍການໃຫຍ່ ບໍລິສັດລາວເວີນມະຫາຊົນ ຜູ້ເກົ່າ ທ່ານ ສີບຸນທຳ ສີບຸນມີ ແລະ ພິຈາລະນາ ແລະ ຮັບຮອງເອົາ ການແຕ່ງຕັ້ງຜູ້ອຳນວຍການໃຫຍ່ ຜູ້ໃໝ່ ທ່ານ

ນາງ ສີພອນຄຳ ດວງດາລາ. ພ້ອມດຽວກັນນັ້ນ ພິຈາລະນາ ແລະ ຮັບຮອງເອົາການລາອອກຂອງ ຮອງປະທານສະພາ ບໍລິຫານ ທ່ານ ນາງ ສີພອນຄຳ ດວງດາລາ ມາເປັນ ສະມາຊິກສະພາບໍລິຫານ ບໍລິສັດ ລາວເວີນມະຫາຊົນ..

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້

- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38,978,509 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

4. **ວາລະທີ 4:** ພິຈາລະນາ ແລະ ຮັບຮອງເອົາການຂຶ້ນເງິນເດືອນໃຫ້ກັບພະນັກງານບໍລິສັດລາວເວີນມະຫາຊົນທີ່ມີຂັ້ນຕຳ ແໜ່ງຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ ເຊິ່ງອັດຕາຂຶ້ນເງິນເດືອນສະເລ່ຍແມ່ນ 6,5% ທຽບໃສ່ເງິນເດືອນພື້ນຖານປະຈຸບັນ.
   - **ການຖາມ-ຕອບ:**
     ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້
   - **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
     - ເຫັນດີຈຳນວນ 38,978,509 ສຽງ ເທົ່າກັບ 100%
     - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

5. **ວາລະທີ 5:** ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານ ການເງິນລວມປະຈຳປີ ທີ່ສິ້ນສຸດ ລົງໃນວັນທີ 31 ທັນວາ 2021, ເຊິ່ງເປັນ ບົດລາຍງານ ທີ່ໄດ້ຮັບການກວດສອບ ຈາກບໍລິສັດກວດສອບພາຍນອກ ກໍຄື ບໍລິສັດ ເອີນແອນ ຢັ້ງລາວ ຈຳກັດ.

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.
- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38,978,509 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

6. **ວາລະທີ 6:** ພິຈາລະນາ ແລະ ແຕ່ງຕັ້ງ ບໍລິສັດກວດສອບບັນຊີພາຍນອກ ເຊິ່ງແມ່ນບໍລິສັດ ເອີນແອນຢັ້ງລາວ ຈຳກັດ ແລະ ກຳນົດ ຄ່າຈ້າງຜູ້ກວດສອບພາຍນອກ ປະຈຳປີ 2022 ບໍ່ເກີນ 33.000 ໂດລາສະຫະລັດ.

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.
- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38,978,509 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

7. ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາ ຜົນການປະຕິບັດງານປະຈຳປີ 2021 ແລະ ແຜນປະຕິບັດງານປະຈຳປີ 2022 ຂອງບໍລິສັດ ລາວເວີນ ມະຫາຊົນ.

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.
- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38,978,509 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

ກອງປະຊຸມໄດ້ດຳເນີນໄປຈົນຄົບທຸກວາລະ ແລະ ບໍ່ມີຄຳເຫັນໃດທີ່ຈະພິຈາລະນາເພີ່ມເຕີມ. ປະທານກອງປະຊຸມ ທ່ານ ທັດນະຄອນ ທຳມະວົງ ໄດ້ກ່າວປິດກອງປະຊຸມລົງຢ່າງເປັນທາງການ ໃນເວລາ 16:15 ໂມງ ຂອງວັນດຽວກັນ.

ປະທານ ກອງປະຊຸມ

ທ່ານ ທັດນະຄອນ ທຳມະວົງ

ຜູ້ບັນທຶກກອງປະຊຸມ

ທ່ານ ພອນມະນີ ສີສຸລາດ

1. **ວາລະທີ 1: ລາຍງານຜົນໄດ້ຮັບຂອງມະຕິຕົກລົງ ຂອງກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງກ່ອນ ເພື່ອເປັນຂໍ້ມູນເພີ່ມຕື່ມ.**

ລາຍງານຕໍ່ຜູ້ຖືຮຸ້ນ ກ່ຽວກັບຜົນການຈັດຕັ້ງປະຕິບັດມະຕິ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເຊິ່ງມີທັງໝົດ 7 ວາລະ ແລະ ໄດ້ຈັດຕັ້ງປະຕິບັດສຳເລັດທັງໝົດຕາມທີ່ໄດ້ຮັບຮອງຈາກທີ່ປະຊຸມ.

ຄວາມເຫັນຂອງສະພາບໍລິຫານ:
ລາຍງານຜົນ ການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີທີ່ຜ່ານມານັ້ນ ແມ່ນເພື່ອແຈ້ງໃຫ້ຜູ້ຖືຮຸ້ນຮັບຮູ້ ແລະ ບໍ່ຈຳເປັນຕ້ອງໄດ້ມີການລົງຄະແນນສຽງໃດໆ.

2. **ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021**

ບໍລິສັດ ລາວເວີນມະຫາຊົນ ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໃນວັນທີ 27 ເມສາ 2022. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໄດ້ຖືກນຳສະເໜີຕໍ່ທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ ຊຶ່ງລາຍລະອຽດຢູ່ໃນເອກະສານຄັດຕິດ 1.

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ກວດກາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ຊຶ່ງໄດ້ມີການບັນທຶກໄວ້ຢ່າງຖືກຕ້ອງ ແລະ ຄົບຖ້ວນ. ດັ່ງນັ້ນ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງບົດບັນທຶກກອງປະຊຸມນີ້.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

3. **ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການເງິນລວມປະຈຳປີ 2022 ທີ່ສິ້ນສຸດລົງໃນວັນທີ 31 ທັນວາ 2022, ເຊິ່ງເປັນ ບົດລາຍງານທີ່ໄດ້ຮັບການກວດສອບຈາກ ບໍລິສັດກວດສອບພາຍນອກ ກໍ່ຄື ບໍລິສັດເອີນແອນຢັ້ງລາວ ຈຳກັດ.**

ບໍລິສັດເອີນແອນຢັ້ງລາວ ຈຳກັດ ໄດ້ດຳເນີນການກວດສອບບັນຊີ 2 ຄັ້ງ ເຊິ່ງໄດ້ທຳການກວດສອບ 6 ເດືອນຕົ້ນປີ ແລະ ໝົດປີ 2022. ສະນັ້ນ ບົດລາຍງານການເງິນລວມປະຈຳປີ 2022 ທີ່ສິ້ນສຸດວັນທີ 31 ທັນວາ ປີ 2022 ໄດ້ສຳເລັດສົມບູນເພື່ອສະເໜີໃຫ້ທີ່ປະຊຸມຜູ້ຖືຮຸ້ນຮັບຮອງເອົາ.

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ພິຈາລະນາຖີ່ຖ້ວນແລ້ວ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ ບົດລາຍງານ ການເງິນປະຈຳປີ 2022 ທີ່ສິ້ນສຸດວັນທີ 31 ທັນວາ ປີ 2022.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍ ກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

4. **ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ ກຳນົດໄວ້ໃນກົດໝາຍ ແລະ ຈ່າຍເງິນປັນຜົນ.**

ໃນປີ 2022 ລວມທັງໄລຍະ ສາມ ປີຜ່ານມາ ບໍລິສັດໄດ້ຂາດທຶນຢ່າງຕໍ່ເນື່ອງ, ເນື່ອງຈາກວິກິດຫຼາຍຢ່າງ ໂດຍສະເພາະ ການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ທຸລະກິດຂອງບໍລິສັດຖືກປິດຫຼາຍຄັ້ງ ແລະ ສົ່ງຜົນກະທົບໂດຍກົງໃຫ້ບໍລິສັດ. ດັ່ງນັ້ນ, ໃນສິກປີ 2022 ທາງບໍລິສັດໄດ້ຈ່າຍເງິນປັນຜົນ ໃຫ້ແກ່ຜູ້ຖືຮຸ້ນຂອງບໍລິສັດ ແລະ ນຳສະເໜີຕໍ່ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ.

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ພິຈາລະນາຖີ່ຖ້ວນແລ້ວ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການຈັດສັນ ກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກຳນົດໄວ້ໃນກົດໝາຍ ແລະ ຈ່າຍເງິນປັນຜົນ.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍ ກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

5. **ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາການລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ພິຈາລະນາ ແລະ ຮັບຮອງເອົາແຜນປະຕິບັດງານປະຈຳປີ 2023 ຂອງບໍລິສັດ ລາວເວີນມະຫາຊົນ.**

ຕົ້ນປີ 2022 ສະພາບການລະບາດພະຍາດໂຄວິດ19 ແມ່ນມີແນວໂນ້ມເບົາບາງລົງ ອັນເນື່ອງມາຈາກ ປະຊາຊົນລາວທົ່ວປະເທດໄດ້ຮັບການສັກຢາວັກຊີນພູ້ມຕ້ານທານໂຄວິດ19, ລັດຖະບານໄດ້ປະກາດແຈ້ງ ການໃຫ້ເປີດສູນການຄ້າ, ຮ້ານສັບພະສິນຄ້າ ແລະ ສູນບໍລິການອື່ນໆໃນຊ່ວງທ້າຍໄຕມາດ 01 ປີ 2022 ແລະ ບໍລິສັດ ກໍ່ເລີ່ມຊຸມໃສ່ລະດົມລູກຄ້າທີ່ເປັນລູກຄ້າເກົ່າ ແລະ ໃໝ່ ເພື່ອໃຫ້ເຂົ້າມາຈອງຮ້ານຄ້າ, ບຸດ ຂາຍເຄື່ອງ ທີ່ສູນການຄ້າໄອເຕັກມໍ ແລະ ສູນວາງສະແດງ ຂອງພວກເຮົາ ຫລັງຈາກນັ້ນຈຶ່ງເຮັດໃຫ້ບໍລິສັດ ເລີ່ມມີລາຍຮັບເພີ່ມຂຶ້ນຈາກປີ 2021 ເພີ່ມຂຶ້ນ 82%, ແລະ ທຽບກັບແຜນລາຍຮັບປະຈຳປີ 2022 ແມ່ນ

ສາມາດປະຕິບັດໄດ້ ປະມານ 87% ລຸດຄາດໝາຍ 13% ແລະ ບໍລິສັດກໍ່ຍັງມີໜີ້ຕ້ອງຮັບເປັນຈຳນວນ ຫລາຍ ທີ່ເປັນຜົນກະທົບຈາກການລະບາດພະຍາດໂຄວິດ19 ເພາະວ່າຮ້ານຄ້າບາງສ່ວນແມ່ນເປັນຄົນ ຕ່າງປະເທດ ທີ່ໄດ້ກັບປະເທດຫລັງຈາກມີການລະບາດຂອງພະຍາດໂຄວິດ19 ລາງລາຍກໍ່ບໍ່ສາມາດຕິດຕໍ່ ໄດ້.

ປີ 2022 ບໍລິສັດໄດ້ສືບຕໍ່ນຳໃຊ້ຈຸດເດັ່ນຂອງສະຖານທີ່ຕັ້ງຂອງທຸລະກິດ ແລະ ຄວາມໄດ້ປຽບຂອງ ສະຖານທີ່ຈອດລົດທີ່ກວ້າງຂວ້າງ ເພື່ອດຶງດູດລູກຄ້າທັ້ງຜູ້ຊື້ ແລະ ຜູ້ຂາຍມາໃຊ້ບໍລິການທີ່ສູນວາງສະແດງ ໄອເຕັກ, ຫ້ອງຈັດງານລ້ຽງ, ສູນການຄ້າ ແລະ ສວນນ້ຳ. ພິເສດໄປກວ່ານີ້ ບໍລິສັດໄດ້ສຸມໃສ່ຫັນພື້ນທີ່ຍັງ ບໍ່ໄດ້ນຳໃຊ້ ໃຫ້ເປັນພື້ນທີ່ເສດຖະກິດ ແລະ ສ້າງຄວາມດຶງດູດຜູ້ຄົນໃຫ້ເຂົ້າມາໃນໄອເຕັກເພີ່ມຂຶ້ນເລື້ອຍໆ ໂດຍການດຶງເອົາ ບໍລິສັດ ບິກຊີຊຸບ ເປີ້ເຊັນເຕີ້ ລາວຈຳກັດ (ເຊິ່ງເປັນບໍລິສັດໃນເຄືອ ຂອງບໍລິສັດ ບິກຊີ ຊຸບເປີ້ ເຊັນເຕີ້ ຈາກປະເທດໄທ) ເຂົ້າມາເຊົ່າພື້ນທີ່ ແລະ ສ້າງອາຄານ ບິກຊີຊຸບເປີ້ເຊັນເຕີ້ ໃນເນື້ອທີ່ ຫລາຍກວ່າ 19.000 ຕາແມັດ ເພື່ອໃຫ້ບໍລິການສູນການຄ້າທັນສະໄໝ.
ນອກນັ້ນ, ບໍລິສັດຍັງດຶງລູກຄ້າທີ່ເປັນ ຮ້ານອາຫານຂຶ້ນຊື່ທີ່ຄົນລາວນິຍົມ ເຊັ່ນ: ຮ້ານອາຫານ MK, ຮ້ານ ອາຫານ ຂອບໃຈ ຊາບູ (Khopchai Sabu), ຮ້ານເຄື່ອງດື່ມທີ່ຕອບໂຈດໃຫ້ແກ່ໄວລຸ້ນ ແລະ ເຄື່ອງສຳ ອາງນຳນວນໜຶ່ງ, ສູນການຄ້າຂອງພວກເຮົາຍັງເຫັນຄວາມສຳຄັນໃນເລື້ອງຄວາມປອດໄພ ແລະ ຄວາມ ສະອາດ ໂດຍໄດ້ເຂົ້າຮ່ວມໂຄງການ ລາວເຊັບ ແລະ ໂຄງການຄຣິນ ແອນ ເຄັຍ ເພື່ອໃຫ້ຜູ້ເຂົ້າມາໃນ ບໍລິເວນສູນການຄ້າຂອງພວກເຮົາມີຄວາມປອດໄພ, ສະອາດ ດ້ວຍເຫດນີ້ ສູນການຄ້າໄອເຕັກມໍ ຂອງ ພວກເຮົາຈຶ່ງໄດ້ຮັບຄວາມໄວ້ວາງໃຈ ໃຫ້ເປັນສະຖາທີ່ຮັບຮອງຈັດງານ ແຂງຂັນກິລາປິງປ່ອງຊິງແຊ້ມ ເອົາວະຊິນອາຊຽນປະຈຳປີ 2022 ເຊິ່ງມີນັກກິລາຈາກ 20 ປະເທດເຂົ້າຮ່ວມ.
ໃນສະຖານະການ ການລະບາດພະຍາດໂຄວິດ19 ເລີ່ມເບົາບາງລົງແລ້ວ ແຕ່ເນື່ອງຈາກເສດຖະກິດມີຜົນ ກະທົບຈາກສົງຄາມ ລັດເຊຍ ກັບ ຢູເຄນ ເຮັດໃຫ້ນ້ຳມັນເຊື້ອໄຟຂາດເຄນ ເຮັດໃຫ້ລາຄານ້ຳມັນໂລກສູງ ຂຶ້ນ ເຊິ່ງກະທົບຕໍ່ກັບລາຄ່າສິນຄ້າ ແລະ ການບໍລິການຢູ່ຫລາຍໆປະເທດ ແລະ ລາວກໍ່ປະເຊີນບັນຫານີ້ ເຊັ່ນກັນ, ຄ່າເງິນຊີບສູງຂຶ້ນ ແຕ່ເຖິງຢ່າງໃດກໍ່ຕາມ ບໍລິສັດຈະຍັງຄົງສືບຕໍ່ສູ້ຊົນເພື່ອໃຫ້ບັນຫລຸເປົ້າໝາຍ ຍອດຂາຍຂອງປີ 2023 ດັ່ງລຸ່ມນີ້:

ຄາດຕະເນແຜນລາຍຮັບປະຈຳປີ 2023 ແມ່ນ 76.7 ຕື້ກີບ ເພີ່ມ 46% ທຽບໃສ່ ແຜນປີ 2022 ແລະ ເພີ່ມຂຶ້ນ 68% ທຽບໃສ່ຍອດປະຕິບັດຕົວຈິງໃນປີ 2022, ບໍລິສັດເຫັນທ່າແຮງໃນການເພີ່ມຍອດຂາຍ ໃນປີ 2023 ເພາະວ່າເສດຖະກິດຂອງລາວຈະດີຂຶ້ນ ແລະ ປະຊາຊົນລາວຈະມີການຜະລິດພາຍໃນຫລາຍ ຂຶ້ນ, ມີການກະຈາຍສິນຄ້າອອກສູ່ຕະຫຼາດຫຼາຍຂຶ້ນ ແລະ ປະຊາຊົນລາວຈະນິຍົມຊື້-ຂາຍພາຍໃນປະເທດ ຫລາຍຂຶ້ນ ແລະ ຄາດຄະເນວ່າຈະມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມປະເທດລາວ ຫລາຍຂຶ້ນ ເພາະມີ ເສັ້ນທາງລົດໄຟຄວາມໄວສູງ ແລະ ເປີດເສັ້ນທາງດ່ວນ ທີ່ເຊື່ອມຕໍ່ກັບເຂດທ່ອງທ່ຽວຂອງລາວຫລາຍ ແຂວງໂດຍສະເພາະແຂວງພາກເໜືອຂອງລາວ.

ລາຍຮັບຫລັກຂອງບໍລິສັດແມ່ນມາຈາກ ຄ່າເຊົ່າຈາກສູນການຄ້າ ແລະ ທຸລະກິດງານວາງສະແດງ ເຊິ່ງ ກວມເອົາ 53% ແລະ 27% ຂອງລາຍຮັບທັງໝົດຕາມລຳດັບ.

ລາຍຈ່າຍທັງໝົດສຳລັບການປະຕິບັດງານວາງສະແດງໃນປີ 2023 ແມ່ນ 1.5 ຕື້ກີບ ເຊິ່ງເພີ່ມຂຶ້ນ 46% ທຽບໃສ່ປີ 2022 ເພື່ອສະໜັບສະໜູນການເພີ່ມຂຶ້ນຂອງລາຍຮັບ.

ສະນັ້ນ ກຳໄລກ່ອນການຫັກຄ່າດອກເບ້ຍ, ອາກອນກຳໄລ ແລະຄ່າຫລ້ຍຫ້ຽນ ຈະບັນຫລຸເຖິງ 20.7 ຕື້ ກີບ ເຊິ່ງເພີ່ມຂຶ້ນ 123% ທຽບໃສ່ປີ 2022.

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ພິຈາລະນາຖີ່ຖ້ວນແລ້ວ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ ແຜນປະຕິບັດ ງານປະຈຳປີ 2023 ຂອງບໍລິສັດຕາມການສະເໜີ.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍ ກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

6. **ວາລະທີ 6: ພິຈາລະນາ ແລະ ແຕ່ງຕັ້ງ ຜູ້ກວດສອບພາຍນອກ ແລະ ກຳນົດຄ່າຈ້າງຜູ້ກວດສອບພາຍນອກ ປະຈຳປີ 2023.**
ບໍລິສັດໄດ້ຄັດເລືອກຫາບໍລິສັດກວດສອບບັນຊີໃຫມ່ ຈາກການປະມູນ 3 ບໍລິສັດກວດສອບບັນຊີຄື: Deloitte Lao, KPMG Lao ແລະ PWC ເຊິ່ງໃນປີຜ່ານມາບໍລິສັດ EY Lao ໄດ້ຖືກຄັດເລືອກໃຫ້ ເປັນບໍລິສັດກວດສອບບັນຊີສຳລັບປີ 2021 ແລະ 2022. ເຖິງຢ່າງໃດກໍຕາມ ທາງບໍລິສັດພວກເຮົາ ກໍໄດ້ ຄຳນຶງເຖິງຄ່າໃຊ້ຈ່າຍ ຂອງບໍລິສັດ ແລະ ຫຼຸດຜ່ອນພາລະ ແລະ ພົ້ນທະຕ່າງໆ. ດັ່ງນັ້ນ ບໍລິສັດຈຶ່ງສະເໜີໃຫ້ ແຕ່ງຕັ້ງ ບໍລິສັດ PWC ເປັນຜູ້ກວດສອບບັນຊີຂອງບໍລິສັດ ສຳລັບປີ 2023

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ພິຈາລະນາຖີ່ຖ້ວນແລ້ວ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການແຕ່ງຕັ້ງຜູ້ ກວດສອບບັນຊີພາຍນອກ ແລະ ຄ່າຕອບແທນຂອງຜູ້ກວດສອບບັນຊີພາຍນອກຕາມການສະເໜີຂ້າງເທິງ.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍ ກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

7. **ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາການຂຶ້ນເງິນເດືອນໃຫ້ກັບພະນັກງານບໍລິສັດລາວເວີນມະຫາຊົນທີ່ ມີຂັ້ນຕ່ຳແຫ່ງຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ.**

ໃນປີ 2022 ເປັນອີກປີໜຶ່ງທີ່ປະຊະຊົນໃນປະເທດ ແລະ ລວມທັງພະນັກງານບໍລິສັດ ລາວເວີນ ມະຫາຊົນ ທີ່ໄດ້ປະເຊີນກັບ ອັດຕາເງິນເຟີ້ພາຍໃນປະເທດໄດ້ເພີ່ມຂຶ້ນຢ່າງຮຸນແຮງ ແລະ ຄ່າຄອງຊີບເພີ່ມຂຶ້ນຢ່າງຕໍ່ເນື່ອງ, ເພື່ອເປັນການຊ່ວຍຫລຸດຜ່ອນຜົນກະທົບຈາກຜົນກະທົບດັ່ງກ່າວ ບໍລິສັດ ລາວເວີນມະຫາຊົນ ໄດ້ຕັດສິນໃຈເພື່ອແບ່ງເບົາໃນລະດັບຫນຶ່ງໂດຍການຂຶ້ນເງິນເດືອນໃຫ້ກັບພະນັກງານຂອງຕົນທີ່ມີຂັ້ນຕໍ່າແໜ່ງ ຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ ເຊິ່ງອັດຕາຂຶ້ນເງິນເດືອນສະເລ່ຍແມ່ນ 10% ທຽບໃສ່ເງິນເດືອນພື້ນຖານປະຈຸບັນ. ການຂຶ້ນເງິນເດືອນນີ້ ຈະຖືກນຳສະເໜີຕໍ່ທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ.

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ພິຈາລະນາຖີ່ຖ້ວນແລ້ວ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການສະເໜີຂຶ້ນເງິນເດືອນຄັ້ງນີ້.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

8. ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາ ການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ("ຕລຊລ")ເປັນໄປຕາມການສະເໜີຂອງບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ("TK Supports") ໃນຖານະເປັນຜູ້ຖືຮຸ້ນລາຍໃຫຍ່ທາງກົງຂອງບໍລິສັດ ຖືຮຸ້ນໃນຈຳນວນ 36.193.609 ຮຸ້ນ ຫຼື ເທົ່າກັບ 91,49% ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ຖືຮຸ້ນໃນຈຳນວນ 1.459.000 ຮຸ້ນ ຫຼື ເທົ່າກັບ 3,69% ລວມທັງໝົດ 37.652.609 ຮຸ້ນ ເທົ່າກັບ 95,18% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ທີ່ຈົດທະບຽນໃນ ຕລຊລ. ມີຈຸດປະສົງສະເໜີຊື້ຮຸ້ນບໍລິສັດ ຈາກຜູ້ຖືຮຸ້ລາຍຍ່ອຍທັງໝົດ ເພື່ອຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແບບສະໝັກໃຈ ເພື່ອປັບປຸງການດຳເນີນທຸລະກິດຂອງບໍລິສັດ ແລະ ປະຈຸບັນອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 005/ຕລຊລ, ລົງວັນທີ 26 ພະຈິກ 2015, ພາກທີ 4 ການຖອນການຈົດທະບຽນຮຸ້ນ, ມາດຕາ 17 ເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ: ກຳນົດຈຳນວນຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍຕ່ຳກວ່າ 5% ຂອງຈຳນວນຮຸ້ນທັງໝົດ ແລະ TK Supports ບໍ່ມີນະໂຍບາຍທີ່ຈະຫຼຸດສັດສ່ວນການຖືຮຸ້ນບໍລິສັດ ຂອງຕົນ ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນ ບໍລິສັດ.

ສຳລັບເງື່ອນໄຂຂອງການຖອນຈົດທະບຽນຮຸ້ນແບບສະໝັກໃຈ ທີ່ຕ້ອງປະຕິບັດໃຫ້ສຳເລັດກ່ອນການສະເໜີຊື້ຮຸ້ນທັງໝົດ ມີດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ອະນຸມັດການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ;
2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ອະນຸມັດການສະເໜີຊື້ຮຸ້ນ.

ພາຍຫຼັງທີ່ການຂໍຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນແລ້ວ. TK Supports ໃນຖານະເປັນຜູ້ຖືຮຸ້ນລາຍໃຫຍ່ທາງກົງຂອງບໍລິສັດ ຈະດຳເນີນການສະເໜີຊື້ຮຸ້ນ ລວມຊ ໃນລາຄາ 9.100 ກີບຕໍ່ຮຸ້ນ ຊຶ່ງເປັນລາຄາທີ່ສູງສຸດທີ່ຄິດໄລ່ໄດ້ຕາມໜັງສືແຈ້ງການຂອງ ຕລຊລ (ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022) ເຊິ່ງກຳນົດໃຫ້ຄິດໄລ່ດ້ວຍ 4 ວິທີ ແລະ ລາຄາສະເໜີຊື້ຮຸ້ນ ຕ້ອງບໍ່ຕ່ຳກວ່າລາຄາສູງສຸດຂອງລາຄາທີ່ຄິດໄລ່ຕາມ 4 ວິທີ.

ຄວາມເຫັນຂອງສະພາບໍລິຫານ:
ສະພາບໍລິຫານ ໄດ້ພິຈາລະນາຖີ່ຖ້ວນແລ້ວ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການສະເໜີການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວຄັ້ງນີ້.

ຄະແນນສຽງທີ່ຕ້ອງການ:
ອີງຕາມກົດໝາຍວິສາຫະກິດ ໄດ້ກຳນົດວ່າວາລະນີ້ຕ້ອງໄດ້ຮັບການອະນຸມັດດ້ວຍຄະແນນສຽງທີ່ຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດໃນທີ່ປະຊຸມ.

ເອກະສານຄັດຕິດ 3:

ຮ່າງບົດລາຍງານການເງິນລວມຂອງບໍລິສັດ ປະຈຳປີ 2022

	ບົດອະທິບາຍ ເລກທີ	31 ທັນວາ 2022 ກີບ	31 ທັນວາ 2021 (ດັດແກ້ຄືນ) ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	4	821,905,937	3,993,063,772
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	65,004,960,104	38,585,096,648
ເຄື່ອງໃນສາງ, ສຸດທິ	6	2,796,226,664	2,749,444,618
ຊັບສິນໝຸນວຽນອື່ນໆ	7	18,440,020,443	7,015,632,533
ລວມຊັບສິນໝຸນວຽນ		**87,063,113,148**	**52,343,237,571**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ	8	132,556,938,430	140,554,520,773
ອະສັງຫາລິມະຊັບເພື່ອການລົງທຶນ	9	428,430,816,297	435,472,166,177
ຊັບສິນບັດຄົງທີ່ບໍ່ມີຕົວຕົນ		200,263,634	98,152,365
ຊັບສິນບໍ່ໝຸນວຽນອື່ນໆ	10	2,523,329,896	42,642,499,803
ລວມຊັບສິນບໍ່ໝຸນວຽນ		**563,711,348,257**	**618,767,339,118**
ລວມຊັບສິນ		**650,774,461,405**	**671,110,576,689**

	ບົດອະທິບາຍ ເລກທີ	*31 ທັນວາ 2022* ກີບ	*31 ທັນວາ 2021 (ດັດແກ້ຄືນ)* ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	11	213,127,887,998	177,816,109,829
ເງິນກູ້ຢືມໄລຍະສັ້ນ	12	35,393,742,405	32,832,427,077
ລາຍຮັບທີ່ບໍ່ທັນເກີດຂຶ້ນ - ໄລຍະສັ້ນ	13	3,935,911,889	4,498,582,442
ໜີ້ສິນໝຸນວຽນອື່ນໆ	14	41,344,809,996	34,615,892,486
ລວມໜີ້ສິນໝຸນວຽນ		**293,802,352,288**	**249,763,011,834**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	12	19,071,063,900	14,007,926,448
ລາຍຮັບທີ່ບໍ່ທັນເກີດຂຶ້ນ - ໄລຍະຍາວ	13	285,553,234,587	311,325,683,184
ລວມໜີ້ສິນບໍ່ໝຸນວຽນ		**304,624,298,487**	**325,333,609,632**
ລວມໜີ້ສິນ		**598,426,650,776**	**575,096,621,466**
ທຶນເຈົ້າຂອງ			
ທຶນຈົດທະບຽນ	15	79,121,818,000	79,121,818,000
ມູນຄ່າຮຸ້ນ	15	33,581,993,681	33,581,993,681
ຄັງສຳຮອງຈາກການຮ່ວມທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມດຽວກັນ	16	(12,996,191,989)	(12,996,191,989)
ຄັງສຳຮອງຕາມລະບຽບການ	17	13,357,587,776	13,357,587,776
(ຂາດທຶນສະສົມ)/ກຳໄລສະສົມ		(60,717,396,839)	(17,051,252,245)
ລວມທຶນເຈົ້າຂອງ		**52,347,810,629**	**96,013,955,223**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**650,774,461,405**	**671,110,576,689**

ທ່ານ ນາງ ສີພອນຄຳ ດວງດາຣາ
ຜູ້ອຳນວຍການໃຫຍ່

ທ່ານ ນາງລຳເງິນ ມາດມະນີວົງ
ຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ເມສາ 2023

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານຜົນການດຳເນີນງານລວມກິດຈະການ
ນະວັນທີ 31 ທັນວາ 2022

	ບົດອະທິບາຍ ເລກທີ	*31 ທັນວາ 2022 ກີບ*	*31 ທັນວາ 2021 ກີບ*
ລາຍຮັບຈາກການຂາຍ ແລະ ການບໍລິການ	18	45,875,021,659	24,975,500,865
ຕົ້ນທຶນໃນການຂາຍ ແລະ ການບໍລິການ	19	(25,491,277,435)	(21,450,337,989)
ກຳໄລຂັ້ນຕົ້ນ		**20,383,744,224**	**3,525,162,876**
ລາຍຈ່າຍບໍລິຫານ	20	(29,751,455,534)	(24,460,973,234)
ລາຍຮັບອື່ນໆ		7,870,327	345,488,735
ຂາດທຶນຈາກອັດຕາແລກປ່ຽນ, ສຸດທິ		(32,782,929,752)	(18,610,872,345)
ຂາດທຶນຈາກການດຳເນີນງານ		**(42,142,770,735)**	**(39,201,193,968)**
		84,894,560	-
ລາຍຈ່າຍດອກເບ້ຍ		(1,608,268,417)	(1,240,119,886)
ຂາດທຶນກ່ອນອາກອນລາຍໄດ້		**(43,666,144,591)**	**(40,441,313,854)**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນໃນປີ		**(43,666,144,591)**	**(40,441,313,854)**
ລາຍໄດ້ພື້ນຖານຕໍ່ຮຸ້ນ	*22*	*(1,105)*	*(1,022)*

ທ່ານ ນາງ ສີພອນຄຳ ດວງດາຣາ
ຜູ້ອຳນວຍການໃຫຍ່

ທ່ານ ນາງລຳເງິນ ມາດມະນີວົງ
ຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ເມສາ 2023

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ທຶນຈົດທະບຽນ ກີບ	*ມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມ ລະບຽບການ ກີບ*	*ກຳໄລສະສົມ ກີບ*	*ຄັງສຳຮອງຈາກການຮ່ວມ ທຸລະກິດທີ່ຢູ່ພາຍໃຕ້ການ ຄວບຄຸມດຽວກັນ ກີບ*	*ລວມ ກີບ*
ນະວັນທີ 1 ມັງກອນ 2021	**79,121,818,000**	**33,581,993,681**	**13,357,587,776**	**23,390,061,609**	**(12,996,191,989)**	**136,455,269,077**
ຂາດທຶນສຸດທິພາຍໃນປີ	-	-	-	(40,441,313,854)	-	(40,441,313,854)
ນະວັນທີ 31 ທັນວາ 2021	**79,121,818,000**	**33,581,993,681**	**13,357,587,776**	**(17,051,252,245)**	**(12,996,191,989)**	**96,013,955,223**
ນະວັນທີ 1 ມັງກອນ 2022	**79,121,818,000**	**33,581,993,681**	**13,357,587,776**	**(17,051,252,245)**	**(12,996,191,989)**	**96,013,955,223**
ຂາດທຶນສຸດທິພາຍໃນປີ	-	-	-	(43,666,144,591)	-	(43,666,144,591)
ນະວັນທີ 31 ທັນວາ 2022	**79,121,818,000**	**33,581,993,681**	**13,357,587,776**	**(60,717,396,836)**	**(12,996,191,989)**	**52,347,810,629**

ທ່ານ ນາງ ສີພອນຄຳ ດວງດາຣາ
ຫົວໜ້າຝ່າຍບໍລິຫານ

ທ່ານ ນາງລຳເງິນ ມາດມະນີວົງ
ຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ເມສາ 2023

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ບົດອະທິບາຍ ເລກທີ	*2022 ກີບ*	*2021 ກີບ*
ກິດຈະກຳການດຳເນີນງານ			
ຂາດທຶນພາຍໃນປີ		**(43,666,144,591)**	**(40,441,313,854)**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຫັກພາຍໃນປີ		15,690,493,506	16,033,277,607
ຄ່າເສື່ອມຫັກພາຍໃນປີ		43,259,766	56,145,636
ເງິນແຮສຳລັບໜີ້ສົງໄສ	20	2,797,101,211	2,321,261,809
ເງິນແຮສຳລັບເຄື່ອງໃນສາງ		-	785,409,976
ຂາດທຶນຈາກອັດຕາການແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		37,541,272,955	17,021,070,812
ລາຍຈ່າຍດອກເບ້ຍ		1,608,268,417	1,240,119,886
ດັດແກ້ເງິນທຶນໝຸນວຽນ:			
ສ່ວນປ່ຽນແປງເຄື່ອງໃນສາງ		(46,782,046)	2,676,465
ສ່ວນປ່ຽນແປງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(39,851,725,133)	10,904,926,442
ສ່ວນປ່ຽນແປງຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ		40,119,169,907	1,671,294,112
ສ່ວນປ່ຽນແປງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		5,571,400,416	908,486,253
ສ່ວນປ່ຽນແປງໜີ້ສິນໝຸນວຽນອື່ນໆ		(19,606,201,640)	(9,914,045,383)
ດອກເບ້ຍຈ່າຍ		(1,556,141,260)	(946,594,447)
ອາກອນກຳໄລທີ່ໄດ້ຈ່າຍ		-	-
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການດຳເນີນງານ		**(1,356,028,491)**	**(357,284,686)**
ກິດຈະກຳການລົງທຶນ			
ຊື້ທີ່ດິນ, ອາຄານ ແລະ ອຸປະກອນ		(796,932,319)	(842,476,598)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ		**(796,932,319)**	**(842,476,598)**

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ບົດອະທິບາຍ ເລກທີ	2022 ກີບ	2021 ກີບ
ກິດຈະກຳການທາງເງິນ			
ດຳເນີນການກູ້ຢືມເງິນຈາກທະນາຄານ		(1,217,311,346)	-
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**(1,217,311,346)**	-
(ຫຼຸດລົງ)/ເພີ່ມຂຶ້ນສຸດທິເງິນສົດ		**(3,370,272,156)**	**(1,199,761,284)**
ເງິນສົດໃນຕົ້ນປີ		**3,993,063,772**	**4,624,322,869**
ກຳໄລຈາກການແລກປ່ຽນໃນເງິນສົດ		199,114,321	568,502,187
ເງິນສົດໃນທ້າຍປີ	**4**	**821,905,937**	**3,993,063,772**

ທ່ານ ນາງ ສີພອນຄຳ ດວງດາຣາ
ຜູ້ອຳນວຍການໃຫຍ່

ທ່ານ ນາງລຳເງິນ ມາດມະນີວົງ
ຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ເມສາ 2023

ເອກະສານຄັດຕິດ 4:

ຄຳເຫັນສະພາບໍລິຫານຂອງບໍລິສັດ ກ່ຽວກັບການຖອນທະບຽນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນະຖາວອນ
---===000===---

LAO WORLD
PUBLIC COMPANY
ລ.ມ.ມ.ຈ, ເລ.ສ.ງ.ໄ.ລ.ກ.ຈ

ເລກທີ: 266 -/ລ.ວ.ມ.ຊ
ນະຄອນຫຼວງວຽງຈັນ, ວັນທີ: 06 APR 2023

ຮຽນ: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ລາວເວີ້ນ ມະຫາຊົນ

ເລື່ອງ: ຄຳເຫັນຂອງສະພາບໍລິຫານກ່ຽວກັບການຖອນຈົດທະບຽນຮຸ້ນຂອງ ບໍລິສັດ ລາວເວີ້ນ ມະຫາຊົນ ອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ອີງຕາມກອງປະຊຸມສະພາບໍລິຫານ ຂອງບໍລິສັດ ລາວເວີ້ນ ມະຫາຊົນ ("ລວມຊ") ຄັ້ງວັນທີ 28 ມີນາ 2023 ໄດ້ ມີມະຕິເຫັນດີ ແລະ ຮັບຮອງການຖອນຈົດທະບຽນຮຸ້ນຂອງ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກ ຊັບລາວ ("ຕລຊລ") ແລະ ນຳສະເໜີຕໍ່ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງ. ເຊິ່ງການຖອນຈົດທະບຽນຮຸ້ນເປັນໄປຕາມການສະເໜີຂອງບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ("TK Supports") ໃນ ຖານະເປັນຜູ້ຖືຮຸ້ນລາຍໃຫຍ່ທາງກົງຂອງບໍລິສັດ ຖືຮຸ້ນໃນຈຳນວນ 36.193.609 ຮຸ້ນ ຫຼື ເທົ່າກັບ 91,49% ແລະ ບຸກຄົນ ທີ່ກ່ຽວພັນກັບ TK Supports ຖືຮຸ້ນໃນຈຳນວນ 1.459.000 ຮຸ້ນ ຫຼື ເທົ່າກັບ 3,69% ລວມທັງໝົດ 37.652.609 ຮຸ້ນ ເທົ່າກັບ 95,18% ຂອງຈຳນວນຮຸ້ນທັງໝົດຂອງ ລວມຊ ຈົດທະບຽນໃນ ຕລຊລ. ມີຈຸດປະສົງສະເໜີຊື້ຮຸ້ນ ລວມຊ ຈາກ ຜູ້ຖືຮຸ້ນລາຍຍ່ອຍທັງໝົດ ເພື່ອຖອນຈົດທະບຽນຮຸ້ນ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແບບສະໝັກ ໃຈ ເພື່ອປັບປຸງການດຳເນີນທຸລະກິດຂອງ ລວມຊ ແລະ ປະຈຸບັນອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍເປັນໄປຕາມ ເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບ ເລກທີ 005/ຕລຊລ, ລົງວັນທີ 26 ພະຈິກ 2015, ພາກທີ 4 ການຖອນການຈົດທະບຽນຮຸ້ນ, ມາດຕາ 17 ເງື່ອນໄຂໃນ ການຖອນການຈົດທະບຽນຮຸ້ນ: ກຳນົດຈຳນວນຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍຕ່ຳກວ່າ 5% ຂອງຈຳນວນຮຸ້ນທັງໝົດ ແລະ TK Supports ບໍ່ ມີນະໂຍບາຍທີ່ຈະຫຼຸດສັດສ່ວນການຖືຮຸ້ນ ລວມຊ ຂອງຕົນ ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນ ລວມຊ. ໂດຍ TK Supports ສະເໜີຊື້ຮຸ້ນ ລວມຊ ໃນລາຄາ 9.100 ກີບຕໍ່ຮຸ້ນ ຊຶ່ງເປັນລາຄາທີ່ສູງ ສຸດທີ່ຄິດໄລ່ໄດ້ຕາມໜັງສືແຈ້ງການຂອງ ຕລຊລ (ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກ ທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022) ເຊິ່ງກຳນົດໃຫ້ຄິດໄລ່ດ້ວຍ 4 ວິທີ ແລະ ລາຄາສະເໜີຊື້ຮຸ້ນ ຕ້ອງບໍ່ຕ່ຳກວ່າ ລາຄາສູງສຸດຂອງລາຄາທີ່ຄິດໄລ່ຕາມ 4 ວິທີ.

ສຳລັບເງື່ອນໄຂຂອງການຖອນຈົດທະບຽນຮຸ້ນແບບສະໝັກໃຈ ທີ່ຕ້ອງປະຕິບັດໃຫ້ສຳເລັດກ່ອນການສະເໜີຊື້ຮຸ້ນ ທັງໝົດ ມີດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນຂອງ ລວມຊ ອະນຸມັດ ການຖອນຈົດທະບຽນຮຸ້ນຂອງ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ;
2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ອະນຸມັດການສະເໜີຊື້ຮຸ້ນ.

ສະພາບໍລິຫານ ໄດ້ພິຈາລະນາຂໍ້ມູນຕ່າງໆ ທີ່ກ່ຽວກັບການຂໍຖອນຈົດທະບຽນຮຸ້ນຂອງ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ລວມທັງຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ ຄືບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ (LXS) ເຊິ່ງສະພາບໍລິຫານມີຄຳເຫັນດັ່ງນີ້:

❖ **ເຫດຜົນ ແລະ ຄວາມເໝາະສົມຂອງການຖອນຈົດທະບຽນຮຸ້ນ**

ສະພາບໍລິຫານເຫັນດີເປັນເອກະພາບກັນວ່າ ການຖອນຈົດທະບຽນຮຸ້ນຂອງ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ມີຄວາມເໝາະສົມ ເນື່ອງຈາກວ່າ ລວມຊ ມີຈຳນວນຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ມີສາຍພົວພັນໃດໆກັບ TK Supports ຖືຮຸ້ນລວມກັນຈຳນວນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈຳນວນຮຸ້ນທັງໝົດຂອງ ລວມຊ ທີ່ຈົດທະບຽນໃນ ຕລຊລ ເຊິ່ງເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນສະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 005/ຕລຊລ, ລົງວັນທີ 26 ພະຈິກ 2015, ພາກທີ 4 ການຖອນການຈົດທະບຽນຮຸ້ນ, ມາດຕາ 17 ເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ: ກຳນົດຈຳນວນຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍຕ່ຳກວ່າ 5% ແລະ TK Supports ບໍ່ມີນະໂຍບາຍທີ່ຈະຫຼຸດສັດສ່ວນການຖືຮຸ້ນຂອງຕົນ ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນບໍລິສັດ.

ພ້ອມດຽວກັນນັ້ນ, ການຂໍຖອນຈົດທະບຽນຮຸ້ນຂອງ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ຍັງເປັນການເພີ່ມທາງເລືອກໃຫ້ກັບຜູ້ຖືຮຸ້ນລາຍຍ່ອຍທີ່ຈະຫຼຸດຜົນກະທົບຕໍ່ການຂາດສະພາບຄ່ອງໃນການຊື້ ຂາຍຮຸ້ນຂອງຕົນ ເນື່ອງຈາກປະລິມານການຊື້ ຂາຍສະເລ່ຍຕໍ່ວັນຂອງຮຸ້ນ ລວມຊ ຢູ່ໃນລະດັບທີ່ຕ່ຳຫຼາຍ ແລະ ອາດສົ່ງຜົນໃຫ້ຜູ້ຖືຮຸ້ນລາຍຍ່ອຍບໍ່ສາມາດຂາຍຮຸ້ນໃນລາຄາທີ່ເໝາະສົມ ໃນຊ່ວງເວລາທີ່ຕ້ອງການຂາຍໄດ້.

❖ **ຄວາມເໝາະສົມຂອງລາຄາສະເໜີຊື້ຮຸ້ນ**

ສະພາບໍລິຫານມີຄຳເຫັນສອດຄ່ອງກັບທີ່ປຶກສາດ້ານການເງິນອິດສະຫຼະທີ່ສະແດງຄຳຄິດເຫັນວ່າ ລາຄາສະເໜີຊື້ຮຸ້ນ 9.100 ກີບຕໍ່ຮຸ້ນ ເປັນລາຄາທີ່ເໝາະສົມ ແລະ ມີຄວາມຍຸຕິທຳ ເປັນລາຄາທີ່ສູງສຸດທີ່ຄິດໄລ່ໄດ້ຕາມໜັງສືແຈ້ງການຂອງ ຕລຊລ (ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022).

ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີເປັນເອກະພາບກັນ ສະເໜີຕໍ່ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງ.

ເຖິງແນວໃດກໍ່ຕາມ, ຄຳເຫັນສະພາບໍລິຫານ ເປັນພຽງສ່ວນໜຶ່ງທີ່ໃຊ້ປະກອບການພິຈາລະນາຂອງຜູ້ຖືຮຸ້ນເທົ່ານັ້ນ ການຕັດສິນໃຈຈະອະນຸມັດ ຫຼື ບໍ່ອະນຸມັດຂຶ້ນກັບການພິຈາລະນາຂອງຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນຄວນພິຈາລະນາລາຍງານຄຳ

ເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ ເພື່ອປະກອບການພິຈາລະນາອະນຸມັດການຖອນຈົດທະບຽນຮຸ້ນຂອງ ລວມຊ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໃນຄັ້ງນີ້.

ດ້ວຍຄວາມເຄົາລົບນັບຖື

ປະທານສະພາບໍລິຫານ

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ
ລາວເວີ ມະຫາຊົນ
LAO WORLD PUBLIC
COMPANY
ຫວວ

ຮອງປະທານສະພາບໍລິຫານ

ນ. ສີພອນຄຳ ດວງດາລາ

ກຳມະການ

ສ ຫວ ງ ແສງ ດ ວ ງ ດ ີ

ກຳມະການ

ນ ສ. ( ) ( )

ກຳມະການ

ທ. ( ) ( )

ເອກະສານຄັດຕິດ 5:

ຄຳເຫັນທີ່ປຶກສາກ່ຽວກັບການຖອນທະບຽນ

ບົດລາຍງານຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ

ກ່ຽວກັບການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ

LAO WORLD
PUBLIC COMPANY
ລ້ວນມີຄ່ຳ, ເຮົາສ້າງໄວ້ດ້ວຍກັນ

ບໍລິສັດ ລາວເວີ້ນ ມະຫາຊົນ (LWPC)

ສະເໜີຕໍ່

ຜູ້ຖືຮຸ້ນຂອງ ບໍລິສັດ ລາວເວີ້ນ ມະຫາຊົນ

ຈັດກຽມໂດຍ:

LANEXANG
Securities Public Company

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ

ສາລະບານ

I. ຄວາມເປັນມາ ແລະ ລາຍລະອຽດຂອງການຂໍຖອນຈົດທະບຽນຮຸ້ນ 1

1. ລັກສະນະ ແລະ ລາຍລະອຽດຂອງການຂໍຖອນຈົດທະບຽນຮຸ້ນ..... 1

2. ສະຫຼຸບຂໍ້ມູນຂອງ ບໍລິສັດ ລາວເວີນ ມະຫາຊົນ 2

2.1. ປະຫວັດຄວາມເປັນມາຂອງ ບໍລິສັດ 2

2.2. ພາບລວມຂອງການປະກອບທຸລະກິດ 3

2.3. ສະຫຼຸບຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດ..... 6

II. ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ ກ່ຽວກັບຄວາມເໝາະສົມຂອງການຂໍຖອນຈົດທະບຽນຮຸ້ນ..... 13

2.1. ເຫດຜົນໃນການຖອນຈົດທະບຽນຮຸ້ນ..... 14

2.2. ເງື່ອນໄຂຂອງການຖອນຈົດທະບຽນຮຸ້ນແບບສະໝັກໃຈ..... 14

2.3. ຜົນກະທົບຕໍ່ກັບບໍລິສັດ ພາຍຫຼັງການຖອນຈົດທະບຽນຮຸ້ນ..... 15

2.4. ຜົນກະທົບຕໍ່ຜູ້ຖືຮຸ້ນລາຍຍ່ອຍ ພາຍຫຼັງການຖອນຈົດທະບຽນຮຸ້ນ 16

III. ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະຕໍ່ລາຄາສະເໜີຊື້ຮຸ້ນ..... 16

3.1. ສົມມຸດຕິຖານທີ່ສຳຄັນໃນການເຮັດຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ 16

3.2. ຄວາມເໝາະສົມຂອງລາຄາສະເໜີຊື້ຮຸ້ນຂອງບໍລິສັດ..... 17

3.3. ສະຫຼຸບການປະເມີນມູນຄ່າຍຸດຕິທຳຂອງຮຸ້ນ 26

IV. ສະຫຼຸບຄຳເຫັນຂອງທີ່ປຶກສາທາງການເງິນ..... 27

ຄຳສັບ	ຄວາມໝາຍ
ບໍລິສັດ ຫຼື LWPC	ບໍລິສັດ ລາວເວີ້ນ ມະຫາຊົນ ຫຼື Lao World Public Company
ຜູ້ສະໜັບຊ່ວຍ ຫຼື TK Supports	ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ຫຼື TK SUPPORTS SOLE CO., LTD
ທີ່ປຶກສາດ້ານການເງິນອິດສະຫຼະ	ບໍລິສັດ ຫຼັກຊັບລ້ານຊ້າງ ມະຫະຊົນ ຫຼື Lanexang Securities Public Company (LXS)
ຕລຊ	ຕະຫຼາດຫຼັກຊັບລາວ
ສຄຄຊ	ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ
ຜູ້ຖືຮຸ້ນລາຍໃຫຍ່ສຸດ	ຜູ້ຖືທີ່ມີສິດອອກສຽງຂອງບໍລິສັດຈົດທະບຽນຮຸ້ນໃນຈຳນວນຫຼາຍສຸດ. ກໍລະນີນີ້, ຮຸ້ນທີ່ຖືໂດຍບຸກຄົນທີ່ມີສາຍພົວພັນສະເພາະກໍຖືວ່າລວມເປັນຜູ້ຖືຮຸ້ນລາຍໃຫຍ່ສຸດ
ສາຍພົວພັນສະເພາະ	ບຸກຄົນ ຫຼື ນິຕິບຸກຄົນທີ່ມີສາຍພົວພັນທາງກົງກັບຜູ້ຖືຮຸ້ນຫຼາຍສຸດທາງສາຍເລືອດ ຂອງບໍລິສັດຈົດທະບຽນໃດໜຶ່ງເຊັ່ນ: ພໍ່ແມ່, ລູກ ຫຼື ຄູ່ສົມລົດ, ບຸກຄົນ ຫຼື ນິຕິບຸກຄົນທີ່ມີສາຍພົວພັນທາງກົງກັບຜູ້ທີ່ມີຕຳແໜ່ງບໍລິຫານໃນບໍລິສັດຈົດທະບຽນ ຫຼື ສາຂາຂອງບໍລິສັດໃດໜຶ່ງ
ບຸກຄົນທີ່ກ່ຽວພັນ	ຖືຮຸ້ນຂອງບໍລິສັດອອກຈຳໜ່າຍຮຸ້ນ ແລະ/ຫຼື ບໍລິສັດຈົດທະບຽນໃນອັດຕາສ່ວນຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຜູ້ບໍລິຫານຂອງບໍລິສັດອອກຈຳໜ່າຍຮຸ້ນ ແລະ/ຫຼື ບໍລິສັດຈົດທະບຽນ
ຜູ້ຖືຮຸ້ນລາຍຍ່ອຍ	ຜູ້ຖືຮຸ້ນໃດໜຶ່ງທີ່ເປັນເຈົ້າຂອງຮຸ້ນໃນຈຳນວນຕ່ຳກ່ວາ 1% ຂອງຈຳນວນຮຸ້ນທີ່ອອກຈຳໜ່າຍທັງໝົດ ໂດຍບໍ່ລວມເອົາຜູ້ຖືຮຸ້ນລາຍຍ່ອຍທີ່ມີສາຍພົວພັນສະເພາະ

ຮຽນ: ຜູ້ຖືຮຸ້ນ ບໍລິສັດ ລາວເວີນ ມະຫາຊົນ

ເລື່ອງ: ຄຳເຫັນຂອງທີ່ປຶກສາດ້ານການເງິນກ່ຽວກັບການຖອນຈົດທະບຽນຮຸ້ນຂອງການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ຂອງບໍລິສັດ ລາວເວີນ ມະຫາຊົນ.

ບໍລິສັດ ລາວເວີນ ມະຫາຊົນ ("ບໍລິສັດ" ຫຼື "LWPC") ມີຮຸ້ນທັງໝົດຈຳນວນ 39.560.909 ຮຸ້ນ ທີ່ຈົດທະບຽນໃນ ຕລຊລ. ບໍລິສັດ ທີເຄ ຊັບພອດ ຈຳກັດຜູ້ດຽວ ("TK Supports") ໃນຖານະເປັນຜູ້ຖືຮຸ້ນລາຍໃຫຍ່ທາງກົງຂອງບໍລິສັດ ຖືຮຸ້ນໃນຈຳນວນ 36.193.609 ຮຸ້ນ ຫຼື ເທົ່າກັບ 91,49% ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ຖືຮຸ້ນໃນຈຳນວນ 1.459.000 ຮຸ້ນ ຫຼື ເທົ່າກັບ 3,69% ລວມທັງໝົດ 37.652.609 ຮຸ້ນ ເທົ່າກັບ 95,18% ຂອງຈຳນວນຮຸ້ນທັງໝົດ ໄດ້ເຮັດໜັງສືຫາບໍລິສັດ ລາວເວີນ ມະຫາຊົນ ເພື່ອສະເໜີໃຫ້ບໍລິສັດ ຖອນຈົດທະບຽນຮຸ້ນອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ("ຕລຊລ") ໂດຍ TK Supports ຈະເປັນຜູ້ຍື່ນສະເໜີຂໍຊື້ຮຸ້ນທັງໝົດຈາກຜູ້ຖືຮຸ້ນລາຍຍ່ອຍໃນສ່ວນທີ່ ບໍ່ໄດ້ຖືໂດຍ TK Supports ເນື່ອງຈາກປະຈຸບັນອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍ ເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 005/ຕລຊລ , ລົງວັນທີ 26 ພະຈິກ 2015, ມາດຕາ 4 ການຖອນການຈົດທະບຽນຮຸ້ນ, ມາດຕາ 17 ເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ: ກຳນົດຈຳນວນຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍຕ່ຳກວ່າ 5% ຂອງຈຳນວນຮຸ້ນທັງໝົດ. ໂດຍອີງຕາມລາຍຊື່ຜູ້ຖືຮຸ້ນຂອງບໍລິສັດ ທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ມີສາຍພົວພັນໃດໆກັບ TK Supports ຖືຮຸ້ນລວມກັນຈຳນວນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈຳນວນຮຸ້ນທັງໝົດ ຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ. ເຊິ່ງໜ້ອຍກວ່າ 5% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ແລະ TK Supports ບໍ່ມີນະໂຍບາຍທີ່ຈະຫຼຸດສັດສ່ວນການຖືຮຸ້ນຂອງຕົນ ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນບໍລິສັດ ຈຶ່ງເຮັດໃຫ້ການແຈກຢາຍຮຸ້ນເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນ ຕລຊລ ທີ່ກຳນົດໄວ້.

ຫຼັງຈາກທີ່ TK Supports ຊື້ຮຸ້ນບໍລິສັດໃນເດືອນ ພຶດສະພາ ປີ 2017, ຜົນການດຳເນີນງານຂອງບໍລິສັດ ຕັ້ງແຕ່ປີ 2017 ເປັນຕົ້ນມາ. ເກີດຂາດທຶນຕິດຕໍ່ກັນຍ້ອນຫຼາຍປັດໄຈເປັນຕົ້ນແມ່ນ: ມີຄູ່ແຂ່ງເກີດຂຶ້ນຫຼາຍໜ່ວຍ ເຮັດໃຫ້ຜູ້ຊົມໃຊ້ມີຫຼາຍທາງເລືອກ, ໄດ້ເກີດມີການລະບາດຂອງພະຍາດໂຄໂລນາໄວຣັດ 2019 (COVID -19) ຂຶ້ນໃນທ້າຍປີ 2019 ແລະ ແກ່ຍາວຕໍ່ເນື່ອງເຖິງ ກາງປີ 2022 ເຮັດໃຫ້ການດຳເນີນທຸລະກິດມີຜົນກະທົບຫຼາຍດ້ານ, ບໍລິສັດໄດ້ຂາດທຶນຕິດຕໍ່ກັນເປັນເວລາ 6 ປີແລ້ວ (2017- 9/2022) ເຮັດໃຫ້ບໍລິສັດມີຂາດທຶນສະສົມ, ການຖືຄອງຮຸ້ນຂອງ TK Supports ຢູ່ໃນອັດຕາສ່ວນທີ່ສູງເຮັດໃຫ້ຮຸ້ນຂອງ ບໍລິສັດ ບໍ່ມີສະພາບຄ່ອງໃນການຊື້ ຂາຍ ໃນ ຕລຊລ. ການຂາດທຶນສະສົມຫຼາຍປີຕິດຕໍ່ກັນ ເຮັດໃຫ້ບໍລິສັດບໍ່ສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້ໃນໄລຍະຫຼາຍປີຕໍ່ໜ້າ ເນື່ອງຈາກວ່າການຂາດທຶນສະສົມຫຼາຍ ຈະສົ່ງຜົນໃນເວລາທີ່ບໍລິສັດມີກຳໄລໃນປີ ເພາະວ່າບໍລິສັດຈະຕ້ອງໄດ້ນຳກຳໄລດັ່ງກ່າວໄປສະສາງຂາດທຶນສະສົມນັ້ນຈົນໝົດກ່ອນຈຶ່ງຈະສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້. ຖ້າໃນອານາຄົດ ບໍລິສັດມີຄວາມຈຳເປັນຕ້ອງການລະດົມທຶນເພີ່ມ ບໍລິສັດອາດບໍ່ສາມາດລະດົມທຶນຜ່ານຕະຫຼາດຫຼັກຊັບລາວໄດ້ ເນື່ອງຈາກວ່າບໍລິສັດມີການຂາດທຶນສະສົມເປັນຈຳນວນຫຼາຍ ເຊິ່ງເຮັດໃຫ້ນັກລົງທຶນບໍ່ມີຄວາມເຊື່ອໝັ້ນຕໍ່ການດຳເນີນທຸລະກິດຂອງບໍລິສັດ ແຕ່ບໍລິສັດສາມາດຫາແຫຼ່ງທຶນຈາກຜູ້ຖືຮຸ້ນລາຍໃຫຍ່ໄດ້ຄື TK Supports; ການຖອນຈົດທະບຽນຮຸ້ນຂອງບໍລິສັດຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ຈະເພີ່ມຄວາມຄ່ອງຕົວໃນການບໍລິຫານຈັດການການດຳເນີນທຸລະກິດ, ຫຼຸດຜ່ອນໜ້າທີ່ ແລະ ຄ່າໃຊ້ຈ່າຍຂອງບໍລິສັດໃນອະນາຄົດ. ດັ່ງນັ້ນ, ບໍລິສັດຈຶ່ງມີຈຸດປະສົງຖອນຮຸ້ນອອກຈາກການເປັນບໍລິສັດຈົດທະບຽນໃນ ຕລຊລ.

ດັ່ງນັ້ນ, ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 28 ມີນາ 2023 ສະບັບເລກທີ 239/23/ລວມຊ, ລົງວັນທີ 28 ມີນາ 2023.ຈຶ່ງມີມະຕິອະນຸມັດໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ ການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໂດຍບໍລິສັດຈະດຳເນີນການຕາມໜັງສືແຈ້ງການຂອງ ຕລຊລ ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022. ໃນການຂໍຖອນການຈົດທະບຽນຮຸ້ນດັ່ງກ່າວ ຈະຕ້ອງໄດ້ຮັບມະຕິຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໂດຍມີຄະແນນສຽງເຫັນດີ ຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທັງໝົດ ເຂົ້າຮ່ວມກອງປະຊຸມ ໂດຍບໍ່ນັບເອົາຮຸ້ນຂອງຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ. ພ້ອມນັ້ນ, ຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນ ທີ່ກ່ຽວພັນ ແມ່ນບໍ່ມີສິດລົງຄະແນນສຽງຕໍ່ວາລະດັ່ງກ່າວ. ໃນນັ້ນ, ຄະແນນສຽງບໍ່ເຫັນດີຕໍ່ວາລະດັ່ງກ່າວ ຕ້ອງບໍ່ເກີນ 5% ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ. ໂດຍ TK Supports ຈະເປັນຜູ້ດຳເນີນການສະເໜີຊື້ຮຸ້ນ ໃນລາຄາສະ ເໜີຊື້ 9.100 ກີບຕໍ່ຮຸ້ນ, ບໍລິສັດ ກຳນົດໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 27 ເມສາ 2023. ພ້ອມ ກັນນີ້, ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 20 ມີນາ 2023 ສະບັບເລກທີ 219/23/ລວມຊ, ລົງວັນທີ 20 ມີນາ 2023. ໄດ້ມີມະຕິອະນຸມັດແຕ່ງຕັ້ງ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ (LXS) ເປັນທີ່ປຶກສາດ້ານການເງິນອິດສະຫຼະ ("ທີ່ປຶກສາ ດ້ານການເງິນອິດສະຫຼະ") ໃນການໃຫ້ຄຳເຫັນຕໍ່ຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ກ່ຽວຂ້ອງກັບຜູ້ສະເໜີຊື້ຮຸ້ນ ເພື່ອໃຫ້ຜູ້ຖືຮຸ້ນລາຍຍ່ອຍ ໃຊ້ໃນການປະກອບການພິຈາລະນາ ກ່ຽວກັບການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໃນຄັ້ງນີ້.

ສະຫຼຸບຄຳເຫັນທີ່ປຶກສາດ້ານການເງິນອິດສະຫຼະ

ດັ່ງທີ່ໄດ້ກ່າວມາ, ທີ່ປຶກສາດ້ານການເງິນອິດສະຫຼະ ມີຄຳເຫັນວ່າຜູ້ຖືຮຸ້ນຄວນພິຈາລະນາລົງຄະແນນສຽງ ອະນຸມັດ ການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ລວມເຖິງການຕອບຮັບຕໍ່ການສະເໜີ ຊື້ຮຸ້ນ ໃນລາຄາ 9.100 ກີບຕໍ່ຮຸ້ນ ເຊິ່ງເປັນລາຄາສູງສຸດຈາກການຄິດໄລ່ດ້ວຍຫຼາຍວິທີຕາມທີ່ ຕລຊລ ກຳນົດ ແລະ ມີ ເຫດຜົນທີ່ສາມາດສະຫຼຸບໄດ້ດັ່ງລຸ່ມນີ້:

1. ຜູ້ຖືຮຸ້ນຂອງບໍລິສັດ ທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີຜູ້ຖືຮຸ້ນລາຍຍ່ອຍ ຖືຮຸ້ນລວມກັນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ເຊິ່ງໜ້ອຍກວ່າ 5% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ແລະ TK Supports ບໍ່ມີນະໂຍບາຍທີ່ຈະຫຼຸດສັດສ່ວນການຖືຮຸ້ນຂອງ TK Supports ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖື ຮຸ້ນບໍລິສັດ ຈຶ່ງເຮັດໃຫ້ການແຈກຢາຍຮຸ້ນເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ;
2. ລາຄາສະເໜີຊື້ຮຸ້ນ 9.100 ກີບຕໍ່ຮຸ້ນ ເປັນລາຄາທີ່ມີຄວາມຍຸດຕິທຳຕາມທີ່ທີ່ປຶກສາດ້ານການເງິນອິດສະຫຼະໄດ້ປະ ເມີນໂດຍໃຊ້ວິທີຄິດໄລ່ລາຄາສູງສຸດພາຍໃນ 90 ວັນຊື້ ຂາຍ (ລາຍລະອຽດເພີ່ມເຕີມໃນສ່ວນທີ 3 ຄຳເຫັນຂອງທີ່ ປຶກສາດ້ານການເງິນອິດສະຫຼະຕໍ່ລາຄາສະເໜີຊື້ຮຸ້ນ) ເຊິ່ງລາຄາດັ່ງກ່າວ ເປັນລາຄາທີ່ສູງສຸດທີ່ຄິດໄລ່ໄດ້ຕາມໜັງສື ແຈ້ງການຂອງ ຕລຊລ ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງ ວັນທີ 03 ພະຈິກ 2022. ເຊິ່ງກຳນົດໃຫ້ຄິດໄລ່ດ້ວຍ 4 ວິທີ ແລະ ລາຄາສະເໜີຊື້ຮຸ້ນ ຕ້ອງບໍ່ຕ່ຳກວ່າລາຄາສູງສຸດ ຂອງລາຄາທີ່ຄິດໄລ່ຕາມ 4 ວິທີ.
3. ຫຼັງຈາກຖອນຈົດທະບຽນຮຸ້ນແລ້ວ ຜູ້ຖືຮຸ້ນຂອງບໍລິສັດຈະບໍ່ມີຕະຫຼາດຂັ້ນສອງ (Secondary Market) ໃນການຊື້ ຂາຍຮຸ້ນຂອງບໍລິສັດ ຜ່ານຊ່ອງທາງຂອງ ຕລຊລ ອີກຕໍ່ໄປ ເຮັດໃຫ້ຮຸ້ນຂອງບໍລິສັດບໍ່ມີລາຄາຕະຫຼາດອ້າງອີງໃນການ ຊື້ ຂາຍ ຈຶ່ງເຮັດໃຫ້ຜູ້ຖືຮຸ້ນຂາດສະພາບຄ່ອງໃນການຊື້ ຂາຍ ແລະ ໂອກາດທີ່ຜູ້ຖືຮຸ້ນຈະໄດ້ຮັບຜົນຕອບແທນທີ່ເກີດ ຈາກສ່ວນຕ່າງຂອງລາຄາຊື້ ຂາຍຮຸ້ນ (Capital Gain) ຫຼຸດລົງ ໂດຍຜົນຕອບແທນສ່ວນໃຫຍ່ທີ່ຜູ້ຖືຮຸ້ນຈະໄດ້ຮັບຢູ່ ໃນຮູບແບບເງິນປັນຜົນຈາກການດຳເນີນງານຂອງບໍລິສັດ ເຊິ່ງເງິນປັນຜົນທີ່ຜູ້ຖືຮຸ້ນຈະໄດ້ຮັບໃນແຕ່ລະປີອາດ ປ່ຽນແປງໄປຂຶ້ນກັບກິດຈະບຽບ ແລະ ຜູ້ບໍລິຫານຂອງບໍລິສັດທີ່ຈະກຳນົດໃນແຕ່ລະໄລຍະ. ນອກຈາກນີ້, ຜູ້ຖືຮຸ້ນຈະ ບໍ່ໄດ້ຮັບການຍົກເວັ້ນອາກອນລາຍໄດ້ 10% ສຳລັບເງິນປັນຜົນ ແລະ 2% ສຳລັບການຂາຍ ຫຼື ໂອນຮຸ້ນ ອີກຕໍ່ໄປ.
4. ບໍລິສັດ ຍັງເປັນບໍລິສັດມະຫາຊົນ ແກ່ຜູ້ຖືຮຸ້ນຈະໄດ້ຮັບຂ່າວສານ ຫຼື ຂໍ້ມູນຂອງບໍລິສັດ ໜ້ອຍລົງ ພາຍຫຼັງທີ່ຮຸ້ນຂອງ ບໍລິສັດບໍ່ໄດ້ຈົດທະບຽນໃນ ຕລຊລ ແລ້ວ ເນື່ອງຈາກພາລະໜ້າທີ່ໃນການລາຍງານ ແລະ ເປີດເຜີຍຂໍ້ມູນ ໃນຖານະ ບໍລິສັດຈົດທະບຽນຕາມທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 29/ ຄຄຊ, ລົງວັນທີ 29 ມີນາ 2022. ສຳລັບບໍລິສັດຈົດທະບຽນໄດ້ສິ້ນສຸດລົງ ຫຼັງຈາກໄດ້ຮັບອະນຸຍາດໃຫ້ຖອນຮຸ້ນຈົດ ທະບຽນອອກຈາກ ຕລຊລ.

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ໃນຖານະທີ່ປຶກສາດ້ານການເງິນອິດສະຫຼະໄດ້ສະແດງຄຳເຫັນຢ່າງກົງໄປກົງມາ ແບບອິດສະຫຼະໂດຍໃຊ້ຄວາມຮູ້, ຄວາມສາມາດ, ຄວາມລະມັດລະວັງ ແລະ ຮອບຂອບບົນພື້ນຖານຜູ້ປະກອບອາຊີບ, ຂໍ້ມູນ ແລະ ຂໍ້ສົມມຸດຕິຖານທີ່ໃຊ້ແມ່ນໄດ້ຮັບຈາກຜູ້ບໍລິຫານຂອງບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ໄດ້ສະເໜີຂ້າງເທິງ ນັ້ນ, ມີຄວາມສົມບູນ, ຄົບຖ້ວນ ພາຍໃຕ້ສະຖານະການ ຂອງຂໍ້ມູນທີ່ສາມາດຮັບຮູ້ໃນປັດຈຸບັນ.

ຜູ້ຖືຮຸ້ນຄວນສຶກສາຂໍ້ມູນທັງໝົດທີ່ຢູ່ໃນລາຍງານຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ ແລະ ເອກະສານທີ່ ກ່ຽວຂ້ອງກ່ອນຕັດສິນໃຈວ່າຈະພິຈາລະນາ ອະນຸມັດ ຫຼື ບໍ່ອະນຸມັດໃຫ້ບໍລິສັດດຳເນີນການຖອນຈົດທະບຽນຮຸ້ນດັ່ງກ່າວ ເພາະ ຜູ້ຖືຮຸ້ນມີສິດອອກສຽງໃນການດຳເນີນການຖອນຈົດທະບຽນໃນຄັ້ງນີ້.

1. ຄວາມເປັນມາ ແລະ ລາຍລະອຽດຂອງການສະເໜີຂໍຖອນຈົດທະບຽນຮຸ້ນ

1. ລັກສະນະ ແລະ ລາຍລະອຽດຂອງການສະເໜີຂໍຖອນຈົດທະບຽນຮຸ້ນ

ບໍລິສັດ ລາວເວີນ ມະຫາຊົນ ("ບໍລິສັດ" ຫຼື "LWPC") ມີຮຸ້ນທັງໝົດຈຳນວນ 39.560.909 ຮຸ້ນ ທີ່ຈົດທະບຽນໃນ ຕລຊລ. ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ("TK Supports") ໃນຖານະເປັນຜູ້ຖືຮຸ້ນລາຍໃຫຍ່ທາງກົງຂອງບໍລິສັດ ຖືຮຸ້ນໃນຈຳນວນ 36.193.609 ຮຸ້ນ ຫຼື ເທົ່າກັບ 91,49% ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ຖືຮຸ້ນໃນຈຳນວນ 1.459.000 ຮຸ້ນ ຫຼື ເທົ່າກັບ 3,69%. ລວມທັງໝົດ 37.652.609 ຮຸ້ນ ເທົ່າກັບ 95,18% ຂອງຈຳນວນຮຸ້ນທັງໝົດ ໄດ້ເຮັດໜັງສືຫາບໍລິສັດ ລາວເວີນ ມະຫາຊົນ ເພື່ອສະເໜີໃຫ້ບໍລິສັດ ຖອນຈົດທະບຽນຮຸ້ນອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ("ຕລຊລ") ໂດຍ TK Supports ຈະເປັນຜູ້ຍື່ນສະເໜີຂໍຊື້ຮຸ້ນທັງໝົດຈາກຜູ້ຖືຮຸ້ນຍ່ອຍໃນສ່ວນທີ່ບໍ່ໄດ້ຖືໂດຍ TK Supports. ເນື່ອງຈາກປັດຈຸບັນອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 005/ຕລຊລ , ລົງວັນທີ 26 ພະຈິກ 2015, ພາກທີ 4 ການຖອນການຈົດທະບຽນຮຸ້ນ, ມາດຕາ 17 ເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ: ກຳນົດຈຳນວນຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍຕ່ຳກວ່າ 5% ຂອງຈຳນວນຮຸ້ນທັງໝົດ. ໂດຍອີງຕາມລາຍຊື່ຜູ້ຖືຮຸ້ນຂອງບໍລິສັດ ທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ມີສາຍພົວພັນໃດໆກັບ TK Supports ຖືຮຸ້ນລວມກັນຈຳນວນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ເຊິ່ງໜ້ອຍກວ່າ 5% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ແລະ TK Supports ບໍ່ມີນະໂຍບາຍທີ່ຈະຫຼຸດສັດສ່ວນການຖືຮຸ້ນຂອງຕົນ ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນບໍລິສັດ ຈຶ່ງເຮັດໃຫ້ການແຈກຢາຍຮຸ້ນເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ.

ຫຼັງຈາກທີ່ TK Supports ຊື້ຮຸ້ນບໍລິສັດໃນເດືອນ ພຶດສະພາ ປີ 2017, ຜົນການດຳເນີນງານຂອງບໍລິສັດ ຕັ້ງແຕ່ປີ 2017 ເປັນຕົ້ນມາ. ເກີດຂາດທຶນຕິດຕໍ່ກັນຍ້ອນຫຼາຍປັດໄຈເປັນຕົ້ນແມ່ນ: ມີຄູ່ແຂ່ງເກີດຂຶ້ນຫຼາຍແຫ່ງ ເຮັດໃຫ້ຜູ້ຊົມໃຊ້ມີຫຼາຍທາງເລືອກ, ໄດ້ເກີດມີການລະບາດພະຍາດໂຄໂລນາໄວຣັດ 2019 (COVID -19) ຂຶ້ນໃນທ້າຍປີ 2019 ແລະ ແກ່ຍາວຕໍ່ເນື່ອງເຖິງ ກາງປີ 2022 ເຮັດໃຫ້ການດຳເນີນທຸລະກິດພົບບັນຫາຫຍຸ້ງຍາກຫຼາຍດ້ານ, ບໍລິສັດໄດ້ຂາດທຶນຕິດຕໍ່ກັນເປັນເວລາ 6 ປີແລ້ວ (2017- 9/2022) ເຮັດໃຫ້ບໍລິສັດມີຂາດທຶນສະສົມ, ການຖືຄອງຮຸ້ນຂອງ TK Supports ຢູ່ໃນອັດຕາສ່ວນທີ່ສູງເຮັດໃຫ້ຮຸ້ນຂອງ ບໍລິສັດ ບໍ່ມີສະພາບຄ່ອງໃນການຊື້-ຂາຍ ໃນຕະຫຼາດຫຼັກຊັບລາວ, ການຂາດທຶນສະສົມຫຼາຍປີຕິດຕໍ່ກັນ ເຮັດໃຫ້ບໍລິສັດບໍ່ສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້ໃນໄລຍະຫຼາຍປີຕໍ່ໜ້າ ເນື່ອງຈາກວ່າການຂາດທຶນສະສົມຫຼາຍ ຈະສົ່ງຜົນໃນເວລາທີ່ບໍລິສັດມີກຳໄລໃນປີ ເພາະວ່າບໍລິສັດຈະຕ້ອງໄດ້ນຳກຳໄລດັ່ງກ່າວໄປສະສາງຂາດທຶນສະສົມນັ້ນຈົນໝົດກ່ອນ ຈຶ່ງຈະສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້. ຖ້າໃນອານາຄົດ ບໍລິສັດມີຄວາມຈຳເປັນຕ້ອງການລະດົມທຶນເພີ່ມ ບໍລິສັດອາດບໍ່ສາມາດລະດົມທຶນຜ່ານຕະຫຼາດຫຼັກຊັບລາວໄດ້ ເນື່ອງຈາກວ່າບໍລິສັດມີການຂາດທຶນສະສົມເປັນຈຳນວນຫຼາຍ ເຊິ່ງເຮັດໃຫ້ນັກລົງທຶນບໍ່ມີຄວາມເຊື່ອໝັ້ນຕໍ່ການດຳເນີນທຸລະກິດຂອງບໍລິສັດ ແຕ່ບໍລິສັດສາມາດຫາແຫຼ່ງທຶນຈາກຜູ້ຖືຮຸ້ນລາຍໃຫຍ່ໄດ້ຄື TK Supports; ການຖອນຈົດທະບຽນຮຸ້ນຂອງບໍລິສັດຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ຈະເພີ່ມຄວາມຄ່ອງຕົວໃນການບໍລິຫານຈັດການການດຳເນີນທຸລະກິດ, ຫຼຸດພາລະໜ້າທີ່ ແລະ ຄ່າໃຊ້ຈ່າຍຂອງບໍລິສັດໃນອະນາຄົດ. ດັ່ງນັ້ນ, ບໍລິສັດຈຶ່ງມີຈຸດປະສົງຖອນຮຸ້ນອອກຈາກການເປັນບໍລິສັດຈົດທະບຽນໃນ ຕລຊລ.

ດັ່ງນັ້ນ, ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 28 ມີນາ 2023 ສະບັບເລກທີ 239/23/ລວມຊ, ລົງວັນທີ 28 ມີນາ 2023.ຈຶ່ງມີມະຕິອະນຸມັດໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ ການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໂດຍບໍລິສັດຈະດຳເນີນການຕາມໜັງສືແຈ້ງການຂອງ

ໃນການຂໍຖອນການຈົດທະບຽນຮຸ້ນດັ່ງກ່າວ ຈະຕ້ອງໄດ້ຮັບມະຕິຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໂດຍມີຄະແນນສຽງເຫັນດີຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທັງໝົດເຂົ້າຮ່ວມກອງປະຊຸມ ໂດຍບໍ່ນັບເອົາຮຸ້ນຂອງຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ. ພ້ອມນັ້ນ, ຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ ແມ່ນບໍ່ມີສິດລົງຄະແນນສຽງຕໍ່ວາລະດັ່ງກ່າວ. ໃນນັ້ນ, ຄະແນນສຽງບໍ່ເຫັນດີຕໍ່ວາລະດັ່ງກ່າວ ຕ້ອງບໍ່ເກີນ 5% ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ. ໂດຍ TK Supports ຈະເປັນຜູ້ດຳເນີນການສະເໜີຊື້ຮຸ້ນ ໃນລາຄາສະເໜີຊື້ເທົ່າກັບ 9.100 ກີບຕໍ່ຮຸ້ນ, ບໍລິສັດ ກຳນົດໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 27 ເມສາ 2023. ພ້ອມກັນນີ້, ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 20 ມີນາ 2023 ສະບັບເລກທີ 219/23/ລວມຊ, ລົງວັນທີ 20 ມີນາ 2023. ໄດ້ມີມະຕິອະນຸມັດແຕ່ງຕັ້ງ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ (LXS) ເປັນທີ່ປຶກສາດ້ານການເງິນອິດສະຫຼະ ("ທີ່ປຶກສາດ້ານການເງິນອິດສະຫຼະ") ໃນການໃຫ້ຄຳເຫັນຕໍ່ຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ກ່ຽວຂ້ອງກັບຜູ້ສະເໜີຊື້ຮຸ້ນ ເພື່ອໃຫ້ຜູ້ຖືຮຸ້ນລາຍຍ່ອຍໃຊ້ໃນການປະກອບການພິຈາລະນາ ກ່ຽວກັບການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໃນຄັ້ງນີ້.

2. ສະຫຼຸບຂໍ້ມູນຂອງ ບໍລິສັດ ລາວເວີນ ມະຫາຊົນ

2.1. ປະຫວັດຄວາມເປັນມາຂອງ ບໍລິສັດ

ບໍລິສັດ ລາວເວີນ ມະຫາຊົນ ໄດ້ລົງນາມສັນຍາວ່າດ້ວຍການລົງທຶນສ້າງຕັ້ງສູນການຄ້າ, ການວາງສະແດງ ແລະ ການປະຊຸມລາວ - ສາກົນ ຢູ່ນະຄອນຫຼວງວຽງຈັນ ສປປ ລາວ ໃນກຳນົດເວລາ 35 ປີ ກັບລັດຖະບານ ສປປ ລາວ ໃນວັນທີ 24 ທັນວາ 2003 ເຊິ່ງຮຽກຮ້ອງໃຫ້ບໍລິສັດ ລົງທຶນໃນດ້ານສູນວາງສະແດງສິນຄ້າ, ສະຖານບັນເທີງຄົບຊຸດ ແລະ ກິດຈະການອື່ນໆ ພາຍໃນ ເນື້ອທີ່ 142.627 ຕາແມັດ ພາຍໃຕ້ການພິຈາລະນາຂອງລັດຖະບານສຳລັບ 35 ປີ ນັບແຕ່ມື້ລົງນາມໃນສັນຍາວ່າດ້ວຍການລົງທຶນ. ໃນນັ້ນ, ຊັບສິນ ແລະ ກິດຈະການທັງໝົດພາຍໃຕ້ສັນຍາວ່າດ້ວຍການລົງທຶນທີ່ກ່າວມາຂ້າງເທິງນີ້ ຈະຖືກໂອນໃຫ້ລັດຖະບານພາຍຫຼັງໄດ້ໝົດກຳນົດເວລາການລົງທຶນ ພາຍໃຕ້ເງື່ອນໄຂໃນຮູບການກໍ່ສ້າງ, ດຳເນີນການ ແລະ ໂອນມອບ (Build, Operate and Transfer "BOT"). ນອກຈາກນີ້, ບໍລິສັດ ໄດ້ຮັບການຍົກເວັ້ນໃນການເຊົ່າທີ່ດິນ ແລະ ຍົກເວັ້ນອາກອນກຳໄລ 10 ປີທຳອິດ, ສ່ວນ 10 ປີ ຕໍ່ໄປໄດ້ຮັບການຍົກເວັ້ນອັດຕາອາກອນກຳໄລເຄິ່ງໜຶ່ງ 50% ຈາກອັດຕາປົກກະຕິຕາມທີ່ລະບຸໄວ້ໃນກົດໝາຍ.

ບໍລິສັດ ລາວເວີນ ມະຫາຊົນ ("ບໍລິສັດ" ຫຼື "LWPC") ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 31 ມີນາ 2004 ພາຍໃຕ້ໃບອະນຸຍາດລົງທຶນຕ່າງປະເທດສະບັບເລກທີ 0064-04/ຄລຮ, ລົງວັນທີ 25/06/2004 ແລະ 0065-04/ຄລຮ, ລົງວັນທີ 25/06/2004 ໃນຮູບແບບບໍລິສັດຈຳກັດ ໂດຍໃສ່ຊື່ວ່າ ບໍລິສັດ ຈັນຄອມເປັກສ ຈຳກັດ. ເຊິ່ງມີນັກລົງທຶນລາວຖືຮຸ້ນ 51% ແລະ ນັກລົງທຶນຕ່າງປະເທດຖືຮຸ້ນ 49%. ເພື່ອສ້າງເປັນສູນວາງສະແດງສິນຄ້າ, ສູນການຄ້າ ແລະ ສູນການປະຊຸມສາກົນ ຫຼື (ລາວ-ໄອເຕັກ) ແຫ່ງທຳອິດຂອງ ສປປ ລາວ ຢູ່ໃນຄອນຫຼວງວຽງຈັນ ແລະ ໄດ້ເຄື່ອນໄຫວດຳເນີນທຸລະກິດເລື້ອຍໆມາຈົນມາຮອດວັນທີ 12 ຕຸລາ 2011 ຈຶ່ງໄດ້ຫັນປ່ຽນມາເປັນ ບໍລິສັດ ລາວເວີນ ມະຫາຊົນ.

ໃນວັນທີ 22 ພະຈິກ 2011 ບໍລິສັດໄດ້ເພີ່ມທຶນຈົດທະບຽນຂຶ້ນເປັນ 44.190.000.000 ກີບ, ບໍລິສັດໄດ້ຮັບໃບທະບຽນເລກທີ 4224/ຫຈກ. ຕໍ່ມາໃນວັນທີ 11 ພຶດສະພາ 2011 ແລະ 17 ກັນຍາ 2012 ລັດຖະບານ ແລະ ບໍລິສັດ ຕົກລົງເຫັນດີແກ້ໄຂປ່ຽນແປງສັນຍາວ່າດ້ວຍການລົງທຶນສະບັບ ວັນທີ 24 ທັນວາ 2003 ໂດຍຂະຫຍາຍການກຳນົດເວລາການລົງທຶນອອກໄປຕື່ມອີກ 55 ປີ, ຈາກ 35 ປີ ເປັນ 90 ປີ (ເລີ່ມແຕ່ປີ 2003 ເຖິງປີ 2093) ເພື່ອສ້າງເງື່ອນໄຂ ແລະ ຊຸກຍູ້ໃຫ້ແກ່ການຈົດທະບຽນບໍລິສັດໃນຕະຫຼາດຫຼັກຊັບລາວ.

ກອບສະເໜີຂາຍຮຸ້ນສາມັນເພີ່ມທຶນຕໍ່ມວນຊົນຄັ້ງທຳອິດ. ໄດ້ມີຜູ້ສ່ວນຕົ້ງບໍລິສັດຮ່ວມກັນ ທັງໝົດ 9 ຄົນ ທີ່ຖືຮຸ້ນຮ່ວມກັນ 100% ຂອງທຶນທັງໝົດຂອງບໍລິສັດ. ຕໍ່ມາວັນທີ 28 ມິຖະສາ 2013, ກອງປະຊຸມຜູ້ຖືຮຸ້ນຄັ້ງທີ 1 ປີ 2013 ໄດ້ມີມະຕິຕົກລົງເພີ່ມທຶນຈົດທະບຽນບໍລິສັດຂຶ້ນອີກ ຈຳນວນ 27.019.618.000 ກີບ ຈາກເດີມ 44.190.000.000 ກີບ ມາເປັນ 71.209.618.000 ກີບ ແລະ ໃຫ້ນຳເອົາ ບໍລິສັດ ລາວເວີນ ສະຫວັນ ຈຳກັດ ຊຶ່ງເປັນສູນວາງສະແດງສິນຄ້າ ແລະ ສູນການປະຊຸມສາກົນ ຫຼື (ສະຫວັນ-ໄອເຕັກ) ຢູ່ໃນແຂວງສະຫວັນນະເຂດ ເຂົ້າມາເປັນບໍລິສັດໃນເຄືອ LWPC. ໂດຍໄດ້ມີການໂອນສ່ວນໄດ້ເສຍ 100% ຈາກຜູ້ຖືຮຸ້ນເດີມ ເຮັດໃຫ້ບໍລິສັດ ເຂົ້າຖືຮຸ້ນ 100% ຂອງຮຸ້ນທັງໝົດໃນລາວເວີນ ສະຫວັນ.

ໃນວັນທີ 23 ທັນວາ 2013 ບໍລິສັດ ລາວເວີນ ມະຫາຊົນ ໄດ້ສຳເລັດການຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແລະ ໄດ້ສຳເລັດການຂາຍຮຸ້ນອອກສູ່ມວນຊົນ.

ໃນວັນທີ 14 ມະຈິກ 2015, ບໍລິສັດ ລາວເວີນ ມະຫາຊົນ ໄດ້ເປີດອາຄານສູນການຄ້າຂະໜາດໃຫຍ່ທີ່ມີຄວາມສູງ 8 ຊັ້ນ ແລະ ມີເນື້ອທີ່ 63.505 ຕາແມັດ ດ້ວຍເຄື່ອງໝາຍການຄ້າ ສູນການຄ້າໄອເຕັກມໍ.

ສວນນ້ຳໄອຊ່ຽນປາກ ຖືວ່າເປັນສວນນ້ຳແຫ່ງໃຫຍ່ທີ່ສຸດໃນວຽງຈັນ ແລະ ເປີດໃຫ້ບໍລິການມາຕັ້ງແຕ່ວັນທີ 28 ທັນວາ 2015. ສວນນ້ຳໄອຊ່ຽນປາກມີພື້ນທີ່ ປະມານ 30.000 ຕາແມັດ ແລະ ສາມາດຮັບຮອງລູກຄ້າໄດ້ກວ່າ 3.000 ຄົນ.

ວັນທີ 4 ມິຖະສາ 2017 ທ່ານ ສັກໄຊ ວົງມາລາສິດ ແລະ ທ່ານ ປິເຕີ ຈັນ ເຊິ່ງເປັນຜູ້ສ່ວນຕົ້ງ ແລະ ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ລາວເວີນ ມະຫາຊົນໄດ້ຂາຍຮຸ້ນຈຳນວນ 34.156.120 ຮຸ້ນ ຫຼື ເທົ່າກັບ 86,34% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ໃຫ້ກັບ TK Supports ເພື່ອພັດທະນາທຸລະກິດຂອງບໍລິສັດໃນອະນາຄົດ.

2.2. ພາບລວມຂອງການປະກອບທຸລະກິດ

2.2.1. ລັກສະນະທຸລະກິດຂອງ ບໍລິສັດ ລາວເວີນ ມະຫາຊົນ ແລະ ບໍລິສັດໃນເຄືອ

ບໍລິສັດ ລາວເວີນ ມະຫາຊົນ ຄືສູນການຄ້າຄົບວົງຈອນ ທີ່ຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ ແລະ ຜູ້ອຸປະໄພກທຸກກຸ່ມເປົ້າໝາຍດ້ວຍການບໍລິການທີ່ຫຼາກຫຼາຍໃນສູນການຄ້າເຊັ່ນ: ການປະສົມປະສານຮ້ານຄ້າຂະໜາດໃຫຍ່, ຂະໜາດນ້ອຍ, ງານວາງສະແດງສິນຄ້າຕ່າງໆ,ຈັດງານລ້ຽງ, ສູນການສຶກສາ, ສູນອາຫານ ແລະ ເຄື່ອງດື່ມ, ສະຖານທີ່ອອກກຳລັງກາຍ, ການບັນເທີງດ້ວຍໂຮງສາຍຮູບເງົາ, ສວນນ້ຳ, ການຈັດງານສົນລະປະ. ສ້າງຄວາມພໍໃຈໃຫ້ລູກຄ້າ ຕອບໂຈດທຸກຄວາມຕ້ອງການໃນບ່ອນດຽວ.

ບໍລິສັດ ປະກອບມີ ສູນວາງສະແດງສິນຄ້າໄອເຕັກ, ສູນການຄ້າໄອເຕັກມໍ, ສວນນ້ຳໄອຊ່ຽນປາກ ແລະ ສູນການຄ້າທ່ຽງຂັນຄຳ ເຊິ່ງສະໜອງການບໍລິການໃຫ້ເຊົ່າພື້ນທີ່ ແລະ ເຊົ່າຫ້ອງ, ງານວາງສະແດງສິນຄ້າ, ງານລ້ຽງ, ກິດຈະກຳບັນເທີງ, ສວນນ້ຳ, ອາຫານ ແລະ ເຄື່ອງດື່ມ. ບໍລິສັດມີ 1 ບໍລິສັດລູກເຊິ່ງຖືຮຸ້ນ 100% ຄື ບໍລິສັດ ລາວເວີນ ສະຫວັນ ຈຳກັດ (ສູນການຄ້າສະຫວັນ-ໄອເຕັກ) ໃຫ້ບໍລິການກ່ຽວກັບການເຊົ່າພື້ນທີ່ ແລະ ຫ້ອງເຊົ່າ, ການວາງສະແດງ ແລະ ການບັນເທີງ. ແຕ່ລະສູນການຄ້າຂອງ LWPC ມີລາຍລະອຽດດັ່ງນີ້:


ລ/ດ	ຊື່	ລາຍລະອຽດ
1	ສູນວາງສະແດງສິນຄ້າໄອເຕັກ	ອາຄານ ສູງ 15 ແມັດ ປະກອບດ້ວຍ ຊັ້ນທີ່ໜຶ່ງ ທີ່ມີເນື້ອທີ່ 8.200 ຕາແມັດ ແລະ 12 ຫ້ອງ ທີ່ມີຫຼາຍຂະໜາດ ຈັດສະແດງສິນຄ້າແຕ່ລະປະເພດຕາມລະບົບສາກົນເຊິ່ງມີການວາງສະແດງຕ່າງໆ ເປັນແຕ່ລະປະເພດຕາມແຕ່ລະໄລຍະ ເຊັ່ນ: ການວາງສະແດງສິນຄ້າ, ການຈັດກອງປະຊຸມ, ການຈັດງານດອງ, ການພົບປະ, ງານສະແດງຄອນເສີດ ແລະ ກິດຈະກຳໂຄສະນາສິນຄ້າ.

2	ສຸນການຄ້າໃຕ້ເກ່	ອາຄານສຸນການຄ້າຂະໜາດໃຫຍ່ທີ່ມີຄວາມສູງ 8 ຊັ້ນ ແລະ ມີເນື້ອທີ່ 63.505 ຕາແມັດ ເພື່ອນຳສະເໜີການຄ້າຍ່ອຍ, ສຸນອາຫານ ແລະ ເຄື່ອງດື່ມ, ກິດຈະກຳເພື່ອການສຶກສາ ແລະ ການພັກຜ່ອນທີ່ຫລາກຫລາຍ.
3	ສວນນ້ຳໃຈຊ່ຽນປາກ	ຖືວ່າເປັນສວນນ້ຳແຫ່ງໃຫຍ່ທີ່ສຸດໃນນະຄອນຫຼວງວຽງຈັນ, ມີພື້ນທີ່ ປະມານ 30.000 ຕາແມັດ ແລະ ສາມາດຮັບຮອງລູກຄ້າໄດ້ກວ່າ 3.000 ຄົນ. ເປັນສະຖານທີ່ ທີ່ມີເຄື່ອງຫຼິ້ນ ແລະ ກິດຈະກຳສຳລັບທຸກໆຄົນ. ເໝາະສົມຢ່າງຍິ່ງທີ່ຈະເພີ່ມຄວາມຕື່ນເຕັ້ນ, ມີຊີວິດຊີວາ ແລະ ມ່ວນຊື່ນໃນວັນພັກຜ່ອນ.
4	ສຸນການຄ້າທົ່ງຂັນຄຳ	ເປັນໂຄງການທີ່ສ້າງແທນໂຄງການຕະຫຼາດຫຼັງເກົ່າພາຍໃຕ້ເງື່ອນໄຂສຳປະທານເປັນເວລາ 70 ປີ ເລີ່ມແຕ່ປີ 2014-2084. ອາຄານປະກອບມີ 5 ຊັ້ນ ແບ່ງອອກເປັນ 2 ສ່ວນຄື. 1.) ຊັ້ນໜຶ່ງແມ່ນເປັນຕະຫຼາດສົດ (ຮັກສາໄວ້ໃຫ້ເປັນກິດຈະກຳແບບດັ້ງເດີມຂອງຕະຫຼາດເກົ່າ ເຊິ່ງແບ່ງອອກເປັນສອງສ່ວນຄື: ມີເຄື່ອງປັບອາກາດ ແລະ ບໍ່ມີເຄື່ອງເປັນອາກາ; 2.) ຊັ້ນສອງຫາຊັ້ນຫ້າ ເປັນສຸນການເພື່ອຮັກສາໄວ້ໃຫ້ເປັນພື້ນທີ່ເຊົ່າສຳລັບການເຮັດທຸລະກິດ ແລະ ສະຖານທີ່ບັນເທີງ.
5	ສຸນການຄ້າສະຫວັນ-ໃຈເຕ້ກ	ອາຄານສາມຊັ້ນມີເນື້ອທີ່ປະມານ 13.050 ຕາແມັດ. ອາຄານມີຫ້ອງໂຖງທີ່ໃຫຍ່ສຳລັບການຈັດວາງສະແດງສິນຄ້າ, ການຈັດກອງປະຊຸມ, ການຈັດງານລອງ ແລະ ການຈັດງານສຳມະນາ. ມີຮ້ານລັບສະສົມຄ້າຕ່າງໝ, ພື້ນທີ່ຫວ່າງສຳລັບເຊົ່າ ແລະ ສະຖານທີ່ຈອດລົດທີ່ກວ້າງຂວາງ.

2.2.2. ໂຄງສ້າງຂອງບໍລິສັດ

❖ ໂຄງຮ່າງການຈັດຕັ້ງ

ໂຄງຮ່າງການຈັດຕັ້ງຂອງ ບໍລິສັດ ປະກອບດ້ວຍ ກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະກຳມະການ, ຜູ້ອຳນວຍການ, ຮອງຜູ້ອຳນວຍການ, ຜູ້ຈັດການທົ່ວໄປ ແລະ ພະນັກງານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:



❖ ຜູ້ຖືຮຸ້ນຂອງບໍລິສັດ

ຜູ້ຖືຮຸ້ນຂອງບໍລິສັດ ພ້ອມທັງຈຳນວນຮຸ້ນ ແລະ ສັດສ່ວນການຖືຄອງ ຮອດວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີ ລາຍລະອຽດດັ່ງລຸ່ມນີ້:

ລ/ດ	ລາຍຊື່	ຈຳນວນຮຸ້ນ	(%)
1	ບໍລິສັດ ທີເຄຊັ້ນພລ ຈຳກັດຜູ້ດຽວ	36.193.609	91,49%
2	ທ່ານ ທັດສະຄອນ ທຳມະວົງ	1.436.200	3,63%
3	ທ່ານ ຣສ. ເດດພູວັງ ມຸລຣັຕນ໌	2.600	0,01%
4	ທ່ານ ສີບຸນທຳ ສີບຸນມີ	3.500	0,01%
5	ທ່ານ ແສງສະຫວ່າງ ກິ່ງສະດາ	3.500	0,01%
6	ທ່ານ ທະນຸໄຊ ທຳມະວົງ	3.500	0,01%
7	ທ່ານ ສຸລາລັກ ມີໆມະຈິດ	2.700	0,01%
8	ທ່ານ ນາງ ສຸວິເດດ ທຳມະວົງ	3.500	0,01%
9	ທ່ານ ດວງດີ ພົມມະຈັນ	3.500	0,01%
10	ຜູ້ຖືຮຸ້ນລາຍຍ່ອຍ	1.908.300	4,82%
	ລວມທັງໝົດ	39.560.909	100%

❖ ສະພາບໍລິຫານ

ສະພາບໍລິຫານຂອງບໍລິສັດປະກອບມີທັງໝົດ 5 ທ່ານ ທີ່ມີຄຸນວຸດທິ ແລະ ປະສົບການໃນການບໍລິຫານ ມີລາຍ ລະອຽດດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ທັດສະຄອນ ທຳມະວົງ	ປະທານ
2	ທ່ານ ນາງ ສີພອນຄຳ ດວງດາລາ	ສະມາຊິກ/ຜູ້ອຳນວຍການໃຫຍ່
3	ທ່ານ ສີບຸນທຳ ສີບຸນມີ	ສະມາຊິກ
4	ທ່ານ ຣສ ເດດພູວັງ ມຸລຣັຕນ໌	ສະມາຊິກສະມາຊິກ/ກຳມະການອິດສະຫຼະ
5	ທ່ານ ສິຫວັດ ແສງດວງຈັນ	ສະມາຊິກ/ກຳມະການອິດສະຫຼະ/ປະທານກວດສອບພາຍໃນ

❖ ຄະນະບໍລິຫານ

ຄະນະບໍລິຫານງານຂອງບໍລິສັດປະກອບມີທັງໝົດ 8 ທ່ານ ທີ່ມີຄຸນວຸດທິ ແລະ ປະສົບການໃນການບໍລິຫານ ມີລາຍ ລະອຽດດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນາງ ສີເພັດ ທອງດາລາ	ຜູ້ອຳນວຍການໃຫຍ່
2	ທ່ານ ນາງ ລຳເງິນ ມາດສະນີວົງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ
3	ທ່ານ ນາງ ນິພາພອນ ບັນດາວົງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍດຳເນີນງານ
4	ທ່ານ ພຸທະວົງ ວັນລາວົງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍອະສັງຫາລິມະຊັບ
5	ທ່ານ ປິ່ງ ຮ່ວງສະນະໄຊ	ຮອງຜູ້ອຳນວຍການໃຫຍ່ ຝ່າຍໄອທີ
6	ທ່ານ ນາງ ຄຳພາ ຄຳບຸນເຮືອງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍການຄ້າ
7	ທ່ານ ນາງ ວຽງວິໄລ ມີ່ງບຸນຜາ	ຜູ້ຈັດການທົ່ວໄປ ສູນການຄ້າລາວໄອເຕັກມໍ
8	ທານ ສຸວັນນາ ເສນາມຸນີ	ຜູ້ຈັດການທົ່ວໄປ ສວນນ້ຳໄອຊ່ຽນພາກ

2.3. ສະຫຼຸບຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດ

ລາຍຮັບຫຼັກຂອງບໍລິສັດມາຈາກການໃຫ້ເຊົ່າພື້ນທີ່ ແລະ ການບໍລິການຈາງສະແດງສິນຄ້າ ອີງຕາມຂໍ້ມູນໃນເອກະສານລາຍງານການເງິນປະຈຳປີ 2020 ແລະ 2021 ສາມາດສະຫຼຸບຕາມອັດຕາສ່ວນດັ່ງລຸ່ມນີ້:

ລາຍຮັບຈາກການຂາຍ ແລະ ບໍລິການ	ປີ 2020		ປີ 2021	
	ມູນຄ່າ (ລ້ານກີບ)	ສັດສ່ວນ (%)	ມູນຄ່າ (ລ້ານກີບ)	ສັດສ່ວນ (%)
ລາຍຮັບຈາກການໃຫ້ເຊົ່າ	14.399	38,51%	16.600	59,34%
ລາຍຮັບຈາກການບໍລິການຈາງສະແດງ	14.867	39,76%	6.699	23,95%
ລາຍຮັບຈາກການບໍລິການສວນນ້ຳ	1.554	4,16%	1.085	3,88%
ລາຍຮັບຈາກຄ່າບໍລິຫານ	5.795	15,50%	3.279	11,72%
ລາຍຮັບຈາກບໍລິການອື່ນໆ	780	2,09%	312	1,12%
ລວມ	**37.395**	**100%**	**27.976**	**100%**

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງບໍລິສັດ

2.3.1. ໃບລາຍງານຜົນການດຳເນີນງານ

ໜ່ວຍ: ລ້ານກີບ	2019	2020	2021	9 ເດືອນ 2021	9 ເດືອນ 2022
ລາຍຮັບຈາກການຂາຍ ແລະ ບໍລິການ	**45.453**	**37.395**	**24.976**	**20.771**	**34.228**
ຕົ້ນທຶນໃນການຂາຍ ແລະ ການບໍລິການ	(36.172)	(26.388)	(21.450)	(17.412)	(23.330)
ກຳໄລຂັ້ນຕົ້ນ	**9.281**	**11.007**	**3.525**	**3.359**	**10.898**
ລາຍຈ່າຍບໍລິຫານ	(23.768)	(22.371)	(24.461)	(17.741)	(14.217)
ລາຍຮັບອື່ນໆ	877	557	345	272	319
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ,ສຸດທິ	(1.773)	(2.301)	(18.611)	(1.886)	(28.506)
ກຳໄລຈາກການດຳເນີນງານ	**(15.382)**	**(13.107)**	**(39.201)**	**(15.535)**	**(31.506)**
ລາຍຈ່າຍດອກເບ້ຍ	(119)	(948)	(1.240)	(946)	(376)
ກຳໄລ/ຂາດທຶນ ກ່ອນຫັກອາກອນກຳໄລ	**(15.502)**	**(14.056)**	**(40.441)**	**(16.480)**	**(31.882)**
ອາກອນກຳໄລ	-	-	-		-
ກຳໄລ/ຂາດທຶນ ສຳລັບປີ	**(15.502)**	**(14.056)**	**(40.441)**	**(16.480)**	**(31.882)**
ກຳໄລພື້ນຖານຕໍ່ຮຸ້ນ	(392)	(355)	(1.022)	(417)	(806)

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງບໍລິສັດ

2.3.2. ใบລາຍງານຖານະການເງິນ

ຫົວໜ່ວຍ: ລ້ານກີບ	2019	2020	2021	9 ເດືອນ 2021	9 ເດືອນ 2022
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	2.255	4.624	3.993	3.569	4.382
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	34.818	38.421	38.585	36.527	78.469
ເຄື່ອງໃນສາງ, ສຸດທິ	3.616	3.538	2.749	2.877	3.022
ຊັບສິນໝຸນວຽນອື່ນໆ	1.648	7.537	7.016	6.718	11.807
ລວມຊັບສິນໝຸນວຽນ	**42.337**	**54.120**	**52.343**	**49.691**	**97.681**
ຊັບສິນຄົງທີ່ ມີຕົວຕົນ, ສຸດທິ (ທີ່ດິນ, ອາຄານ ແລະ ອຸປະກອນ)	606.289	148.718	140.555	143.355	134.296
ຊັບສິນເພື່ອການລົງທຶນ	-	442.603	435.472	437.995	430.395
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	101	50	98	94	214
ຊັບສິນບໍ່ໝຸນວຽນອື່ນໆ	51.490	44.314	42.642	42.645	6.914
ລວມຊັບສິນບໍ່ໝຸນວຽນ	**657.880**	**635.686**	**618.767**	**624.089**	**571.818**
ລວມຊັບສິນ	**700.216**	**689.806**	**671.111**	**673.780**	**669.499**
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	138.741	148.930	177.816	154.351	202.288
ເງິນກູ້ຢືມ	30.400	30.400	32.832	30.400	30.400
ລາຍຮັບລ່ວງໜ້າ-ໝຸນວຽນ	4.587	4.587	4.499	5.945	4.241
ໜີ້ສິນໝຸນວຽນອື່ນໆ	36.204	34.395	34.616	33.413	39.126
ລວມໜີ້ສິນໝຸນວຽນ	**209.932**	**218.312**	**249.763**	**224.109**	**276.055**
ເງິນກູ້ໄລຍະຍາວ	7.728	13.667	14.008	13.918	21.596
ລາຍຮັບລ່ວງໜ້າ-ບໍ່ໝຸນວຽນ	332.045	321.372	311.326	315.778	307.716
ລວມໜີ້ສິນບໍ່ໝຸນວຽນ	**339.773**	**335.038**	**325.334**	**329.696**	**329.312**
ລວມໜີ້ສິນ	**549.706**	**553.350**	**575.097**	**553.805**	**605.367**
ທຶນຈົດທະບຽນທີ່ອອກ ແລະ ຖອກແລ້ວ	79.122	79.122	79.122	79.122	79.122
ສ່ວນເພີ່ມມູນຄ່າຮຸ້ນ	33.582	33.582	33.582	33.582	33.582
ສຳຮອງຈາກການຮ່ວມທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມດຽວກັນ	(12.996)	(12.996)	(12.996)	(12.996)	(12.996)
ຄ້າງສຳຮອງຕາມລະບຽບການ	13.358	13.358	13.358	13.358	13.358
ກຳໄລສະສົມ	37.446	23.390	(17.051)	6.910	(48.933)
ລວມທຶນເຈົ້າຂອງ	**150.511**	**136.455**	**96.014**	**119.975**	**64.132**
ລວມໜີ້ສິນ ແລະ ທຶນເຈົ້າຂອງ	**700.216**	**689.806**	**671.111**	**673.780**	**669.499**

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງບໍລິສັດ

2.3.3. ໃນລາຍງານກະແສເງິນສົດ

ຫົວໜ່ວຍ: ລ້ານກີບ	2019	2020	2021	9 ເດືອນ 2021	9 ເດືອນ 2022
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ	(2.853)	(1.897)	(357)	(187)	603
ເງິນສົດສຸດທິຈາກກິດຈະກຳການລົງທຶນ	(4.412)	(1.255)	(842)	(308)	(400)
ເງິນສົດສຸດທິຈາກກິດຈະກຳການເງິນ	7.666	5.441	-	-	(289)
(ຫຼຸດລົງ)/ເພີ່ມຂຶ້ນສຸດທິໃນເງິນສົດ	**401**	**2.289**	**(1.200)**	(121)	**(86)**
ເງິນສົດໃນຕົ້ນປີ	1.780	2.255	4.624	3.994	3.993
ກຳໄລຈາກການແລກປ່ຽນໃນເງິນສົດ	74	81	569	(304)	476
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	**2.255**	**4.624**	**3.993**	**3.569**	**4.382**

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງບໍລິສັດ

2.3.4. ຄຳອະທິບາຍການວິເຄາະຜົນການດຳເນີນງານ ແລະ ຖານະການເງິນ

2.3.4.1. ສະພາບແວດລ້ອມຂອງທຸລະກິດ

ຫຼັງຈາກໄດ້ຮັບຜົນກະທົບຢ່າງຕໍ່ເນື່ອງ ຈາກການແຜ່ລະບາດຂອງພະຍາດ ໂຄໂລນາໄວຣັດ 2019 (COVID -19) ໃນໄລຍະທ້າຍປີ 2019 ຈົນເຖິງການປີ 2022 ເຮັດໃຫ້ບໍລິສັດໄດ້ຍຶດການດຳເນີນງານຂອງສູນວາງສະແດງສິນຄ້າ, ສູນການຄ້າ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

ໃນການເດືອນ ພຶດສະພາ 2022, ເຖິງແມ່ນວ່າລັດຖະບານໄດ້ເປີດປະເທດຢ່າງເປັນທາງການ ແຕ່ເງິນເຟີ້ໃນປະເທດຍັງສືບຕໍ່ເພີ່ມຂຶ້ນສູງ ໂດຍອີງຕາມບົດລາຍງານສະພາບອັດຕາເງິນເຟີ້ປະຈຳເດືອນ ພຶດສະພາ 2022 ຂອງສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ສະເລ່ຍ 5 ເດືອນຕົ້ນປີ 2022 ເພີ່ມຂຶ້ນຢູ່ລະດັບ 9% ປັດໄຈທີ່ເຮັດໃຫ້ເກີດເງິນເຟີ້ໃນ ລາວ ແມ່ນມາຈາກ:

1) ໄດ້ເກີດສົງຄາມລະຫວ່າງລັດເຊຍ ແລະ ຢູເຄນ ເຊິ່ງໄດ້ສົ່ງຜົນກະທົບຕໍ່ການສະໜອງນ້ຳມັນໃນໂລກບໍ່ສຽງພໍ ກັບ ຄວາມຕ້ອງການນຳໃຊ້ເຮັດໃຫ້ລາຄານ້ຳມັນໂລກເພີ່ມຂຶ້ນສູງ ສົ່ງຜົນໃຫ້ລາຄານ້ຳມັນໃນລາວເພີ່ມຂຶ້ນ ເມື່ອທຽບ ເດືອນດຽວກັນກັບປີທີ່ຜ່ານມາເພີ່ມຂຶ້ນ 92,6% ການເພີ່ມຂຶ້ນຂອງລາຄານ້ຳມັນໄດ້ກະທົບຢ່າງໜັກເຮັດໃຫ້ລາຄາ ສິນຄ້າຕ່າງໆທີ່ນຳໃຊ້ນ້ຳມັນເປັນປັດໄຈໃນການຜະລິດເພີ່ມຂຶ້ນສູງໄປຕາມໆກັນໝົດ.

2) ການສືບຕໍ່ອ່ອນຄ່າຂອງເງິນກີບທຽບໃສ່ເງິນຕາໃນເດືອນ 5/2022 ໄດ້ກະທົບຢ່າງຮຸນແຮງໂດຍກົງ ເຮັດໃຫ້ສິນຄ້າ ທີ່ນຳເຂົ້າເພີ່ມສູງຂຶ້ນ, ລວມທັງສິນຄ້າພາຍໃນຕ່າງກໍ່ມີການຕິດພັນກັບເງິນຕາ ຕ່າງກໍ່ປັບຕົວຂຶ້ນສູງໄປຕື່ມຫົນການ ຜະລິດຂອງສິນຄ້າແຕ່ລະຕົວ.

3) ຜົນຂອງການຂຶ້ນລາຄານ້ຳມັນ ແລະ ສິນຄ້ານຳເຂົ້າໄດ້ກະທົບທາງອ້ອມເຮັດໃຫ້ຕົ້ນທຶນການຜະລິດສູງຂຶ້ນ, ຄ່າຄອງ ຊີບເພີ່ມຂຶ້ນ ແລະ ສຸດທ້າຍໄດ້ກະທົບໃຫ້ທຸກໝວດສິນຄ້າມີລາຄາເພີ່ມຂຶ້ນສູງຢ່າງຫຼີກລ່ຽງບໍ່ໄດ້. ມາຮອດເດືອນ ທັນວາ 2022 ອັດຕາເງິນເຟີ້ເພີ່ມຂຶ້ນເຖິງ 39,27% , ສະເລ່ຍປີ 2022 ເພີ່ມຂຶ້ນຢູ່ລະດັບ 22,96% ກະທົບຕໍ່ ການດຳເນີນທຸລະກິດ ແລະ ການດຳລົງຊີວິດຂອງປະຊາຊົນທົ່ວປະເທດ.

2.3.4.2.ວິເຄາະຜົນການດຳເນີນງານ ແລະ ຖານະການເງິນ

ເອກະສານລາຍງານການເງິນຂອງ LWPC ແລະ ບໍລິສັດໃນເຄືອ (ບໍລິສັດ) ປະຈຳປີ 2021 ໄດ້ຮັບການກວດສອບຈາກຜູ້ກວດສອບບັນຊີອິດສະຫຼະແລ້ວ ໂດຍກວດສອບບັນຊີອິດສະຫຼະອອກຄຳເຫັນແບບບໍ່ສະແດງຄຳເຫັນ ເນື່ອງຈາກກວດສອບບັນຊີອິດສະຫຼະບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມເພື່ອເປັນພື້ນຖານໃນການອອກຄຳເຫັນ ແລະ ສຳລັບເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ 2022 ໄດ້ຮັບການທົບທວນຈາກຜູ້ກວດສອບບັນຊີອິດສະຫຼະແລ້ວ ໂດຍກວດສອບບັນຊີອິດສະຫຼະອອກຄຳເຫັນເອກະສານລາຍງານການເງິນແບບບໍ່ຖືກຕ້ອງ ສະແດງວ່າເອກະສານລາຍງານການເງິນຂອງບໍລິສັດບໍ່ໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ແລະ ຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

❖ ໃນລາຍງານຜົນການດຳເນີນງານ

ຜົນການດຳເນີນງານລວມຂອງບໍລິສັດ ປະຈຳປີ 2019, 2020 ແລະ 2021, ຂາດທຶນສຸດທິຈຳນວນ 15.502 ລ້ານກີບ, 14.056 ລ້ານກີບ ແລະ 40.441 ລ້ານກີບ ຕາມລຳດັບ. ປີ 2021 ຂາດທຶນເພີ່ມຂຶ້ນຈາກປີ 2020 ແລະ 2019 ຈຳນວນ 26.386 ລ້ານກີບ ຫຼື ເທົ່າກັບ 187,72% ແລະ ຈຳນວນ 24.940 ລ້ານກີບ ຫຼື ເທົ່າກັບ 160,88% ຕາມລຳດັບ; ການຂາດທຶນສຸດທິປະຈຳປີ 2021 ໄດ້ຮັບຜົນກະທົບຈາກລາຍຮັບຈາກການຂາຍ ແລະ ບໍລິການຫຼຸດລົງເມື່ອທຽບປີ 2020 ແລະ 2019 ຈຳນວນ 12.419 ລ້ານກີບ ຫຼື ເທົ່າກັບ 33,21% ແລະ ຈຳນວນ 20.478 ລ້ານກີບ ຫຼື ເທົ່າກັບ 45,05% ຕາມລຳດັບ; ລາຍຈ່າຍບໍລິຫານເພີ່ມຂຶ້ນບໍ່ຫຼາຍ ແຕ່ຂາດທຶນຈາກຍັດຕາແລກປ່ຽນ ເພີ່ມຂຶ້ນເມື່ອທຽບປີ 2020 ແລະ 2019 ຈຳນວນ 16.310 ລ້ານກີບ ຫຼື ເທົ່າກັບ 708,83% ແລະ ຈຳນວນ 16.838 ລ້ານກີບ ຫຼື ເທົ່າກັບ 949,93% ຕາມລຳດັບ;

ຜົນການດຳເນີນງານລວມຂອງບໍລິສັດ ປະຈຳ 9 ເດືອນ 2022 ແລະ 2021, ຂາດທຶນສຸດທິຈຳນວນ 31.882 ລ້ານກີບ ແລະ 16.480 ລ້ານກີບ ຕາມລຳດັບ, 9 ເດືອນ 2022 ຂາດທຶນເພີ່ມຂຶ້ນ ຈຳນວນ 15.402 ລ້ານກີບຫຼືເທົ່າກັບ 93,45 % ເມື່ອທຽບກັບໄລຍະດຽວກັນຂອງປີ 2021;

ຜົນການດຳເນີນງານລວມຂອງບໍລິສັດປະຈຳປີ 2019, 2020, 2021 ແລະ ປະຈຳ 9 ເດືອນ 2022 ປະກອບດ້ວຍລາຍການດັ່ງນີ້:

1. ລາຍຮັບຈາກການຂາຍ ແລະ ການບໍລິການ

ລາຍຮັບຈາກການຂາຍ ແລະ ການບໍລິການ ຫຼັກໆມາຈາກການໃຫ້ເຊົ່າ, ການບໍລິການວາງສະແດງ, ການບໍລິການສວນນ້ຳ, ຄ່າບໍລິຫານ. ໃນປີ 2019, 2020 ແລະ 2021 ລາຍຮັບຈາກການຂາຍ ແລະ ການບໍລິການ ມີຈຳນວນ 45.453 ລ້ານກີບ, 37.395 ລ້ານກີບ ແລະ 24.976 ລ້ານກີບ ຕາມລຳດັບ; ລາຍຮັບຈາກການຂາຍ ແລະ ການບໍລິການປີ 2021 ຫຼຸດລົງເມື່ອທຽບປີ 2020 ແລະ 2019 ຈຳນວນ 12.419 ລ້ານກີບ ຫຼື ເທົ່າກັບ 33,21% ແລະ ຈຳນວນ 20.478 ລ້ານກີບ ຫຼື ເທົ່າກັບ 45,05% ຕາມລຳດັບ;

ສຳລັບ 9 ເດືອນປີ 2022 ແລະ 2021 ລາຍຮັບຈາກການຂາຍ ແລະ ການບໍລິການ ມີຈຳນວນ 34.228 ລ້ານກີບ ແລະ 20.771 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ ຈຳນວນ 13.457 ລ້ານກີບ ເທົ່າກັບ 64,79% ເມື່ອທຽບໄລຍະດຽວກັນ.

2. ຕົ້ນທຶນຂາຍ ແລະ ບໍລິການ

ໃນປີ 2019, 2020 ແລະ 2021 ຕົ້ນທຶນການຂາຍ ແລະ ການບໍລິການ ມີຈຳນວນ 36.172 ລ້ານກີບ, 26.388 ລ້ານກີບ ແລະ 21.450 ລ້ານກີບ ຕາມລຳດັບ. ຕົ້ນທຶນປີ 2021 ໄດ້ຫຼຸດລົງຈາກປີ 2020 ແລະ 2019 ຈຳນວນ 4.937 ລ້ານກີບ ຫຼື ເທົ່າກັບ 18,71% ແລະ ຈຳນວນ 14.722 ລ້ານກີບ ຫຼື ເທົ່າກັບ 40,70% ຕາມລຳດັບ. ໃນປີ 2019, 2020

ແລະ 2021 ຕົ້ນທຶນຂາຍ ແລະ ບໍລິການ ເມື່ອທຽບໃສ່ລາຍຮັບຈາກການຂາຍ ແລະ ບໍລິການຂອງແຕ່ລະປີ ເທົ່າກັບ 79,58 %, 70,56% ແລະ 85,89% ຕາມລຳດັບ;

ສຳລັບ 9 ເດືອນ ປີ 2022 ແລະ 2021 ບໍລິສັດມີຕົ້ນທຶນຂາຍ ແລະ ບໍລິການຈຳນວນ 23.330 ລ້ານກີບ ແລະ 17.412 ລ້ານກີບ ຕາມລຳດັບ, ຕົ້ນທຶນ 9 ເດືອນປີ 2022 ໄດ້ເພີ່ມຂຶ້ນຈາກ 9 ເດືອນປີ 2021 ຈຳນວນ 5.918 ລ້ານກີບ ຫຼື ເທົ່າກັບ 33,99% . ຕົ້ນທຶນ ດັ່ງກ່າວ ເມື່ອທຽບໃສ່ລາຍຮັບຈາກການຂາຍ ແລະ ບໍລິການຂອງແຕ່ລະໄລຍະໃນປີ 2022 ແລະ 2021 ເທົ່າກັບ 68,16% ແລະ 83,83% ຕາມລຳດັບ.

3. ກຳໄລຂັ້ນຕົ້ນ

ກຳໄລຂັ້ນຕົ້ນໃນປີ 2019, 2020 ແລະ 2021 ມີຈຳນວນ 9.281 ລ້ານກີບ, 11.007 ລ້ານກີບ ແລະ 3.525 ລ້ານກີບ ຕາມລຳດັບ. ປີ 2021 ກຳໄລຂັ້ນຕົ້ນຫຼຸດລົງຈາກປີ 2020 ແລະ 2019 ຈຳນວນ 7.482 ລ້ານກີບ ຫຼື ເທົ່າກັບ 67,97% ແລະ ຈຳນວນ 5.756 ລ້ານກີບ ຫຼື ເທົ່າກັບ 62,02% ຕາມລຳດັບ. ການຫຼຸດລົງຂອງກຳໄລຂັ້ນຕົ້ນເປັນຜົນມາຈາກລາຍຮັບຈາກການຂາຍ ແລະ ບໍລິການຫຼຸດລົງ, ຕົ້ນທຶນການຂາຍ ແລະ ບໍລິການເພີ່ມຂຶ້ນ ເຊິ່ງກວມເອົາ 85,89% ຂອງລາຍຮັບໃນປີ 2021;

ກຳໄລຂັ້ນຕົ້ນໃນ 9 ເດືອນຕົ້ນປີ 2022 ແລະ 2021 ມີຈຳນວນ 10,898 ລ້ານກີບ ແລະ 3.359 ລ້ານກີບຕາມລຳດັບ. ກຳໄລຂັ້ນຕົ້ນເພີ່ມຂຶ້ນຈາກໄລຍະດຽວກັນປີ 2021 ຈຳນວນ 7.539 ລ້ານກີບ. ການເພີ່ມຂຶ້ນຂອງກຳໄລຂັ້ນຕົ້ນເປັນຜົນມາຈາກລາຍຮັບຈາກການຂາຍ ແລະ ບໍລິການເພີ່ມຂຶ້ນ, ຕົ້ນທຶນການຂາຍ ແລະ ບໍລິການກວມເອົາ 68,16% ເຊິ່ງໜ້ອຍກວ່າ 9 ເດືອນ 2021 ທີ່ກວມ 83,83%.

4. ລາຍຈ່າຍບໍລິຫານ

ໃນປີ 2019, 2020 ແລະ 2021 ລາຍຈ່າຍບໍລິຫານ ມີຈຳນວນ 23.768 ລ້ານກີບ, 22.371 ລ້ານກີບ ແລະ 24.461 ລ້ານກີບ ຕາມລຳດັບ. ປີ 2021 ເພີ່ມຂຶ້ນຈາກປີ 2020 ແລະ 2019 ຈຳນວນ 2.090 ລ້ານກີບ ຫຼື ເທົ່າກັບ 9,34 % ແລະ ຈຳນວນ 693 ລ້ານກີບ ຫຼື ເທົ່າກັບ 2,92% ຕາມລຳດັບ. ສາເຫດທີ່ເຮັດໃຫ້ລາຍຈ່າຍບໍລິຫານໃນປີ 2021 ເພີ່ມຂຶ້ນ ເນື່ອງຈາກມີລາຍການເງິນແຮສຳລັບໜີ້ສົງໃສເກີດຂຶ້ນ ກວມເອົາ 9,49% ຂອງລາຍຈ່າຍບໍລິຫານໃນປີ 2021;

ສຳລັບ 9 ເດືອນປີ 2022 ລາຍຈ່າຍບໍລິຫານມີຈຳນວນ 14.217 ລ້ານກີບ ແລະ ເທົ່າກັບ 41,54% ຂອງລາຍຮັບຈາກການຂາຍ ແລະ ບໍລິການ. ລາຍຈ່າຍດັ່ງກ່າວຫຼຸດລົງຈາກໄລຍະດຽວກັນໃນປີ 2021 ຈຳນວນ 3.524 ລ້ານກີບ ຫຼື ເທົ່າກັບ 19,86%.

5. ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ

ກຳໄລ (ຂາດທຶນ) ສຸດທິຈາກອັດຕາແລກປ່ຽນ ໄດ້ສະແດງໃຫ້ເຫັນໃນລາຍການຂອງກຳໄລ ຫຼື ຂາດທຶນສຸດທິ ເນື່ອງຈາກການປ່ຽນແປງຂອງອັດຕາແລກປ່ຽນ. ບໍລິສັດ ຂາດທຶນຈາກອັດຕາແລກປ່ຽນໃນປີ 2019, 2020 ແລະ 2021 ຈຳນວນ 1.773 ລ້ານກີບ, 2.301 ລ້ານກີບ ແລະ 18.611 ລ້ານກີບ ຕາມລຳດັບ. ປີ 2021 ຂາດທຶນເພີ່ມຂຶ້ນຈາກປີ 2020 ແລະ 2019 ຈຳນວນ 16.310 ລ້ານກີບຫຼືເທົ່າກັບ 708,83% ແລະ ຈຳນວນ 16.838 ລ້ານກີບຫຼືເທົ່າກັບ 949,93%ຕາມລຳດັບ;

ສຳລັບ 9 ເດືອນ ປີ 2022 ແລະ 2021 ຂາດທຶນຈາກອັດຕາແລກປ່ຽນຈຳນວນ 28.506 ລ້ານກີບ ແລະ 1.886 ລ້ານກີບຕາມລຳດັບ. ຂາດທຶນຈາກອັດຕາແລກປ່ຽນ 9 ເດືອນ ປີ 2022 ເພີ່ມຂຶ້ນ 26.620 ລ້ານກີບ ຫຼື ເທົ່າກັບ 1.411,22% ເມື່ອທຽບໃສ່ 9 ເດືອນປີ 2021.

6. ຄ່າໃຊ້ຈ່າຍທາງການເງິນ

ລາຍຈ່າຍດອກເບ້ຍ ປີ 2019, 2020 ແລະ 2021 ມີຈຳນວນ 119 ລ້ານກີບ, 948 ລ້ານກີບ ແລະ 1.240 ລ້ານກີບ ຕາມລຳດັບ. ໃນປີ 2021 ເພີ່ມຂຶ້ນຈາກປີ 2020 ແລະ 2019 ຈຳນວນ 292 ລ້ານກີບ ຫຼື ເທົ່າກັບ 30,78% ແລະ ຈຳນວນ 1.121 ລ້ານກີບ ຫຼື ເທົ່າກັບ 937,84% ຕາມລຳດັບ;

ສຳລັບ 9 ເດືອນ ປີ 2022 ແລະ 2021 ລາຍຈ່າຍດອກເບ້ຍ ມີຈຳນວນ 376 ລ້ານກີບ ແລະ 946 ລ້ານກີບ ຕາມລຳດັບ. ລາຍຈ່າຍດັ່ງກ່າວຫຼຸດລົງ 570 ລ້ານກີບ ຫຼື ເທົ່າກັບ 60,26% ເມື່ອທຽບ 9 ເດືອນປີ 2022 ກັບ 9 ເດືອນປີ 2021.

❖ **ໃນລາຍງານຖານະການເງິນ**

1. ຊັບສິນລວມ

ສິ້ນສຸດວັນທີ 31 ທັນວາ 2021 ບໍລິສັດມີຊັບສິນທັງໝົດ 671.111 ລ້ານກີບ ຫຼຸດລົງຈາກປີ 2020 ແລະ 2019 ຈຳນວນ 18.695 ລ້ານກີບ ຫຼື ເທົ່າກັບ 2,71% ແລະ 29.106 ລ້ານກີບ ຫຼື ເທົ່າກັບ 4,16% ຕາມລຳດັບ;

ສິ້ນສຸດວັນທີ 30 ກັນຍາ 2022 ບໍລິສັດມີຊັບສິນທັງໝົດ 669.499 ລ້ານກີບ ຫຼຸດລົງຈາກ 30 ກັນຍາ 2021 ຈຳນວນ 4.281 ລ້ານກີບ ຫຼື ເທົ່າກັບ 6,64%.

2. ໜີ້ສິນລວມ

ສິ້ນສຸດວັນທີ 31 ທັນວາ 2021 ບໍລິສັດມີໜີ້ສິນທັງໝົດ 575.097 ລ້ານກີບ ເພີ່ມຂຶ້ນຈາກປີ 2020 ແລະ 2019 ຈຳນວນ 21.746 ລ້ານກີບ ຫຼື ເທົ່າກັບ 3,93% ແລະ 25.391 ລ້ານກີບ ຫຼື ເທົ່າກັບ 4,62% ຕາມລຳດັບ, ສາເຫດຂອງການເພີ່ມຂຶ້ນແມ່ນມາຈາກ ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆທີ່ເພີ່ມຂຶ້ນ;

ສິ້ນສຸດວັນທີ 30 ກັນຍາ 2022 ບໍລິສັດມີໜີ້ສິນທັງໝົດ 605.367 ລ້ານກີບ ເພີ່ມຂຶ້ນຈາກ 30 ກັນຍາ 2021 ຈຳນວນ 51.562 ລ້ານກີບ ຫຼື ເທົ່າກັບ 9,31% ເນື່ອງຈາກໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆທີ່ເພີ່ມຂຶ້ນ.

3. ທຶນເຈົ້າຂອງ

ສິ້ນສຸດວັນທີ 31 ທັນວາ 2021 ລວມທຶນເຈົ້າຂອງທັງໝົດ 96.014 ລ້ານກີບ ຫຼຸດລົງຈາກປີ 2020 ແລະ 2019 ຈຳນວນ 40.441 ລ້ານກີບ ຫຼື ເທົ່າກັບ 29,64% ແລະ 54.497 ລ້ານກີບ ຫຼື ເທົ່າກັບ 36,21% ຕາມລຳດັບ ສາເຫດຂອງການຫຼຸດລົງແມ່ນມາຈາກການຂາດທຶນສະສົມ;

ສິ້ນສຸດວັນທີ 30 ກັນຍາ 2022 ລວມທຶນເຈົ້າຂອງທັງໝົດ 64.132 ລ້ານກີບ ຫຼຸດລົງຈາກ 30 ກັນຍາ 2021 ຈຳນວນ 55.843 ລ້ານກີບ ຫຼື ເທົ່າກັບ 46,55%.

❖ **ໃນລາຍງານກະແສເງິນສົດ**

ກະແສເງິນສົດໃນປີ 2019, 2020 ແລະ 2021 ມີຈຳນວນ 401 ລ້ານກີບ, 2.289 ລ້ານກີບ ແລະ (1.200) ລ້ານກີບ ຕາມລຳດັບ. ໃນປີ 2021 ກະແສເງິນສົດສຸດທິຫຼຸດລົງ ເນື່ອງຈາກບໍລິສັດຂາດທຶນ, ການຫຼຸດລົງຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ ແລະ ການເພີ່ມຂຶ້ນຂອງດອກເບ້ຍຈ່າຍເຮັດໃຫ້ກະແສເງິນສົດຈາກກິດຈະກຳການດຳເນີນງານ ມີຈຳນວນ (357) ລ້ານກີບ, ບໍລິສັດໄດ້ລົງທຶນຊື້ທີ່ດິນ, ອາຄານ ແລະ ອຸປະກອນ ເຮັດໃຫ້ເງິນສົດສຸດທິຈາກກິດຈະກຳການລົງທຶນມີຈຳນວນ (842) ລ້ານກີບ ລວມທັງໃນປີ 2021 ບໍ່ມີກະແສເງິນສົດຈາກກິດຈະກຳການເງິນ (ບໍ່ມີການກູ້ຢືມເງິນເພີ່ມ).

ກະແສເງິນສົດໃນ 9 ເດືອນ ປີ 2022 ມີຈຳນວນ (86) ລ້ານກີບ ຫຼຸດລົງ 35 ລ້ານກີບ ຫຼື ເທົ່າກັບ 28,90% ເມື່ອ ທຽບໃສ 9 ເດືອນ ປີ 2021, ເຖິງແມ່ນວ່າບໍລິສັດມີກະແສເງິນສົດຈາກກິດຈະກຳການດຳເນີນງານ ມີຈຳນວນ 603 ລ້ານກີບ ແຕ່ບໍລິສັດມີການລົງທຶນ ຈຳນວນ (400) ລ້ານກີບ ແລະ ມີການຊຳລະການກູ້ຢືມ ຈຳນວນ (289) ລ້ານກີບ.

❖ **ອັດຕາສ່ວນທາງການເງິນທີ່ສຳຄັນ ປີ 2021-2019 ແລະ 9 ເດືອນ ປີ 2022**

ອັດຕາສ່ວນທາງການເງິນທີ່ສຳຄັນ	2019	2020	2021	9 ເດືອນ 2021	9 ເດືອນ 2022
ໄລຍະເວລາຂາຍສິນຄ້າສະເລ່ຍ (ວັນ)	36	49	47	60	47
ເລຍະເວລາຊຳລະໜີ້ເຈົ້າໜີ້ການຄ້າ (ວັນ)	1.400	2.060	3.026	3.236	3.165
ໄລຍະເວລາເກັບໜີ້ສະເລ່ຍ (ວັນ)	280	375	564	642	837
ອັດຕາສ່ວນສະພາບຄ່ອງ (ເທົ່າ)	0,20	0,25	0,21	0,22	0,35
ອັດຕາສ່ວນເງິນກູ້ຢືມຕໍ່ສ່ວນຂອງຜູ້ຖືຮຸ້ນ (ເທົ່າ)	0,25	0,32	0,49	0,37	0,81
ອັດຕາສ່ວນເງິນສົດຕໍ່ການສ້າງກຳໄລ (%)	18,55	14,47	0,91	1,20	(1,92)
ອັດຕາສ່ວນຄວາມສາມາດໃນການຊຳລະດອກເບ້ຍ (ເທົ່າ)	(130)	(15)	(33)	(17)	(85)
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (ເທົ່າ)	3,65	4,06	5,99	4,62	9,44
ອັດຕາສ່ວນໜີ້ສິນຕໍ່ຊັບສິນ (ເທົ່າ)	0,79	0,80	0,86	0,82	0,90
ອັດຕາສ່ວນກຳໄລຂັ້ນຕົ້ນ (%)	20,42	29,44	14,11	16,17	31,84
ອັດຕາສ່ວນກຳໄລຈາກການດຳເນີນງານ (%)	(33,84)	(35,05)	(156,96)	(74,79)	(92,05)
ອັດຕາສ່ວນກຳໄລສຸດທິ (%)	(34,10)	(37,59)	(161,92)	(79,34)	(93,14)
ອັດຕາສ່ວນຜົນຕອບແທນຕໍ່ຜູ້ຖືຮຸ້ນ (%)	(10,30)	(10,30)	(42,12)	(13,74)	(49,71)
ອັດຕາສ່ວນຜົນຕອບແທນຕໍ່ຊັບສິນລວມ (%)	(2,21)	(2,04)	(6,03)	(2,45)	(4,76)
ອັດຕາສ່ວນການໝຸນຂອງຊັບສິນ (ເທົ່າ)	0,06	0,05	0,04	0,03	0,05
ກຳໄລຕໍ່ຮຸ້ນ (ກີບ)	(392)	(355)	(1.022)	(417)	(806)
ເງິນປັນຜົນຕໍ່ຮຸ້ນ (ກີບ)	-	-	-	-	-
ມູນຄ່າຕາມບັນຊີ (ກີບຕໍ່ຮຸ້ນ)	3.805	3.449	2.427	3.033	1.621

ວິເຄາະອັດຕາສ່ວນທາງການເງິນທີ່ສຳຄັນ:

❖ **ອັດຕາສ່ວນສະພາບຄ່ອງ ແລະ ອັດຕາສ່ວນເງິນກູ້ຢືມຕໍ່ສ່ວນຂອງຜູ້ຖືຮຸ້ນ**

ອັດຕາສ່ວນສະພາບຄ່ອງ ປີ 2019, 2020, 2021 ແລະ 9 ເດືອນ 2022 ມີ 0,20 ເທົ່າ, 0,25 ເທົ່າ, 0,21 ເທົ່າ ແລະ 0,35 ເທົ່າ ຕາມລຳດັບ. ເປັນອັດຕາທີ່ຕ່ຳໃນລະດັບໜ້ອຍກວ່າ 1 ເທົ່າ ເຊິ່ງສະແດງວ່າບໍລິສັດມີຄວາມສ່ຽງຫຼາຍໃນການຜິດນັດຊຳລະໜີ້ໄລຍະສັ້ນ ແລະ ອັດຕາສ່ວນເງິນກູ້ຢືມຕໍ່ສ່ວນຂອງຜູ້ຖືຮຸ້ນ ໃນປີ ປີ 2019, 2022, 2021 ແລະ 9 ເດືອນ 2022 ມີ 0,25 ເທົ່າ, 0,32 ເທົ່າ, 0,49 ເທົ່າ ແລະ 0,81 ເທົ່າ ຕາມລຳດັບ, ການເພີ່ມຂຶ້ນຂອງອັດຕາສ່ວນເງິນກູ້ຢືມຕໍ່ສ່ວນຂອງຜູ້ຖືຮຸ້ນ ຍ້ອນບໍລິສັດໄດ້ກູ້ຢືມເງິນໄລຍະຍາວຈາກທະນາຄານເພີ່ມຂຶ້ນ ແລະ ບໍລິສັດຂາດທຶນສຸທິຕິດຕໍ່ກັນຫຼາຍປີ.

❖ ໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ

ໃນປີ 2019, 2020, 2021 ແລະ 9 ເດືອນ 2022 ບໍລິສັດມີໜີ້ສິນທັງໝົດ ຈຳນວນ 549.706 ລ້ານກີບ, 553.350 ລ້ານກີບ, 575.097 ລ້ານກີບ ແລະ 605.367 ລ້ານກີບ ຕາມລຳດັບ. ສ່ວນຂອງຜູ້ຖືຮຸ້ນ ຈຳນວນ 150.511 ລ້ານກີບ, 136.455 ລ້ານກີບ, 96.014 ລ້ານກີບ ແລະ 64.132 ລ້ານກີບ ຕາມລຳດັບ. ເຮັດໃຫ້ໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນເທົ່າກັບ 3,65 ເທົ່າ, 4,06 ເທົ່າ, 5,99 ເທົ່າ ແລະ 9,44 ເທົ່າ ຕາມລຳດັບ, ເຫັນໄດ້ວ່າບໍລິສັດມີອັດຕາສ່ວນໜີ້ສິນຕໍ່ທຶນເພີ່ມຂຶ້ນຕະຫຼອດໄລຍະເວລາ 3 ປີ 9 ເດືອນ ແລະ ຢູ່ໃນລະດັບສູງ ສະແດງວ່າບໍລິສັດມີຄວາມສ່ຽງທາງການເງິນສູງ.

❖ ຄວາມສາມາດໃນການສ້າງກຳໄລ

ອັດຕາສ່ວນກຳໄລຂັ້ນຕົ້ນປີ 2019, 2020, 2021 ແລະ 9 ເດືອນ 2022 ມີອັດຕາ 20,42%, 29,44%, 14,11% ແລະ 31,84% ຕາມລຳດັບ, ສຳລັບປີ 2021 ເປັນອັດຕາທີ່ຕ່ຳເນື່ອງຈາຍຮັບຫຼຸດລົງຫຼາຍຈາກ 2020 ແລະ 2019 ແຕ່ຕົ້ນທຶນຂາຍສູງກວ່າ 85,89 %.

ອັດຕາສ່ວນກຳໄລຈາກການດຳເນີນງານປີ 2019, 2020, 2021 ແລະ 9 ເດືອນ 2022 ມີອັດຕາ (33,84)%, (35,05)%, (156,96)% ແລະ (92,05)% ຕາມລຳດັບ. ເນື່ອງຈາກໃນແຕ່ລະປີມີລາຍຈ່າຍບໍລິຫານທີ່ສູງ ປີ 2019, 2020, 2021 ແລະ 9 ເດືອນ 2022 ມີອັດຕາສ່ວນ 52%, 60%,98 % ແລະ 42% ຂອງລາຍຮັບ ຕາມລຳດັບ ແລະ ຂາດທຶນຈາກອັດຕາແລກປ່ຽນທີ່ສູງຂຶ້ນມີອັດຕາສ່ວນ 4%, 6%, 75% ແລະ 83%ຂອງລາຍຮັບ ຕາມລຳດັບ.

❖ ອັດຕາສ່ວນຜົນຕອບແທນຕໍ່ຜູ້ຖືຮຸ້ນ

ສ່ວນຂອງຜູ້ຖືຮຸ້ນຫຼຸດລົງຢ່າງຕໍ່ເນື່ອງຈາກຈຳນວນກຳໄລສະສົມທີ່ຫຼຸດລົງຈົນຕິດລົບໃນປີ 2019, 2020, 2021 ແລະ 9 ເດືອນ 2022 ບໍລິສັດມີກຳໄລສະສົມ 37.446 ລ້ານກີບ, 23.390 ລ້ານກີບ, (17.051) ລ້ານກີບ ແລະ (64.132) ລ້ານກີບ ຕາມລຳດັບ, ສິ່ງຜົນໃຫ້ສ່ວນຂອງຜູ້ຖືຮຸ້ນຫຼຸດລົງ ໂດຍສະເພາະ 9 ເດືອນຕົ້ນປີ 2022 ສ່ວນຂອງຜູ້ຖືຮຸ້ນໜ້ອຍກວ່າທຶນຈົດທະບຽນ.

ຜ່ານການວິເຄາະຂໍ້ມູນທາງການເງິນຂອງບໍລິສັດໃນປີ 2019, 2020, 2021 ແລະ 9 ເດືອນ ປີ 2022 ເຫັນວ່າການດຳເນີນງານຂອງບໍລິສັດມີປະສິດທິຜົນໜ້ອຍ ເຫັນໄດ້ຈາກເອກະສານລາຍງານການເງິນມີລາຍຮັບຫຼຸດລົງ, ລາຍຈ່າຍບໍລິຫານສູງ, ຂາດທຶນຈາກອັດຕາແລກປ່ຽນສູງ, ຂາດທຶນຕະຫຼອດໄລຍະເວລາ 3 ປີ 9 ເດືອນ, ມີຂາດທຶນສະສົມເພີ່ມຂຶ້ນໃນແຕ່ລະປີ ເຮັດໃຫ້ບໍ່ສາມາດຈ່າຍເງິນປັນຜົນໃຫ້ນັກລົງທຶນ, ຍ້ອນສະຖານະການເງິນຂອງບໍລິສັດບໍ່ເຂັ້ມແຂງ ແລະ ເສດຖະກິດຂອງປະເທດທີ່ກຳລັງປະເຊີນກັບບັນຫາໄພເງິນເຟີ້ ເຮັດໃຫ້ລາຄາຮຸ້ນຂອງບໍລິສັດບໍ່ມີການຊື້ ຂາຍ ຫຼື ມີກໍ່ໜ້ອຍຫຼາຍຖ້າທຽບໃສ່ຮຸ້ນບໍລິສັດອື່ນ. ດັ່ງນັ້ນ ທີ່ປຶກສາອິດສະຫຼະ ຈຶ່ງເຫັນວ່າບໍລິສັດຄວນຈະສະເໜີຂໍອອກຈາກການເປັນບໍລິສັດຈົດທະບຽນຢູ່ຕະຫຼາດຫຼັກຊັບລາວ ເພື່ອມາປັບປຸງຄວາມພ້ອມດ້ານຕ່າງໆ ຂອງຕົນເອງໃຫ້ດີຂຶ້ນ.

II. ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ ກ່ຽວກັບຄວາມເໝາະສົມຂອງການຂໍຖອນຈົດທະບຽນຮຸ້ນ

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ("ທີ່ປຶກສາດ້ານການເງິນອິດສະຫຼະ") ໃນຖານະທີ່ປຶກສາດ້ານການເງິນອິດສະຫຼະ ໄດ້ຮັບການແຕ່ງຕັ້ງຈາກບໍລິສັດ ໃຫ້ເປັນທີ່ປຶກສາຂອງຜູ້ຖືຮຸ້ນໃນການນຳສະເໜີຄຳເຫັນຕໍ່ຜູ້ຖືຮຸ້ນກ່ຽວກັບການຂໍຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກ ຕລຊລ ແບບສະໝັກໃຈ ໂດຍທີ່ປຶກສາດ້ານການເງິນອິດສະຫຼະມີຄຳເຫັນກ່ຽວກັບຄວາມເໝາະສົມຂອງການຂໍຖອນຈົດທະບຽນຮຸ້ນຂອງບໍລິສັດ ດັ່ງນີ້:

2.1. ເຫດຜົນໃນການຖອນຈົດທະບຽນຮຸ້ນ

2.1.1 ການຮັກສາສະຖານະຂອງບໍລິສັດຈົດທະບຽນ

ປັດຈຸບັນອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 005/ຕລຊລ, ລົງວັນທີ 26 ພະຈິກ 2015, ພາກທີ 4 ການຖອນການຈົດທະບຽນຮຸ້ນ, ມາດຕາ 17 ເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ: ກໍານົດຈໍານວນ ຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍຕໍ່າກວ່າ 5% ຂອງຈໍານວນຮຸ້ນທັງໝົດ. ໂດຍອີງຕາມລາຍຊື່ຜູ້ຖືຮຸ້ນຂອງບໍລິສັດ ທີ່ມີລາຍຊື່ໃນປຶ້ມ ບັນຊີທະບຽນຜູ້ຖືຮຸ້ນ ວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ມີສາຍພົວພັນໃດໆກັບ TK Supports ຖື ຮຸ້ນລວມກັນຈໍານວນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈໍານວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ເຊິ່ງໜ້ອຍກວ່າ 5% ຂອງຈໍານວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ແລະ TK Supports ບໍ່ມີນະໂຍບາຍທີ່ ຈະຫຼຸດສັດສ່ວນການຖືຮຸ້ນຂອງຕົນ ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນບໍລິສັດ ຈຶ່ງເຮັດໃຫ້ການແຈກຢາຍ ຮຸ້ນເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ.

2.1.2. ຄວາມຈໍາເປັນໃນການລະດົມທຶນຜ່ານຕະຫຼາດຫຼັກຊັບລາວ

ຫຼັງຈາກທີ່ TK Supports ຊື້ຮຸ້ນບໍລິສັດໃນເດືອນ ພຶດສະພາ ປີ 2017, ຜົນການດໍາເນີນງານຂອງບໍລິສັດ ຕັ້ງແຕ່ປີ 2017 ເປັນຕົ້ນມາ ບໍລິສັດເກີດຂາດທຶນຕິດຕໍ່ກັນຍ້ອນຫຼາຍປັດໄຈເປັນຕົ້ນແມ່ນ: ມີຄູ່ແຂ່ງເກີດຂຶ້ນຫຼາຍແຫ່ງ ເຮັດໃຫ້ຜູ້ ຊົມໃຊ້ມີຫຼາຍທາງເລືອກ, ໄດ້ເກີດມີການລະບາດພະຍາດໂຄໂລນາໄວຣັດ 2019 (COVID -19) ຂຶ້ນໃນທ້າຍປີ 2019 ແລະ ແກ່ຍາວຕໍ່ເນື່ອງເຖິງ ກາງປີ 2022 ເຮັດໃຫ້ການດໍາເນີນທຸລະກິດພົບບັນຫາຫຍຸ້ງຍາກຫຼາຍດ້ານ, ບໍລິສັດໄດ້ຂາດທຶນຕິດຕໍ່ກັນ ເປັນເວລາ 6 ປີແລ້ວ (2017- 9/2022) ເຮັດໃຫ້ບໍລິສັດມີຂາດທຶນສະສົມ, ການຖືຄອງຮຸ້ນຂອງ TK Supports ຢູ່ໃນອັດຕາ ສ່ວນທີ່ສູງເຮັດໃຫ້ຮຸ້ນຂອງ ບໍລິສັດ ບໍ່ມີສະພາບຄ່ອງໃນການຊື້ ຂາຍ ໃນຕະຫຼາດຫຼັກຊັບລາວ, ການຂາດທຶນສະສົມຫຼາຍປີ ຕິດຕໍ່ກັນ ເຮັດໃຫ້ບໍລິສັດບໍ່ສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້ໃນໄລຍະຫຼາຍປີຕໍ່ໜ້າ ເນື່ອງຈາກວ່າການຂາດທຶນສະ ສົມຫຼາຍ ຈະສົ່ງຜົນໃນເວລາທີ່ບໍລິສັດມີກໍາໄລໃນປີ ເພາະວ່າບໍລິສັດຈະຕ້ອງໄດ້ນໍາກໍາໄລດັ່ງກ່າວໄປສະສາງຂາດທຶນສະສົມນັ້ນ ຈົນໝົດກ່ອນ ຈຶ່ງຈະສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້. ຖ້າໃນອານາຄົດ ບໍລິສັດມີຄວາມຈໍາເປັນຕ້ອງການລະດົມທຶນ ເພີ່ມ ບໍລິສັດອາດບໍ່ສາມາດລະດົມທຶນຜ່ານຕະຫຼາດຫຼັກຊັບລາວໄດ້ ເນື່ອງຈາກວ່າບໍລິສັດມີການຂາດທຶນສະສົມເປັນຈໍານວນ ຫຼາຍ ເຊິ່ງເຮັດໃຫ້ນັກລົງທຶນບໍ່ມີຄວາມເຊື່ອໝັ້ນຕໍ່ການດໍາເນີນທຸລະກິດຂອງບໍລິສັດ ແຕ່ບໍລິສັດສາມາດຫາແຫຼ່ງທຶນຈາກຜູ້ຖື ຮຸ້ນລາຍໃຫຍ່ໄດ້ຄື TK Supports; ການຖອນຈົດທະບຽນຮຸ້ນຂອງບໍລິສັດຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ຈະເພີ່ມ ຄວາມຄ່ອງຕົວໃນການບໍລິຫານຈັດການການດໍາເນີນທຸລະກິດ, ຫຼຸດພາລະໜ້າທີ່ ແລະ ຄ່າໃຊ້ຈ່າຍຂອງບໍລິສັດໃນອະນາຄົດ.

2.1.3. ຄວາມຄ່ອງຕົວໃນການບໍລິຫານ

ຫຼັງຈາກການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແລ້ວ ບໍລິສັດຈະບໍ່ ໄດ້ປະຕິບັດຕາມຂໍ້ຕົກລົງ ແລະ ກົດລະບຽບຕ່າງໆຂອງ ຕລຊລ ແລະ ສຄຄຊ ເປັນຕົ້ນໃນເລື່ອງການລາຍງານຕ່າງໆ, ການ ເປີດເຜີຍຂໍ້ມູນຕ່າງໆ, ການກວດສອບບັນຊີ ແລະ ເງື່ອນໄຂອື່ນໆ ຂອງບໍລິສັດຈົດທະບຽນ ເຮັດໃຫ້ບໍລິສັດມີຄວາມຄ່ອງຕົວ ໃນການບໍລິຫານເພີ່ມຂຶ້ນ.

2.2. ເງື່ອນໄຂຂອງການຖອນຈົດທະບຽນຮຸ້ນແບບສະໝັກໃຈ

2.2.1. ການໄດ້ຮັບອະນຸມັດເຫັນດີຈາກກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດ

ອີງຕາມໜັງສືແຈ້ງການຂອງ ຕລຊລ ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022. ການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຕ້ອງເປັນບໍລິສັດຈົດທະບຽນໃນ

ຕລຊລ ຢ່າງໜ້ອຍ 5 ປີຂຶ້ນໄປ ເຊິ່ງບໍລິສັດ ໄດ້ຈົດທະບຽນໃນ ຕລຊລ ທ້າຍປີ 2013 ມາຮອດປັດຈຸບັນແມ່ນເກືອບ 10 ປີ ແລ້ວ.

ຈັດກອງປະຊຸມສະພາບໍລິຫານ ເພື່ອຮັບຮອງມະຕິການຖອນຈົດທະບຽນຮຸ້ນແບບສະໝັກໃຈ ໃຫ້ນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດການຖອນຈົດທະບຽນຮຸ້ນ. ຊຶ່ງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 28 ມີນາ 2023 ໄດ້ມີມະຕິຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ເປັນທີ່ຮຽບຮ້ອຍແລ້ວ.

ຈັດກອງປະຊຸມຜູ້ຖືຮຸ້ນ ເພື່ອຂໍຮັບຮອງກ່ຽວກັບການຖອນຈົດທະບຽນຮຸ້ນແບບສະໝັກໃຈ ໂດຍຮ່ວມກັບທີ່ປຶກສາດ້ານການເງິນອິດສະຫຼະເພື່ອມີຄຳເຫັນຕໍ່ການຖອນຈົດທະບຽນຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນເພື່ອປະກອບການພິຈາລະນາ. ຊຶ່ງວາລະດັ່ງກ່າວຕ້ອງມີມະຕິຮັບຮອງໂດຍມີຄະແນນສຽງເຫັນດີຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທັງໝົດ ເຂົ້າຮ່ວມກອງປະຊຸມ ໂດຍບໍ່ນັບເອົາຮຸ້ນຂອງຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ. ພ້ອມນັ້ນ, ຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ ແມ່ນບໍ່ມີສິດລົງຄະແນນສຽງຕໍ່ວາລະດັ່ງກ່າວ. ໃນນັ້ນ, ຄະແນນສຽງບໍ່ເຫັນດີຕໍ່ວາລະດັ່ງກ່າວ ຕ້ອງບໍ່ເກີນ 5% ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ. ໂດຍບໍລິສັດໄດ້ກຳນົດໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 27 ເມສາ 2023 ເພື່ອຈະຮັບຮອງການຖອນຈົດທະບຽນຮຸ້ນ.

2.2.2. ການໄດ້ຮັບອະນຸມັດການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຈາກ ຕະຫຼາດຫຼັກຊັບລາວ

ພາຍຫຼັງທີ່ກອງປະຊຸມຜູ້ຖືຮຸ້ນມີມະຕິຮັບຮອງການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແລ້ວ, ບໍລິສັດຈະປະກອບເອກະສານຂໍຖອນຈົດທະບຽນຮຸ້ນແບບສະໝັກໃຈຫາ ຕລຊລ ໂດຍ ຕລຊລ ຈະແຈ້ງຜົນການພິຈາລະນາເອກະສານຂໍຖອນຈົດທະບຽນຮຸ້ນແບບສະໝັກໃຈ ໃຫ້ແກ່ບໍລິສັດຊາບຢ່າງເປັນລາຍລັກອັກສອນ ພາຍໃນ 30 ວັນຊື້ ຂາຍ ນັບຕັ້ງແຕ່ມື້ໄດ້ຮັບເອກະສານຢ່າງຖືກຕ້ອງ ແລະ ຄົບຖ້ວນ.

2.2.3. ການຍື່ນໜັງສືສະເໜີຂໍຊື້ຮຸ້ນ

ເມື່ອບໍລິສັດ ໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ ໃນການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແລ້ວ, ຜູ້ສະເໜີຊື້ຮຸ້ນ (TK Supports) ຈະຕ້ອງປະກອບເອກະສານການສະເໜີຊື້ຮຸ້ນຫາ ສຄຄຊ. ຊຶ່ງ ສຄຄຊ ຈະແຈ້ງຜົນການທົບທວນເອກະສານປະກອບການສະເໜີຊື້ ພາຍໃນ 10 ລັດຖະການ ນັບຕັ້ງແຕ່ມື້ໄດ້ຮັບເອກະສານຢ່າງຖືກຕ້ອງ ແລະ ຄົບຖ້ວນ. ຫຼັງຜ່ານການທົບທວນ ພາຍໃນ 30 ວັນ TK Supports ຈະຕ້ອງດຳເນີນການຊື້ຮຸ້ນທັງໝົດຈາກຜູ້ຖືຮຸ້ນລາຍຍ່ອຍໃນສ່ວນທີ່ບໍ່ໄດ້ຖືໂດຍ TK Supports ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ໃຫ້ສຳເລັດ.

2.3. ຜົນກະທົບຕໍ່ກັບບໍລິສັດ ພາຍຫຼັງການຖອນຈົດທະບຽນຮຸ້ນ

ພາຍຫຼັງການຖອນຈົດທະບຽນຮຸ້ນ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ສຳເລັດແລ້ວ. ບໍລິສັດຈະຍັງດຳເນີນທຸລະກິດຕໍ່ໄປຕາມປົກກະຕິ ພາຍໃຕ້ການຖືຮຸ້ນຂອງ TK Supports ເຊິ່ງການອອກຈາກການເປັນບໍລິສັດຈົດທະບຽນໃນ ຕລຊລ ຈະເຮັດໃຫ້ບໍລິສັດ ບໍ່ສາມາດໃຊ້ປະໂຫຍດຈາກການເປັນບໍລິສັດຈົດທະບຽນໄດ້ ເປັນຕົ້ນແມ່ນ: ໂອກາດໃນການລະດົມທຶນໃນຮູບແບບຕ່າງໆຜ່ານ ຕລຊລ ເພື່ອໃຊ້ໃນການຂະຫຍາຍທຸລະກິດໃນອະນາຄົດ. ການໄດ້ຮັບສິດຜົນປະໂຫຍດຈາກການຖືກຍົກເວັ້ນອາກອນລາຍໄດ້ຈາກການຂາຍ ຫຼື ໂອນຮຸ້ນ 2%. ອາດສົ່ງຜົນຕໍ່ພາບລັກ ແລະ ຄວາມໜ້າເຊື່ອຖືຕໍ່ຄູ່ຄ້າ ເຊິ່ງອາດສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຂອງບໍລິສັດໃນອະນາຄົດໄດ້. ເຖິງຢ່າງໃດກໍ່ຕາມ, ພາຍຫຼັງທີ່ບໍລິສັດ ສິ້ນສຸດສະຖານະເປັນບໍລິສັດຈົດທະບຽນແລ້ວ ບໍລິສັດຍັງສາມາດເຂົ້າຫາແຫຼ່ງເງິນກູ້ຢືມຈາກທະນາຄານ ຫຼື ສະຖາບັນການເງິນໄດ້ ແລະ ບໍລິສັດ ຍັງໄດ້ຮັບການສະໜັບສະໜຸນແຫຼ່ງເງິນທຶນຈາກຜູ້ຖືຮຸ້ນລາຍໃຫຍ່ກໍຄື TK Supports ລວມທັງການປັບໂຄງສ້າງພາຍໃນບໍລິສັດ ແລະ ການບໍລິຫານງານມີຄວາມຄ່ອງຕົວຫຼາຍຂຶ້ນ. ດັ່ງນັ້ນ, ຄາດວ່າການຖອນຈົດທະບຽນຮຸ້ນອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ຈະບໍ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການດຳເນີນທຸລະກິດ ຫຼື ສົ່ງຜົນກະທົບຕໍ່ບໍລິສັດຕາມແຜນການດຳເນີນທຸລະກິດໃນອະນາຄົດ.

2.4. ຜົນກະທົບຕໍ່ຜູ້ຖືຮຸ້ນລາຍຍ່ອຍ ພາຍຫຼັງການຖອນຈົດທະບຽນຮຸ້ນ

ພາຍຫຼັງບໍລິສັດຖອນຈົດທະບຽນຮຸ້ນອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ສຳເລັດ ຜູ້ຖືຮຸ້ນລາຍຍ່ອຍທີ່ຍັງຖືຮຸ້ນໃນບໍລິສັດຕໍ່ໄປ ຈະໄດ້ຮັບຜົນກະທົບດັ່ງນີ້:

- **ຂາດສະພາບຄ່ອງໃນການຊື້ ຂາຍຮຸ້ນ:** ຜູ້ຖືຮຸ້ນບໍ່ສາມາດຊື້ ຂາຍຮຸ້ນໄດ້ຢ່າງຄ່ອງຕົວ ເນື່ອງຈາກຮຸ້ນຂອງບໍລິສັດ ຈະບໍ່ສາມາດດຳເນີນການຊື້ ຂາຍ ຜ່ານ ຕລຊລ ເຊິ່ງເປັນຕະຫຼາດຂຶ້ນສອງທີ່ມີສະພາບຄ່ອງໄດ້ອີກ ແລະ ຈະສົ່ງຜົນເຮັດໃຫ້ຮຸ້ນບໍ່ມີລາຄາອ້າງອີງໃນການຊື້ ຂາຍ.

- **ຜົນຕອບແທນຈາກການລົງທຶນຖືກຈຳກັດລົງ:** ຈະຢູ່ໃນຮູບແບບຂອງເງິນປັນຜົນ ເທົ່ານັ້ນ, ເນື່ອງຈາກຜົນຕອບແທນໃນຮູບແບບອື່ນເຊັ່ນ: ຜົນຕອບແທນຈາກຈາກສ່ວນຕ່າງຂອງລາຄາຊື້ ຂາຍຮຸ້ນ (Capital Gain) ຈະຫຼຸດລົງຈາກການທີ່ຮຸ້ນບໍ່ມີຕະຫຼາດຂຶ້ນສອງທີ່ມີສະພາບຄ່ອງຮອງຮັບ ແລະ ບໍ່ມີລາຄາຕະຫຼາດມາອ້າງອີງໃນການຊື້ ຂາຍ.

- **ບໍ່ໄດ້ຮັບສິດຜົນປະໂຫຍດດ້ານອາກອນ:** ຜູ້ຖືຮຸ້ນທີ່ເປັນບຸກຄົນທົ່ວໄປ (Individual Investor) ຈະບໍ່ໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກເງິນປັນຜົນ 10% ແລະ ອາກອນລາຍໄດ້ຈາກການຂາຍ ຫຼື ໂອນຮຸ້ນ 2% ອີກຕໍ່ໄປ.

- **ໄດ້ຮັບຂໍ້ມູນຂ່າວສານທີ່ສຳຄັນ ຂອງບໍລິສັດຫຼຸດລົງ:** ເຖິງແມ່ນວ່າ ບໍລິສັດຈະຍັງມີສະຖານະເປັນບໍລິສັດມະຫາຊົນ ແຕ່ຜູ້ຖືຮຸ້ນຈະໄດ້ຮັບຂ່າວສານ ຫຼື ຂໍ້ມູນທີ່ສຳຄັນຂອງບໍລິສັດຫຼຸດລົງ ພາຍຫຼັງການຖອນຈົດທະບຽນຮຸ້ນອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແລ້ວ. ເນື່ອງຈາກບໍລິສັດບໍ່ມີພັນທະໃນການເປີດເຜີຍຂໍ້ມູນທາງການເງິນ ແລະ ຂ່າວສານອື່ນໆ ໃນຖານະເປັນບໍລິສັດຈົດທະບຽນຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ຂອງ ສຄຄຊ ແລະ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນຂອງ ຕລຊລ ອີກຕໍ່ໄປ.

- **ບໍ່ມີອຳນາດໃນການກວດສອບ ແລະ ຖ່ວງດຶງອຳນາດການບໍລິຫານຂອງຜູ້ຖືຮຸ້ນໃຫຍ່:** ໃນປະຈຸບັນ. TK Supports ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ໂດຍຖືຮຸ້ນໃນສັດສ່ວນ 91,49% ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ຖືຮຸ້ນຖືຮຸ້ນໃນສັດສ່ວນ 3,69%. ລວມເປັນ 95,18% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ. ສິ່ງຜົນເຮັດໃຫ້ TK Supports ມີອຳນາດ ແລະ ສາມາດຄວບຄຸມທິດທາງການດຳເນີນທຸລະກິດ ຕາມວາລະກອງປະຊຸມຜູ້ຖືຮຸ້ນໃນເລື່ອງທົ່ວໄປ ແລະ ໃນເລື່ອງທີ່ສຳຄັນໄດ້ ເຊັ່ນ: ການເພີ່ມທຶນ ຫຼື ຫຼຸດທຶນຈົດທະບຽນ, ການຄວບລວມກິດຈະການ ແລະ ການປ່ຽນແປງນະໂຍບາຍຕ່າງໆທີ່ສຳຄັນ ເປັນຕົ້ນ.

III. ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະຕໍ່ລາຄາສະເໜີຊື້ຮຸ້ນ

ການໃຫ້ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະຕໍ່ລາຄາສະເໜີຊື້ຮຸ້ນ ທີ່ປຶກສາດ້ານການເງິນອິດສະຫຼະໄດ້ພິຈາລະນາຄວາມເໝາະສົມຂອງລາຄາສະເໜີຊື້ຮຸ້ນຂອງບໍລິສັດ ໂດຍໃຊ້ຂໍ້ມູນປະກອບການພິຈາລະນາຈາກເອກະສານຂໍ້ມູນຂອງບໍລິສັດ, ສຳພາດຄະນະຜູ້ບໍລິຫານ, ພາກສ່ວນທີ່ກ່ຽວຂ້ອງ ແລະ ຂໍ້ມູນທີ່ເປີດເຜີຍຕໍ່ມວນຊົນຜ່ານເວັບໄຊຂອງ ຕລຊລ.

3.1. ສົມມຸດຕິຖານທີ່ສຳຄັນໃນການເຮັດຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ

ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະຂຶ້ນກັບສົມມຸດຕິຖານດັ່ງຕໍ່ໄປນີ້:

- ❖ ເອກະສານລາຍງານການເງິນ ແລະ ແຜນທຸລະກິດ ທີ່ເຮັດຂຶ້ນໂດຍຄະນະຜູ້ບໍລິຫານຂອງບໍລິສັດ ລວມທັງເອກະສານອື່ນໆທີ່ ທີ່ປຶກສາດ້ານການເງິນອິດສະຫຼະໄດ້ຮັບຈາກບໍລິສັດ ແລະ ການສຳພາດຄະນະຜູ້ບໍລິຫານຂອງບໍລິສັດ. ທີ່ປຶກສາດ້ານການເງິນອິດສະຫຼະ ເຫັນວ່າຂໍ້ມູນ ແລະ ເອກະສານທັງໝົດ ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ບໍ່ສົ່ງຜົນກະທົບຕໍ່ການວິເຄາະຂໍ້ມູນ;

- ບໍ່ມີເຫດການທີ່ເກີດຂຶ້ນແລ້ວ ຫຼື ກຳລັງເກີດຂຶ້ນ ຫຼື ມີຄວາມເປັນໄປໄດ້ວ່າຈະເກີດຂຶ້ນ ໃນລະຫວ່າງການເຮັດຄຳເຫັນທີ່ປຶກສາດ້ານການເງິນອິດສະຫຼະ ທີ່ສົ່ງຜົນກະທົບຕໍ່ຜົນການດຳເນີນງານ ຫຼື ສະຖານະທາງການເງິນ ຂອງບໍລິສັດ ລວມທັງເຫດການດັ່ງລຸ່ມນີ້:

  - ບໍ່ມີຄວາມສ່ຽງອື່ນໆທີ່ອາດສົ່ງຜົນໃຫ້ເກີດການຊັກຊ້າ ຫຼື ມີຜົນກະທົບຕໍ່ລາຄາສະເໜີຊື້;
  - ລາຍງານຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະໄດ້ເຮັດຂຶ້ນໂດຍອ້າງອີງຈາກສະພາວະທາງເສດຖະກິດ ແລະ ປັດໃຈອື່ນ ໃນເວລາຂອງການເຮັດເທົ່ານັ້ນ. ດັ່ງນັ້ນ, ທີ່ປຶກສາດ້ານການເງິນອິດສະຫຼະຈະບໍ່ສາມາດປະເມີນຜົນກະທົບທີ່ເກີດຈາກການປ່ຽນແປງຂອງສະຖານະການ ແລະ ອົງປະກອບຕ່າງໆ ພາຍຫຼັງໄລຍະເວລາໃນການສຶກສາ ແລະ ບໍ່ມີພາລະພັນທະໃນການປ່ຽນແປງ ແລະ ປັບປຸງຂໍ້ມູນດັ່ງກ່າວໃຫ້ເປັນປັດຈຸບັນ.

3.2. ຄວາມເໝາະສົມຂອງລາຄາສະເໜີຊື້ຮຸ້ນຂອງບໍລິສັດ

ການພິຈາລະນາຄວາມເໝາະສົມຂອງລາຄາສະເໜີຊື້ ທີ່ປຶກສາດ້ານການເງິນອິດສະຫຼະໄດ້ປະເມີນມູນຄ່າຮຸ້ນຂອງ ບໍລິສັດ ດ້ວຍວິທີຕ່າງໆຕາມໜັງສືແຈ້ງການຂອງ ຕລຊລ ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບ ເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022 ດັ່ງນີ້:

3.2.1. ລາຄາສູງສຸດພາຍໃນ 90 ວັນຊື້-ຂາຍ;

3.2.2. ລາຄາສະເລ່ຍຖ່ວງນ້ຳໜັກຂອງຮຸ້ນ 5 ວັນ;

3.2.3. ວິທີມູນຄ່າຕາມບັນຊີ (Book Value Approach);

3.2.4. ມູນຄ່າຍຸດຕິທຳ (Fair Value) ຂອງຮຸ້ນ ປະເມີນໂດຍທີ່ປຶກສາດ້ານການເງິນອິດສະຫຼະ

1. ວິທີມູນຄ່າຮຸ້ນຕາມລາຄາຕະຫຼາດ (Market Value approach);
2. ວິທີອັດຕາສ່ວນລາຄາຕໍ່ກັບມູນຄ່າຕາມບັນຊີ (Price to Book value ratio approach)
3. ວິທີອັດຕາສ່ວນລາຄາຕໍ່ກຳໄລສຸດທິຕໍ່ຮຸ້ນ (Price to Earnings ratio approach);
4. ວິທີມູນຄ່າປັດຈຸບັນສຸດທິຂອງກະແສເງິນສົດ (Discount cash flow approach: DCF).

ທີ່ປຶກສາດ້ານການເງິນອິດສະຫຼະໄດ້ພິຈາລະນາຄວາມເໝາະສົມຂອງວິທີການປະເມີນມູນຄ່າຮຸ້ນໃນແຕ່ລະວິທີດັ່ງນີ້:

ວິທີໃນການຄິດໄລ່ລາຄາສະເໜີຊື້ຮຸ້ນໃນຄັ້ງນີ້ ແມ່ນອີງຕາມການກຳນົດຂອງ ຕລຊລ ປະກອບມີທັງໝົດ 4 ວິທີຫຼັກ ເຊິ່ງແຕ່ລະວິທີມີລາຍລະອຽດດັ່ງລຸ່ມນີ້:

3.2.1. ວິທີລາຄາສູງສຸດພາຍໃນ 90 ວັນຊື້ ຂາຍ

ລາຄາສູງສຸດພາຍໃນ 90 ວັນຊື້ ຂາຍ ໄດ້ມາຈາກການເອົາລາຄາວັນຊື້ ຂາຍ ນັບແຕ່ວັນທີ 02/09/2022 ຫາ ວັນທີ 13/01/2023 ໄດ້ລາຄາສູງສຸດແມ່ນ **9.100 ກີບຕໍ່ຮຸ້ນ**, ໃນ 90 ວັນຊື້ ຂາຍ ດັ່ງກ່າວມີປະລິມານການຊື້ ຂາຍທັງໝົດ 2.900 ຮຸ້ນ, ລວມມູນຄ່າການຊື້ ຂາຍທັງໝົດ 15.346.000 ກີບ ແລະ ມູນຄ່າຕະຫຼາດທັງໝົດ 266.513 ລ້ານກີບ. ເມື່ອທຽບມູນຄ່າການຊື້ ຂາຍ ກັບມູນຄ່າຕະຫຼາດເທົ່າກັບ 0,0058%. ໃນນັ້ນລາຄາສູງສຸດ 9.100 ກີບຕໍ່ຮຸ້ນ ມີປະລິມານການຊື້ ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າຊື້ ຂາຍທັງໝົດ 910.000 ກີບ, ເມື່ອທຽບກັບມູນຄ່າຕະຫຼາດຂອງ LWPC ເທົ່າກັບ 0,0058% ລາຍລະອຽດດັ່ງລຸ່ມນີ້:

ລາຍການ	ລາຄາ	ປະລິມານ ຊື້-ຂາຍ (ຮຸ້ນ)	ມູນຄ່າ ຊື້-ຂາຍ (ກີບ)	ມູນຄ່າ ຕະຫຼາດ (ລ້ານກີບ)	ຈຳນວນ ຮຸ້ນຈົດທະບຽນ ຊື້-ຂາຍ(ຮຸ້ນ)	ມູນຄ່າຊື້-ຂາຍ ທຽບໃສ່ມູນຄ່າ ຕະຫຼາດ (%)
ສະເລ່ຍ 90 ວັນ	6.737	2.900	15.346.000	266.513	39.560.909	**0,0058%**
ສູງສຸດໃນ 90 ວັນ	**9.100**	100	910.000	360.004	39.560.909	**0,00025%**

3.2.2 ວິທີລາຄາສະເລ່ຍຖ່ວງນ້ຳໜັກຂອງຮຸ້ນ 5 ວັນ

ລາຄາສະເລ່ຍຖ່ວງນ້ຳໜັກຂອງຮຸ້ນ 5 ວັນ ໄດ້ມາຈາກການເອົາລາຄາວັນຊື້ ຂາຍ ນັບແຕ່ວັນທີ 09/01/2023 ຫາ ວັນທີ 13/01/2023 ໄດ້ລາຄາສະເລ່ຍຖ່ວງນ້ຳໜັກແມ່ນ **3.755 ກີບຕໍ່ຮຸ້ນ**, ມີປະລິມານການຊື້ ຂາຍທັງໝົດ 200 ຮຸ້ນ, ລວມມູນຄ່າການຊື້ ຂາຍທັງໝົດ 751.000 ກີບ ແລະ ມູນຄ່າຕະຫຼາດທັງໝົດ 148.551 ລ້ານກີບ, ເມື່ອທຽບມູນຄ່າການຊື້ ຂາຍ ກັບມູນຄ່າຕະຫຼາດເທົ່າກັບ 0,001% ລາຍລະອຽດດັ່ງຊຸມນີ້:

ໄລຍະເວລາ ສະເລ່ຍ ຍ້ອນຫັ້ນ (ວັນຊື້ ຂາຍ)	ລາຄາຕະຫຼາດ ກີບ/ຮຸ້ນ			ປະລິມານ ການຊື້ ຂາຍ ສະເລ່ຍຕໍ່ ມື້ (ຮຸ້ນ)	ລາຄາປິດ ສະເລ່ຍຖ່ວງ ນ້ຳໜັກ (ກີບ/ຮຸ້ນ)	ປະລິມານ ຊື-ຂາຍ (ຮຸ້ນ)	ມູນຄ່າ ຊື-ຂາຍ (ກີບ)	ມູນຄ່າ ຕະຫຼາດ (ລ້ານ ກີບ)	ມູນຄ່າຊື-ຂາຍທຽບໃສ ມູນຄ່າ ຕະຫຼາດ (%)
	ຕ່ຳສຸດ	ສູງສຸດ	ລາຄາປິດ ສະເລ່ຍ						
5 ວັນ	3.260	3.930	3.592	40	**3.755**	200	751.000	148.551	0,001%

3.2.3. ວິທີມູນຄ່າຕາມບັນຊີ (Book Value Approach)

ວິທີປະເມີນມູນຄ່າຮຸ້ນຕາມບັນຊີ ເປັນການປະເມີນຈາກມູນຄ່າຕາມບັນຊີຂອງຊັບສິນສຸດທິ (ຊັບສິນລວມລົບໜີ້ ສິນລວມ) ເທົ່າກັບສ່ວນຂອງຜູ້ຖືຮຸ້ນ ຫານ ຈຳນວນຮຸ້ນທັງໝົດ ຈະໄດ້ເປັນມູນຄ່າຮຸ້ນຕາມບັນຊີ ໂດຍອ້າງອີງຂໍ້ມູນຈາກ ເອກະສານລາຍງານການເງິນທີ່ຍັງບໍ່ຜ່ານການກວດສອບຂອງ LWPC ວັນທີ 30 ກັນຍາ 2022 ມີລາຍລະອຽດດັ່ງນີ້:

ລຳດັບ	ລາຍລະອຽດ	ມູນຄ່າ (ກີບ)
1	ທຶນຈົດທະບຽນ	79.121.818.000
2	ມູນຄ່າສ່ວນເກີນຮຸ້ນ	33.581.993.681
3	ສຳຮອງຈາກການຮ່ວມທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມດຽວກັນ	(12.996.191.989)
4	ຄ້າງສຳຮອງຕາມລະບຽບການ	13.357.587.776
5	ກຳໄລ (ຂາດທຶນ) ສະສົມ	(48.933.230.994)
ສ່ວນຂອງຜູ້ຖືຮຸ້ນທັງໝົດ		**64.131.976.474**
ຈຳນວນຮຸ້ນທີ່ຊຳລະແລ້ວທັງໝົດຂອງ LWPC (ຮຸ້ນ)		39.560.909
ມູນຄ່າຕາມບັນຊີ (ກີບຕໍ່ຮຸ້ນ)		**1.621**

ຈາກຕາຕາລາງເຫັນວ່າ ສ່ວນຂອງຜູ້ຖືຮຸ້ນທັງໝົດແມ່ນ 64.131.976.474 ກີບ, ຈຳນວນຮຸ້ນທັງໝົດ 39.560.909 ຮຸ້ນ ຄິດໄລ່ໄດ້ລາຄາຮຸ້ນ 1.621 ກີບຕໍ່ຮຸ້ນ. ວິທີປະເມີນມູນຄ່າຮຸ້ນຕາມບັນຊີເປັນການສະແດງມູນຄ່າທາງບັນຊີຂອງ LWPC ຮອດວັນທີ 30 ກັນຍາ 2022 ເທົ່ານັ້ນ ໂດຍບໍ່ໄດ້ສະທ້ອນເຖິງຄວາມສາມາດໃນການດຳເນີນງານໃນອານາຄົດ, ແນວໂນ້ມອຸດ ສາຫະກຳ, ຄວາມສາມາດໃນການແຂ່ງຂັນ ແລະ ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນຂອງ LWPC.

ນອກຈາກວິທີມູນຄ່າຕາມບັນຊີ (Book value Approach) ຍັງມີວິທີປັບປຸງມູນຄ່າຕາມບັນຊີ (Adjusted Book value Approach) ເຊິ່ງກໍລະນີຮຸ້ນ LWPC ບໍ່ສາມາດຄິດໄລ່ໄດ້ເນື່ອງຈາກວ່າ LWPC ບໍ່ມີການປະເມີນມູນຄ່າຊັບສິນຄືນ ໃໝ່ເຮັດໃຫ້ບໍ່ມີລາຍການສ່ວນເພີ່ມຈາກການປະເມີນມູນຄ່າຊັບສິນເກີດຂຶ້ນເປັນລາຍການປັບປຸງ.

3.2.4. ມູນຄ່າຍຸດຕິທຳ (Fair Value) ຂອງຮຸ້ນ ປະເມີນໂດຍທີ່ປຶກສາດ້ານການເງິນອິດສະຫຼະ

ມູນຄ່າຍຸດຕິທຳຂອງຮຸ້ນ LWPC ປະເມີນໂດຍທີ່ປຶກສາດ້ານການເງິນອິດສະຫຼະແມ່ນຈະພິຈາລະນາຈາກການປະເມີນມູນຄ່າຮຸ້ນຫຼາຍວິທີປະກອບກັນ ສາມາດສະຫຼຸບໄດ້ 4 ວິທີ ດັ່ງນີ້.


1. ວິທີມູນຄ່າຮຸ້ນຕາມລາຄາຕະຫຼາດ (Market Value approach)

ການຄິດໄລ່ລາຄາຮຸ້ນດ້ວຍວິທີມູນຄ່າຮຸ້ນຕາມລາຄາຕະຫຼາດ ເປັນການສະເລ່ຍຖ່ວງນ້ຳໜັກດ້ວຍປະລິມານການຊື້-ຂາຍຮຸ້ນຂອງ LWPC ໃນແຕ່ລະລາຄາ (Volume Weighted Average Price – "VWAP") ຍ້ອນຫຼັງ 7 ວັນ, 15 ວັນ, 30 ວັນ, 60 ວັນ, 90 ວັນ, 180 ວັນ, 270ວັນ ແລະ 360 ວັນ ນັບຈາກວັນທີ 04/08/2021 ຫາ 13/01/2023. ເຊິ່ງການປະເມີນມູນຄ່າດ້ວຍວິທີມູນຄ່າຮຸ້ນຕາມລາຄາຕະຫຼາດ ມີລາຍລະອຽດດັ່ງນີ້:

ໄລຍະເວລາສະເລ່ຍຍ້ອນຫຼັງ(ວັນຊື້ຂາຍ)	ລາຄາຕະຫຼາດ ກີບ/ຮຸ້ນ			ປະລິມານການຊື້ຂາຍສະເລ່ຍຕໍ່ມື້ (ຮຸ້ນ)	ລາຄາປິດສະເລ່ຍຖ່ວງນ້ຳໜັກ (ກີບ/ຮຸ້ນ)	ປະລິມານຊື້-ຂາຍ (ຮຸ້ນ)	ມູນຄ່າຊື້-ຂາຍ (ກີບ)	ມູນຄ່າຕະຫຼາດ (ລ້ານກີບ)	ມູນຄ່າຊື້-ຂາຍທຽບໃສ່ມູນຄ່າຕະຫຼາດ (%)
	ຕ່ຳສຸດ	ສູງສຸດ	ລາຄາປິດສະເລ່ຍ						
7 ວັນ	3.260	3.930	3.497	29	**3.755**	200	751.000	148.551	0,001%
15 ວັນ	3.260	3.930	3.371	13	**3.755**	200	751.000	148.551	0,001%
30 ວັນ	2.970	6.850	3.834	57	**3.868**	1.700	6.576.000	153.031	0,004%
60 ວັນ	2.970	9.100	6.212	32	**4.293**	1.900	8.156.000	169.820	0,005%
90 ວັນ	2.970	9.100	6.737	32	**5.292**	2.900	15.346.000	209.345	0,007%
120 ວັນ	2.970	9.100	5.931	43	**4.517**	5.100	23.037.000	178.699	0,013%
180 ວັນ	2.970	9.550	5.972	28	**4.517**	5.100	23.037.000	178.699	0,013%
270 ວັນ	2.970	9.900	6.969	21	**4.969**	5.700	28.322.000	196.569	0,014%
360 ວັນ	2.970	9.900	6.977	18	**5.353**	6.600	35.332.000	211.783	0,017%

ການປະເມີນມູນຄ່າຮຸ້ນຕາມລາຄາຕະຫຼາດ 7 - 360 ວັນຊື້ ຂາຍ ໄດ້ລາຄາຮຸ້ນຢູ່ໃນຊ່ວງ 3.755 - 5.353 ກີບຕໍ່ຮຸ້ນ, ເຊິ່ງເມື່ອພິຈາລະນາປະລິມານການຊື້ ຂາຍຮຸ້ນທັງໝົດຈາກ 360 ວັນຊື້ ຂາຍເທົ່າກັບ 6.600 ຮຸ້ນ, ລວມມູນຄ່າຊື້ ຂາຍທັງໝົດ 35.332.000 ກີບ ແລະ ມູນຄ່າຕະຫຼາດທັງໝົດ 211.783 ລ້ານກີບ. ເມື່ອທຽບມູນຄ່າການຊື້ ຂາຍ ກັບມູນຄ່າຕະຫຼາດ ເທົ່າກັບ 0,017%.

ວິທີປະເມີນມູນຄ່າຮຸ້ນຕາມລາຄາຕະຫຼາດ ຄວນຄິດໄລ່ຈາກລາຄາການຊື້ ຂາຍຮຸ້ນໃນຕະຫຼາດທີ່ມີສະພາບຄ່ອງ ແລະ ມີການຊື້ຂາຍເປັນປົກກະຕິ ຈຶ່ງຈະເຮັດໃຫ້ລາຄາສາມາດສະທ້ອນອຸປະສິງ-ອຸປະທານຂອງຮຸ້ນ. ແຕ່ລາຄາຮຸ້ນຂອງ LWPC ຈຳນວນ 360 ວັນຊື້ ຂາຍຍ້ອນຫຼັງ (ວັນທີ 04/08/2021 ຫາ 13/01/2023) ມີສະພາບຄ່ອງ ແລະ ປະລິມານການຊື້-ຂາຍຮຸ້ນທີ່ໜ້ອຍຫຼາຍ ສະແດງໃຫ້ເຫັນດັ່ງລຸ່ມນີ້:



2. ວິທີອັດຕາສ່ວນລາຄາຕໍ່ກັບມູນຄ່າຕາມບັນຊີ (Price to Book value ratio approach)

ການປະເມີນມູນຄ່າຮຸ້ນຕາມວິທີອັດຕາສ່ວນລາຄາຕໍ່ກັບມູນຄ່າຕາມບັນຊີ ເປັນການນຳມູນຄ່າຕາມບັນຊີຂອງ LWPC ຕາມໃນລາຍງານການເງິນລວມລ່າສຸດຮອດວັນທີ 30 ກັນຍາ 2022 ຄູນກັບຄ່າສະເລ່ຍຂອງອັດຕາສ່ວນລາຄາປຶກຕໍ່ມູນຄ່າຕາມບັນຊີ (Benchmark P/BV) ຂອງບໍລິສັດຈົດທະບຽນໃນ ຕລຊລ ທີ່ດຳເນີນທຸລະກິດໃກ້ຄຽງກັບ LWPC.

ໃນປະຈຸບັນ, ບໍລິສັດຈົດທະບຽນໃນ ຕລຊລ ທີ່ດຳເນີນທຸລະກິດຄືກັນ ຫຼື ໃກ້ຄຽງກັບ LWPC ມີພຽງ 1 ບໍລິສັດຄື: ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (VCL). ຊຶ່ງທີ່ປຶກສາດ້ານການເງິນອິດສະຫຼະ ໄດ້ນຳຄ່າ P/BV ຂອງທັງ 2 ບໍລິສັດ ມາຄຳນວນຫາຄ່າສະເລ່ຍຂອງອັດຕາສ່ວນລາຄາປຶກຕໍ່ມູນຄ່າຕາມບັນຊີຂອງກຸ່ມອຸດສະຫະກຳຍ້ອນຫຼັງ 7 ວັນ, 15 ວັນ, 30 ວັນ, 60 ວັນ, 90 ວັນ, 120 ວັນ, 180 ວັນ, 240 ວັນ, 270 ວັນ ແລະ 360 ວັນ. ວັນຊື້ ຂາຍ 04/08/2021 ຫາ 13/01/2023 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- *ບໍລິສັດທີ່ດຳເນີນທຸລະກິດໃກ້ຄຽງກັບ LWPC ປຽບທຽບສະຫຼຸບໄດ້ດັ່ງນີ້:*

ລຳດັບ	ບໍລິສັດ	ຊື່ຫຍໍ້	ລັກສະນະທຸລະກິດ
1	ກິລິສັດ ລາວເວີນ ມະຫາຊົນ	LWPC	ກິດຈະກຳຫຼັກຂອງບໍລິສັດ: ບໍລິການໃຫ້ເຊົ່າພື້ນທີ່ ແລະ ຫ້ອງ, ງານວາງສະແດງສິນຄ້າ, ບໍລິການຈັດງານລ້ຽງ, ກິດຈະການບັນເທີງ, ຮ້ານອາຫານ ແລະ ເຄື່ອງດື່ມ.
2	ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ	VCL	ພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອເຊົ່າ-ຂາຍ, ທຸລະກິດຂອງບໍລິສັດ VCL ປະກອບດ້ວຍການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າວຽງຈັນເຊັນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າຈາກປ້າຍໂຄສະນາ ແລະ ຄ່າເຊົ່າສຳນັກງານຫ້ອງການ.

ທີ່ມາ: LSX

- ສະຫຼຸບລາຍລະອຽດຂອງບໍລິສັດທີ່ນຳມາປຽບທຽບ:

ຊື່ຫຍໍ້	ມູນຄ່າຕະຫຼາດ (ລ້ານກີບ)	ຊັບສິນ (ລ້ານກີບ)	ລາຍຮັບ (ລ້ານກີບ)	ກຳໄລ/ຂາດທຶນສຸດທິ (ລ້ານກີບ)
	13 ມິຖຸນາ 2023	30 ກັນຍາ 2022	30 ກັນຍາ 2022	30 ກັນຍາ 2022
LWPC	155.474	669.499	34.228	(31.882)
VCL	160.448	203.359	8.164	4.518

ທີ່ມາ: LSX

- ຜົນການຄິດໄລ່ອັດຕາສ່ວນລາຄາປິດຕໍ່ມູນຄ່າຕາມບັນຊີ (Benchmark P/BV) ຂອງບໍລິສັດຈົດທະບຽນໃນ ຕລຊ ທີ່ດຳເນີນທຸລະກິດໃກ້ຄຽງກັບ LWPC ແລະ ໄດ້ລາຄາຮຸ້ນດັ່ງນີ້:

PBV ບໍລິສັດຈົດທະບຽນ	ໄລຍະເວລາສະເລ່ຍຍ້ອນຫຼັງ (ວັນຊື້ ຂາຍ)									
	7 ວັນ	15 ວັນ	30 ວັນ	60 ວັນ	90 ວັນ	120 ວັນ	180 ວັນ	240 ວັນ	270 ວັນ	360 ວັນ
LWPC	2,16	2,08	2,36	3,83	4,16	3,66	3,68	4,17	4,37	4,30
VCL	0,84	0,86	0,88	0,86	0,85	0,85	0,84	0,84	0,85	0,85
ສະເລ່ຍ	**1,50**	**1,47**	**1,62**	**2,35**	**2,50**	**2,25**	**2,26**	**2,51**	**2,61**	**2,57**
ລາຄາຮຸ້ນ	**2.431**	**2.382**	**2.634**	**3.804**	**4.059**	**3.655**	**3.670**	**4.062**	**4.225**	**4.173**

ອີງຕາມຂໍ້ມູນເອກະສານລາຍງານການເງິນ ວັນທີ 30 ກັນຍາ 2022 ມູນຄ່າຕາມບັນຊີຕໍ່ຮຸ້ນເທົ່າກັບ 1.621 ກີບ (ໄດ້ມາຈາກການຄິດໄລ່ດ້ວຍວິທີປະເມີນມູນຄ່າຮຸ້ນຕາມບັນຊີ) ຄຸນກັບຄ່າສະເລ່ຍຂອງອັດຕາສ່ວນລາຄາປິດຕໍ່ມູນຄ່າຕາມບັນຊີຂອງກຸ່ມອຸດສະຫະກຳ (Benchmark P/BV) ຕາມຕາຕະລາງຂ້າງເທິງຢູ່ໃນລະຫວ່າງ 1,50 ຫາ 2,57 ເທົ່າ ຈະໄດ້ມູນຄ່າຮຸ້ນໂດຍວິທີອັດຕາສ່ວນລາຄາຕໍ່ມູນຄ່າຕາມບັນຊີຢູ່ໃນລະຫວ່າງ 2.431 ຫາ 4.225 ກີບຕໍ່ຮຸ້ນ.

ເຖິງຢ່າງໃດກໍ່ຕາມ, ການປະເມີນດ້ວຍວິທີນີ້ ບໍ່ໄດ້ຄຳນຶງເຖິງຄວາມແຕກຕ່າງຂອງແຕ່ລະບໍລິສັດ ເຊັ່ນ: ໂຄງສ້າງລາຍຮັບ, ໂຄງສ້າງເງິນທຶນ, ຜົນການດຳເນີນທຸລະກິດໃນອະນາຄົດ ລວມທັ້ງພື້ນທີ່ໃຫ້ເຊົ່າໃນປະຈຸບັນ ແລະ ອະນາຄົດ ສິ່ງ ເຫຼົ່ານີ້ອາດໃຫ້ການປະເມີນດ້ວຍວິທີນີ້ອາດຈະບໍ່ສະທ້ອນມູນຄ່າຮຸ້ນທີ່ເໝາະສົມຂອງບໍລິສັດ.

3. ວິທີອັດຕາສ່ວນລາຄາຕໍ່ກຳໄລສຸດທິຕໍ່ຮຸ້ນ (Price to Earnings ratio approach)

ການປະເມີນໂດຍວິທີນີ້ ເປັນການນຳກຳໄລຕໍ່ຮຸ້ນ (EPS) ຂອງ LWPC ຄຸນກັບອັດຕາສ່ວນລາຄາຕໍ່ກຳໄລສຸດທິຕໍ່ຮຸ້ນ (Benchmark P/E) ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ດຳເນີນທຸລະກິດໃກ້ຄຽງກັບ LWPC.

ໃນປະຈຸບັນ, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ດຳເນີນທຸລະກິດຄ້າຍຄືກັນ ຫຼື ໃກ້ຄຽງກັບ LWPC ມີພຽງ 1 ບໍລິສັດຄື: ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (VCL). ຊຶ່ງທີ່ປຶກສາດ້ານການເງິນອິດສະຫຼະ ຈະນຳຄ່າ P/E ຂອງທັ້ງ 2 ບໍລິສັດມາຄຳນວນຫາຄ່າສະເລ່ຍຂອງອັດຕາສ່ວນລາຄາຕໍ່ກຳໄລສຸດທິຕໍ່ຮຸ້ນຂອງກຸ່ມອຸດສາຫະກຳຍ້ອນຫຼັງ 7 ວັນ, 30 ວັນ, 60 ວັນ, 90 ວັນ, 180 ວັນ ແລະ 360 ວັນ. ແຕ່ເນື່ອງຈາກຜົນການດຳເນີນງານຂອງ LWPC ແມ່ນຂາດທຶນ ຈຶ່ງບໍ່ສາມາດ ໃຊ້ວິທີນີ້ຄິດໄລ່ໄດ້.

4. ວິທີມູນຄ່າປັດຈຸບັນສຸດທິຂອງກະແສເງິນສົດ (Discount cash flow approach: DCF)

ການປະເມີນມູນຄ່າຮຸ້ນດ້ວຍວິທີມູນຄ່າປັດຈຸບັນສຸດທິຂອງກະແສເງິນສົດ ທີ່ປຶກສາດ້ານການເງິນໄດ້ນຳໃຊ້ການພິຈາລະນາມູນຄ່າກະແສເງິນສົດສຳລັບຜູ້ຖືຮຸ້ນ (Free Cash Flow to Equity "FCFE") ທີ່ຈະຄາດວ່າຈະເກີດຂຶ້ນໃນອະນາຄົດມາປັບດ້ວຍອັດຕາຄິດຫຼຸດ (Discount Rate) ທີ່ເໝາະສົມ ເຊິ່ງທີ່ປຶກສາດ້ານການເງິນອິດສະຫຼະ ໄດ້ຄິດໄລ່ອັດຕາສ່ວນຫຼຸດ (Discount Rate "K_e") ເພື່ອໃຊ້ເປັນອັດຕາຄິດຫຼຸດ ແລະ ຄິດໄລ່ຫາມູນຄ່າປະຈຸບັນສຸດທິຂອງກະແສເງິນສົດສຳລັບຜູ້ຖືຮຸ້ນ "FCFE" ຈາກການຄາດຄະເນກະແສເງິນສົດຂອງກິດຈະການ ໃນໄລຍະ 5 ປີຂ້າງໜ້າ (ນັບຕັ້ງແຕ່ປີ 2022 ຫາ 2026) ເຊິ່ງເປັນໄລຍະເວລາທີ່ LWPC ສາມາດຄາດຄະເນອະນາຄົດ ແລະ ກຳນົດແຜນທຸລະກິດໄດ້. ໂດຍພາຍໃຕ້ສົມມຸດຕິຖານທີ່ວ່າທຸລະກິດຂອງ LWPC ຈະຍັງດຳເນີນຕໍ່ໄປຢ່າງຕໍ່ເນື່ອງ (Going concern basis) ບໍ່ມີການປ່ຽນແປງທີ່ສຳຄັນເກີດຂຶ້ນ ແລະ ເປັນໄປພາຍໃຕ້ພາວະເສດຖະກິດ ແລະ ສະຖານະການໃນປັດຈຸບັນ. ລວມທັງບໍ່ມີຜົນກະທົບທີ່ມີປະເດັ່ນສຳຄັນຈາກເຫດການໄພພິບັດທາງທຳມະຊາດໃນອະນາຄົດ.

ພ້ອມກັນນັ້ນ, ທີ່ປຶກສາດ້ານການເງິນອິດສະຫຼະໄດ້ຄາດຄະເນທາງການເງິນ ໂດຍອີງຕາມຂໍ້ມູນ ແລະ ສົມມຸດຕິຖານທີ່ໄດ້ຮັບຈາກ LWPC, ການສຳພາດຜູ້ບໍລິຫານ ແລະ ພາກສ່ວນທີ່ກ່ຽວຂ້ອງ. ຖ້າຫາກພາວະເສດຖະກິດ ແລະ ປັດໃຈພາຍນອກອື່ນໆ ທີ່ມີຜົນກະທົບຕໍ່ການດຳເນີນງານຂອງ LWPC ລວມທັງສະຖານະການພາຍໃນບໍລິສັດມີການປ່ຽນແປງໄປຢ່າງມີປະເດັ່ນສຳຄັນຈາກສົມມຸດຕິຖານທີ່ໄດ້ກຳນົດມູນຄ່າທີ່ປະເມີນໄດ້ຕາມວິທີນີ້ຈະປ່ຽນແປງໄປເຊັ່ນດຽວກັນ. ສົມມຸດຕິຖານຫຼັກທີ່ໃຊ້ໃນການຄາດຄະເນ ສຳລັບການດຳເນີນທຸລະກິດໃນປະຈຸບັນຂອງ LWPC ມີດັ່ງນີ້:

1) ລາຍຮັບຂອງບໍລິສັດ

ລາຍຮັບລວມຂອງບໍລິສັດມາຈາກ ລາຍຮັບຈາກການໃຫ້ເຊົ່າ, ລາຍຮັບຈາກການວາງສະແດງ ແລະ ລາຍຮັບອື່ນໆ ເຊິ່ງທີ່ປຶກສາດ້ານການເງິນອິດສະ ໄດ້ຄາດຄະເນລາຍຮັບລວມມີອັດຕາເຕີບໂຕຄົງທີ່ ເທົ່າກັບ 10% ຕະຫຼອດໄລຍະຂອງການຄາດຄະເນ ພາຍໃຕ້ຂໍ້ສົມມຸດຕິຖານລາຍຮັບດັ່ງລຸ່ມນີ້:

1.1. ລາຍຮັບຈາກການໃຫ້ເຊົ່າ

ລາຍຮັບຈາກການໃຫ້ເຊົ່າ ມາຈາກລາຍຮັບການເຊົ່າຫ້ອງໃນຕຶກ ແລະ ນອກຕຶກ ຂອງສູນວາງສະແດງສິນຄ້າໄອເຕັກ, ສູນການຄ້າໄອເຕັກມໍ, ສູນການຄ້າທີ່ງຂັນຄຳ ລວມທັງ ສູນການຄ້າໄອເຕັກສະຫວັນ ທີ່ມີສັນຍາເຊົ່ານັບຕັ້ງແຕ່ໄລຍະ 1 ເດືອນຂຶ້ນໄປ ລາຍຮັບດັ່ງກ່າວຄາດວ່າຈະເພີ່ມຂຶ້ນໃນແຕ່ລະປີ ເນື່ອງມາຈາກສະພາບເສດຖະກິດມີແນວໂນ້ມດີຂຶ້ນ ສອດຄ່ອງກັບແຜນຂອງບໍລິສັດ ທີ່ຈະຍົກລະດັບການບໍລິການໃຫ້ໄດ້ມາດຕະຖານສາກົນ, ຂະຫຍາຍໂຊນຕ່າງໆ ເພື່ອເພີ່ມຖານລູກຄ້າໃໝ່ ແລະ ສືບຕໍ່ຮັກສາຖານລູກຄ້າເກົ່າ. ພ້ອມດຽວກັນນັ້ນ, ບໍລິສັດຄາດວ່າລາຍຮັບຈາກຄ່າເຊົ່າຈະເພີ່ມສູງຂຶ້ນ ຈາກຖານລູກຄ້າລາຍໃຫຍ່ທີ່ຈະເຂົ້າມາເຊົ່າພື້ນທີ່ໃນອະນາຄົດ.

1.2. ລາຍຮັບຈາກການວາງສະແດງ:

ລາຍຮັບຈາກການວາງສະແດງ ແມ່ນລາຍຮັບຈາກການຈັດງານວາງສະແດງທີ່ຈັດຂຶ້ນໂດຍລູກຄ້າ ລວມທັງງານວາງສະແດງທີ່ບໍລິສັດຈັດຂຶ້ນເອງ ເຊິ່ງໄດ້ມີການເກັບຄ່າເຊົ່າຮ້ານຂາຍເຄື່ອງຈາກລູກຄ້າຕາມໄລຍະເວລາຂອງງານນັ້ນ ລາຍຮັບດັ່ງກ່າວຄາດວ່າຈະເພີ່ມຂຶ້ນໃນແຕ່ລະປີເຊັ່ນດຽວກັນ ເນື່ອງຈາກບໍລິສັດໄດ້ເພີ່ມສ່ວນມີສ່ວນຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນການຈັດງານວາງສະແດງສິນຄ້າຜະລິດຕະພັນລາວ ແລະ ງານສະແດງສິນຄ້າທີ່ມາຈາກປະເທດເພື່ອນບ້ານ, ເນັ້ນໃສ່ການວາງແຜນການຕະຫຼາດຫຼາກຫຼາຍຮູບແບບ ໂດຍສະເພາະແມ່ນການການໂຄສະນາຜ່ານຫຼາຍຊ່ອງທາງ ແລະ ສ້າງກິດຈະກຳຕ່າງໆພາຍໃນງານ ເພື່ອສ້າງຄວາມຮັບຮູ້ ແລະ ດຶງດູດລູກຄ້າໃຫ້ເຂົ້າມາໃຊ້ບໍລິການ.

1.3. ລາຍຮັບອື່ນໆ:

ລາຍຮັບອື່ນໆ ແມ່ນລາຍຮັບຈາກການບໍລິການສອນນ້ຳ ທີ່ໄດ້ຈາກການຂາຍປີ້ໃຫ້ລູກຄ້າໃນການເຂົ້າໃຊ້ບໍລິການເຄື່ອງຫຼິ້ນສອນນ້ຳ ແລະ ລາຍຮັບຄ່າບໍລິການທີ່ໄດ້ຈາກ ຄ່າບຳລຸງຮັກສາລະບົບຕ່າງໆ ຈາກລູກຄ້າທີ່ເຊົ່າຫ້ອງ ລາຍຮັບດັ່ງກ່າວຄາດວ່າຈະເພີ່ມຂຶ້ນລະດັບໜຶ່ງໃນແຕ່ລະປີ ຈາກການລົງທຶນສ້ອມແປງສອນນ້ຳໃໝ່ໃຫ້ໄດ້ມາດຕະຖານ, ຈັດສັນພື້ນທີ່ໃຫ້ຮ້ານຄ້າສາມາດເຊົ່າສະຖານທີ່ໄດ້ຫຼາຍຂຶ້ນ ເພື່ອດຶງດູດລູກຄ້າທຸກຊ່ວງອາຍຸທີ່ເຂົ້າມາໃຊ້ບໍລິການ ແລະ ສ້າງຄວາມສະດວກສະບາຍໃຫ້ລູກຄ້າທີ່ມາໃຊ້ບໍລິການ ໃຫ້ສາມາດຊື້ບັດຂາຍບັດສອນນ້ຳຜ່ານທາງ App Yespls ໄດ້ອີກດ້ວຍ.

2) ຕົ້ນທຶນໃນການຂາຍ ແລະ ການບໍລິການ (ບໍ່ລວມຄ່າຫຼຸ້ຍຫ້ຽນ)

ຕົ້ນທຶນຂາຍ ປະກອບມີ ຕົ້ນທຶນຂອງການຊື້ສິນຄ້າ ແລະ ການບໍລິການ, ຄ່າໃຊ້ຈ່າຍຂອງພະນັກງານ ແລະ ພັນປະໂຫຍດອື່ນໆ ເຊິ່ງຕົ້ນທຶນໃນການຂາຍ ແລະ ການບໍລິການ ໃນປີ 2020 – 2021 ເທົ່າກັບ 41% ແລະ 37% ຂອງລາຍຮັບລວມ ຕາມລຳດັບ; ເຊິ່ງຕົ້ນທຶນໃນການຂາຍ ແລະ ການບໍລິການສະເລ່ຍຕໍ່ລາຍຮັບໃນອະນາຄົດ ຄາດການໄວ້ຄົງທີ່ໃນອັດຕາ 35% ນັບແຕ່ປີ 2022 – 2026 ຫຼຸດລົງໃນລະດັບໜຶ່ງ ເນື່ອງຈາກແຜນໃນການຄວບຄຸມຕົ້ນທຶນຈາກການຫຼຸດຄ່າໃຊ້ຈ່າຍທີ່ບໍ່ຈຳເປັນອອກ ແລະ ສະພາບການດຳເນີນທຸລະກິດທີ່ຄາດວ່າຈະມີແນວໂນ້ມດີຂຶ້ນ.

3) ລາຍຈ່າຍບໍລິຫານ (ບໍ່ລວມຄ່າຫຼຸ້ຍຫ້ຽນ)

ລາຍຈ່າຍບໍລິຫານ ປະກອບມີ: ຄ່າໃຊ້ຈ່າຍຂອງພະນັກງານ ແລະ ພັນປະໂຫຍດອື່ນໆ, ເງິນເຫຼືອສັນຍາປີ, ຄ່າໃຊ້ຈ່າຍໃນການສ້ອມແປງ ແລະ ບຳລຸງຮັກສາ ໂດຍທີ່ປຶກສາດ້ານການເງິນອິດສະຫຼະໄດ້ວິເຄາະລາຍຈ່າຍບໍລິຫານ ໃນເອກະສານລາຍງານການເງິນຍ້ອນຫຼັງ ແລະ ອີງໃສ່ແຜນການເຕີບໂຕຂອງລາຍຮັບ ຈາກສະພາບເສດຖະກິດທີ່ມີແນວໂນ້ມດີຂຶ້ນ ແລະ ແຜນໃນການຄວບຄຸມລາຍຈ່າຍບໍລິຫານຂອງ LWPC. ດັ່ງນັ້ນ, ທີ່ປຶກສາດ້ານການເງິນອິດສະຫຼະ ຈຶ່ງກຳນົດໃຫ້ລາຍຈ່າຍບໍລິຫານມີອັດຕາການເຕີບໂຕຄົງທີ່ ເທົ່າກັບ 1% ຕະຫຼອດໄລຍະຂອງການຄາດຄະເນ.

4) ລາຍຈ່າຍຄ່າຫຼຸ້ຍຫ້ຽນ

ການຄາດຄະເນຄ່າຫຼຸ້ຍຫ້ຽນໃນອະນາຄົດ ແມ່ນອີງຕາມນະໂຍບາຍຂອງບໍລິສັດ ທີ່ຖືກຄິດໄລ່ບົນພື້ນຖານເສັ້ນຊື່ ໂດຍຄ່າຫຼຸ້ຍຫ້ຽນ ຈະຖືກຄຳນວນຕາມອາຍຸການໃຊ້ງານຄົງເຫຼືອຂອງຊັບສິນແຕ່ລະປະເພດ ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

ຊັບສິນ	ໄລຍະເວລາຄິດໄລ່ຄ່າຫຼຸ້ຍຫ້ຽນ (ປີ)
ອາຄານ	35-50
ເຄື່ອງຈັກ ແລະ ອຸປະກອນ	10
ພາຫະນະ	5
ເຟີນີເຈີ ແລະ ສິ່ງຕິດຕັ້ງ	10

5) ເງິນທຶນໝຸນວຽນ

ການຄາດຄະເນເງິນທຶນໝຸນວຽນ ຄຳນວນຈາກການຄາດຄະເນຊັບສິນໝຸນວຽນ (Working Capital Asset) ເຊິ່ງປະກອບດ້ວຍ: ລູກໜີ້ການຄ້າ ແລະ ລູກໜີ້ອື່ນໆ, ເຄື່ອງໃນສາງ ແລະ ຄຳນວນຈາກຄາດຄະເນໜີ້ສິນໝຸນວຽນ (Working Capital Liabilities) ເຊິ່ງປະກອບດ້ວຍ: ເຈົ້າໜີ້ການຄ້າ ແລະ ເຈົ້າໜີ້ອື່ນໆ. ໂດຍອີງຕາມການສຳພາດຜູ້ບໍລິຫານ LWPC ຍັງສືບຕໍ່ແນວທາງການດຳເນີນທຸລະກິດແບບເດີມ ສິ່ງຜົນເຮັດໃຫ້ອັດຕາສ່ວນລູກໜີ້ການຄ້າ, ເຄື່ອງໃນສາງ ແລະ ເຈົ້າໜີ້ການ

ຄ້າ ຢູ່ໃນຫລວງພະບາງ ບໍ່ມີການປ່ຽນແປງຈາກທີ່ຜ່ານມາ ດັ່ງນັ້ນ, ທີ່ປຶກສາດ້ານການເງິນອິດສະຫຼະ ຈຶ່ງກຳນົດໃຫ້ອັດຕາສ່ວນດັ່ງກ່າວ ເທົ່າກັບຄ່າສະເລ່ຍ 5 ປີຍ້ອນຫຼັງນັບແຕ່ປີ 2017 – 2021 ເຊິ່ງສາມາດສະຫຼຸບໄດ້ດັ່ງນີ້:

ລາຍການ	ຂໍ້ມູນໃນອະດີດ					ຄາດຄະເນ	ໝາຍເຫດ
	2017	2018	2019	2020	2021	2022-2026	
ລູກໜີ້ການຄ້າ ແລະ ລູກໜີ້ອື່ນໆ	83	185	280	375	564	297	ໄລຍະເວລາເກັບໜີ້ສະເລ່ຍ (ວັນ)
ເຄື່ອງໃນສາງ	51	39	36	49	47	44	ໄລຍະເວລາຂາຍສິນຄ້າສະເລ່ຍ (ວັນ)
ເຈົ້າໜີ້ການຄ້າ ແລະ ເຈົ້າໜີ້ອື່ນໆ	1.113	1.256	1.400	2.060	3.026	1.771	ໄລຍະເວລາຊຳລະໜີ້ສະເລ່ຍ (ວັນ)

6) ຄ່າໃຊ້ຈ່າຍໃນການລົງທຶນ

ຄ່າໃຊ້ຈ່າຍດ້ານການລົງທຶນ ປະກອບດ້ວຍເງິນລົງທຶນໃນການສ້ອມແປງຕຶກອາຄານໃຫ້ຢູ່ໃນສະພາບທີ່ໄດ້ມາດຕະຖານ, ປັບປຽນອຸປະກອນຕົກແຜ່ນກັບການບໍລິຫານ ແລະ ປັບປຸງອຸປະກອນເຄື່ອງຫຼິ້ນສວນນ້ຳ ເພື່ອດຶງດູດລູກຄ້າທັງພາຍໃນ ແລະ ຕ່າງປະເທດ ອີງຕາມຂໍ້ມູນທີ່ໄດ້ຮັບຈາກ LWPC ແລະ ວິເຄາະຂໍ້ມູນຈາກຄ່າໃຊ້ຈ່າຍໃນການລົງທຶນໃນປີ 2020 – 2021 ເຫັນວ່າບໍ່ມີການປ່ຽນແປງທີ່ສຳຄັນ ດັ່ງນັ້ນ, ທີ່ປຶກສາດ້ານການເງິນອິດສະຫຼະ ຈຶ່ງຄາດຄະເນຄ່າໃຊ້ຈ່າຍໃນການລົງທຶນໃນອະນາຄົດ ນັບແຕ່ປີ 2022 – 2026 ຄືງທີ່ ດັ່ງລາຍລະອຽດລຸ່ມນີ້:

ຫົວໜ່ວຍ: ລ້ານກີບ	2022F	2023F	2024F	2025F	2026F
ຄ່າໃຊ້ຈ່າຍລົງທຶນ	4.000	4.000	4.000	4.000	4.000

7) ເງິນກູ້ຢືມ

ອີງຕາມເອກະສານລາຍງານການເງິນໄຕມາດ 3 ປີ 2022, ບໍລິສັດມີຍອດໜີ້ເງິນກູ້ຢືມໄລຍະສັ້ນ ແລະ ໄລຍະຍາວ ຈາກສະຖາບັນການເງິນ ຈຳນວນ 21.596.220.436 ກີບ ພາຍຫຼັງທີ່ໄດ້ຮັບການຜ່ອນຜັນໃຫ້ຊຳລະແຕ່ດອກເບ້ຍຈາກສະຖາບັນການເງິນໃນໄລຍະຜ່ານມາແລ້ວ ບໍລິສັດຈະເລີ່ມຊຳລະທັງຕົ້ນທຶນ ແລະ ດອກເບ້ຍນັບແຕ່ເດືອນ ມະຖິນ 2022 ເປັນຕົ້ນໄປ ຈົນຄົບກຳນົດໄລຍະເວລາຂອງການຊຳລະ.

8) ມູນຄ່າຂອງກະແສເງິນສົດຫຼັງຈາກຊ່ວງໄລຍະເວລາຄາດຄະເນໄວ້ (Terminal Value)

ມູນຄ່າຂອງກະແສເງິນສົດຫຼັງຈາກຊ່ວງໄລຍະເວລາຄາດຄະເນ (Terminal Value) ຄຳນວນຈາກກະແສເງິນສົດສຸດທ້າຍຂອງສ່ວນຜູ້ຖືຮຸ້ນໃນປີສຸດທ້າຍຂອງໄລຍະການຄາດຄະເນ ມີສູດຄິດໄລ່ດັ່ງລຸ່ມນີ້:

$$\text{Terminal Value} = FCF^* (1+g) / (K_e - g)$$

ໂດຍທີ່:

g = ອັດຕາການຂະຫຍາຍຕົວຂອງກະແສເງິນສົດ ຫຼັງຈາກປີສຸດທ້າຍຂອງການຄາດຄະເນ ເຊິ່ງທີ່ປຶກສາດ້ານການເງິນອິດສະຫຼະກຳນົດໃຫ້ເທົ່າກັບ 2% ຕໍ່ປີ;

K_e = ຕົ້ນທຶນຂອງທຶນ ຫຼື ອັດຕາຜົນຕອບແທນທີ່ຜູ້ຖືຮຸ້ນຕ້ອງການ.

9) ອັດຕາຄິດຫຼຸດ (Discount Rate)

ໃນການກຳນົດອັດຕາຄິດຫຼຸດ (Discount Rate) ທີ່ໃຊ້ໃນການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດສຸດທິຂອງຜູ້ຖືຮຸ້ນ ທີ່ປຶກສາດ້ານການເງິນອິດສະຫຼະ ໃຊ້ອັດຕາຕົ້ນທຶນຂອງທຶນ ຫຼື ອັດຕາຜົນຕອບແທນທີ່ຜູ້ຖືຮຸ້ນຕ້ອງການ (K_e) ໂດຍຄິດໄລ່ຈາກສູດ Bond Yield Plus Premium ດັ່ງນີ້:

$$K_e = \text{Bond Yield} + \text{Risk Premium}$$

ໂດຍທີ່:

Bond Yield = ຕົ້ນທຶນທາງການເງິນຂອງຮຸ້ນກູ້ທີ່ LWPC ອອກຈຳໜ່າຍ ແຕ່ເນື່ອງຈາກບໍລິສັດບໍ່ເຄີຍອອກຮຸ້ນກູ້ ດັ່ງນັ້ນ, ທີ່ປຶກສາດ້ານການເງິນອິດສະຫຼະ ຈຶ່ງໃຊ້ຕົ້ນທຶນ ຫຼື ອັດຕາຜົນຕອບແທນຂອງພັນທະບັດລັດຖະບານໄລຍະຍາວ ອາຍຸ 10 ປີ ເທົ່າກັບ 8,15%;

Risk Premium = ສ່ວນເພີ່ມຂອງຜົນຕອບແທນເພື່ອຊົດເຊີຍຄວາມສ່ຽງຈາກການລົງທຶນ ເຊິ່ງທີ່ປຶກສາການເງິນອິດສະຫຼະ ໃຊ້ອັດຕາເງິນເຟີ້ສະເລ່ຍໃນໄລຍະ 10 ປີ ຍ້ອນຫຼັງ ເທົ່າກັບ 5,14%.

ຈາກຂໍ້ມູນຂ້າງເທິງຈະຄິດໄລ່ K_e ຂອງບໍລິສັດໄດ້ດັ່ງນີ້:

ອັດຕາຄິດຫຼຸດ	2022F	2023F	2024F	2025F	2026F
K_e (%)	13,29	13,29	13,29	13,29	13,29

10) ມູນຄ່າກະແສເງິນສົດສຳລັບຜູ້ຖືຮຸ້ນ

ສະຫຼຸບກະແສເງິນສຸດທິຂອງບໍລິສັດໄດ້ດັ່ງນີ້:

ຫົວໜ່ວຍ: ລ້ານກີບ

ລາຍການ	2021	2022F	2023F	2024F	2025F	2026F
ກຳໄລກ່ອນດອກເບ້ຍ ແລະ ອາກອນ (EBIT)	(40.441)	(8.878)	(7.426)	(6.310)	(5.133)	(3.889)
ອາກອນກຳໄລ (Tax)	-	-	-	-	-	-
ກຳໄລສຸດທິ (Net Profit)	(40.441)	(8.878)	(7.426)	(6.310)	(5.133)	(3.889)
ຄ່າທຽມຫ້ຽນ ແລະ ຄ່າເຊື່ອມ (Depreciation & Amortization) (+)	16.089	16.001	15.667	15.343	15.028	14.722
ຄ່າໃຊ້ຈ່າຍອື່ນໆທີ່ບໍ່ເກີດຂຶ້ນຈິງ (Non Cash Expenses)	20.128	3.107	3.107	3.107	3.107	3.107
ການປ່ຽນແປງຂອງເງິນທຶນໝຸນວຽນສຸດທິ (Change in WC) (-)	4.813	11.497	(12.498)	(8.249)	(8.744)	(9.269)
ລາຍຈ່າຍສຳລັບການລົງທຶນ (CAPEX) (-)	(842)	(4.000)	(4.000)	(4.000)	(4.000)	(4.000)
ບວກເງິນກູ້ສຸດທິ (Net borrowing) (+)	(947)	(811)	(3.243)	(3.243)	(3.243)	(3.243)
ກະແສເງິນສົດອິດສະຫຼະຕໍ່ສ່ວນຜູ້ຖືຮຸ້ນ	(10.827)	(6.079)	16.603	13.145	14.503	15.964
ມູນຄ່າສຸດທ້າຍ (Terminal Value)						144.231
Present Value Factor	1.000	0.883	0.779	0.688	0.607	0.536
ມູນຄ່າປະຈຸບັນ ກະແສເງິນສົດຕໍ່ສ່ວນຂອງຜູ້ຖືຮຸ້ນ (Present Value of FCFE)	(10.827)	(5.365)	12.936	9.041	8.804	8.554
ມູນຄ່າປະຈຸບັນຂອງ ມູນຄ່າອະນາຄົດໜ້ຽ 2026 (Terminal Value)						77.286
ມູນຄ່າທຸລະກິດ						**100.429**
ຈຳນວນຮຸ້ນ						39.560.909
ມູນຄ່າຫຸ້ນທີ່ຖືກ ຕໍ່ຮຸ້ນ						**2.539**

ii) ການວິເຄາະຄວາມອ່ອນໄຫວຂອງອັດຕາຄິດໝຸດ

ທີ່ປຶກສາດ້ານການເງິນອິດສະຫຼະ ໄດ້ດຳເນີນການວິເຄາະຄວາມອ່ອນໄຫວ (Sensitivity Analysis) ຂອງອັດຕາຄິດໝຸດ (Discount Rate) ເນື່ອງຈາກເປັນປັດໄຈສຳຄັນທີ່ສົ່ງຜົນກະທົບໂດຍກົງຕໍ່ການປະເມີນມູນຄ່າຮຸ້ນຂອງບໍລິສັດ ໂດຍທີ່ປຶກສາດ້ານການເງິນອິດສະຫຼະ ກຳນົດໃຫ້ຊ່ວງປ່ຽນແປງຄ່າອັດຕາຄິດໝຸດ ກໍລະນີເພີ່ມຂຶ້ນ ຫຼື ຫຼຸດລົງ ຈະຢູ່ທີ່ +/- 5% ເນື່ອງຈາກເປັນຊ່ວງຄວາມອ່ອນໄຫວທີ່ອັດຕາເງິນເຟີ້ອາດມີການປ່ຽນແປງໄດ້ ເຊິ່ງສາມາດສະຫຼຸບການວິເຄາະຄວາມອ່ອນໄຫວຂອງມູນຄ່າຮຸ້ນ ດ້ວຍວິທີມູນຄ່າປະຈຸບັນສຸດທິຂອງກະແສເງິນສົດສຳລັບຜູ້ຖືຮຸ້ນ ໄດ້ດັ່ງລຸ່ມນີ້:

ຜົນການວິເຄາະຄວາມອ່ອນໄຫວຂອງມູນຄ່າຮຸ້ນ			
ຊ່ວງປ່ຽນແປງຄ່າອັດຕາຄິດໝຸດ	-5,00%	0,00%	+5,00%
ອັດຕາຄິດໝຸດ K_e (%)	12,63%	13,29%	13,95%
ມູນຄ່າຍຸດຕິທຳ (ກີບ/ຮຸ້ນ)	**2.742**	**2.539**	**2.358**

ຈາກຕາຕະລາງຂ້າງເທິງຈະເຫັນວ່າການວິເຄາະຄວາມອ່ອນໄຫວ (Sensitivity Analysis) ມູນຄ່າຍຸດຕິທຳ ກີບຕໍ່ຮຸ້ນ ຈະຢູ່ລະຫວ່າງ **2.358** ຫາ **2.742** ກີບ/ຮຸ້ນ.

ການປະເມີນມູນຄ່າຮຸ້ນດ້ວຍວິທີມູນຄ່າປະຈຸບັນສຸດທິຂອງກະແສເງິນສົດ ເປັນວິທີທີ່ສະທ້ອນເຖິງຄວາມສາມາດໃນການສ້າງກຳໄລ ແລະ ຄວາມສາມາດໃນການສ້າງກະແສເງິນສົດຂອງ LWPC ທີ່ຈະໄດ້ຮັບໃນອະນາຄົດ ໂດຍອ້າງອີງຈາກສົມມຸດຕິຖານທີ່ໄດ້ຮັບຈາກ LWPC ພາຍໃຕ້ພາວະເສດຖະກິດ ແລະ ສະຖານະການປະຈຸບັນ ເຊິ່ງເຫັນວ່າສາມາດສະທ້ອນມູນຄ່າທີ່ແທ້ຈິງຂອງກິດຈະການໄດ້.

3.3. ສະຫຼຸບການປະເມີນມູນຄ່າຍຸດຕິທຳຂອງຮຸ້ນ

ທີ່ປຶກສາດ້ານການເງິນອິດສະຫຼະໄດ້ພິຈາລະນາຄວາມເໝາະສົມຂອງລາຄາສະເໜີຊື້ ດ້ວຍການປະເມີນມູນຄ່າຮຸ້ນດ້ວຍວິທີຕ່າງໆ ຕາມທີ່ໄດ້ກ່າວຂ້າງເທິງ ຊຶ່ງສາມາດສະຫຼຸບໄດ້ດັ່ງນີ້:

ລ/ດ	ວິທີການປະເມີນມູນຄ່າຮຸ້ນ	ມູນຄ່າຮຸ້ນ ກີບ/ຮຸ້ນ
1	ວິທີລາຄາສູງສຸດພາຍໃນ 90 ວັນຊື້-ຂາຍ	9.100
2	ວິທີລາຄາສະເລ່ຍຖ່ວງນ້ຳໜັກ 5 ວັນ	3.755
3	ວິທີມູນຄ່າຕາມບັນຊີ (Book Value Approach)	1.621
4	ວິທີມູນຄ່າຍຸດຕິທຳ (Fair Value) ຂອງຮຸ້ນ ປະເມີນໂດຍທີ່ປຶກສາດ້ານການເງິນອິດສະຫຼະ:	
4.1	ວິທີມູນຄ່າຕາມຕະຫຼາດ (Market Value Approach)	3.755 ຫາ 5.353
4.2	ວິທີອັດຕາສ່ວນລາຄາຕໍ່ກັບມູນຄ່າຕາມບັນຊີ (P/BV Approach)	2.431 ຫາ 4.225
4.3	ວິທີອັດຕາສ່ວນລາຄາຕໍ່ກຳໄລສຸດທິຕໍ່ຮຸ້ນ (P/E Approach)	ຂາດທຶນບໍ່ເໝາະສົມ
4.4	ວິທີມູນຄ່າປັດຈຸບັນສຸດທິຂອງກະແສເງິນສົດ (DCF Approach)	2.358 ຫາ 2.742

ທີ່ປຶກສາດ້ານການເງິນອິດສະຫຼະ ມີຄຳເຫັນວ່າລາຄາສະເໜີຊື້ທີ່ 9.100 ກີບຕໍ່ຮຸ້ນ ເປັນລາຄາທີ່ເໝາະສົມເນື່ອງຈາກເປັນລາຄາທີ່ເປັນໄປຕາມໜັງສືແຈ້ງການຂອງ ຕລຊລ ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022. ເຊິ່ງກຳນົດໃຫ້ລາຄາສະເໜີຊື້ຈະຕ້ອງເປັນລາຄາທີ່ບໍ່ຕ່ຳກວ່າລາຄາສູງສຸດຂອງ

ລາຄາທີ່ຄິດໄລ່ຕາມ 4 ວິທີ ຂ້າງເທິງ ແລະ ຜູ້ສະເໜີຊື້ (TK Supports) ເຫັນດີທີ່ຈະຊື້ຮຸ້ນຈາກຜູ້ຖືຮຸ້ນລາຍຍ່ອຍໃນ ລາຄາສູງສຸດດັ່ງກ່າວ ເພື່ອໃຫ້ຜູ້ຖືຮຸ້ນລາຍຍ່ອຍໄດ້ຮັບຜົນປະໂຫຍດຈາກການຂາຍຮຸ້ນຂອງກິນໃນຄັ້ງນີ້.

IV. ສະຫຼຸບຄຳເຫັນຂອງທີ່ປຶກສາທາງການເງິນ

ທີ່ປຶກສາດ້ານການເງິນອິດສະຫຼະມີຄຳເຫັນວ່າ ການຂໍຖອນຈົດທະບຽນຮຸ້ນອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ແລະ ລາຄາສະເໜີຊື້ຮຸ້ນຕາມທີ່ TK Supports ໃນຖານະຜູ້ສະເໜີຊື້ຮຸ້ນຂອງບໍລິສັດ ເພື່ອຖອນຈົດທະບຽນຮຸ້ນ ມີຄວາມສົມເຫດສົມຜົນ ໂດຍມີເຫດຜົນສະໜັບສະໜຸນ ດັ່ງນີ້:

1. ປັດຈຸບັນ ບໍລິສັດມີຜູ້ຖືຮຸ້ນລາຍຍ່ອຍຖືຮຸ້ນລວມກັນ ເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນທີ່ລະບຸໃນລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 005/ຕລຊລ, ລົງວັນທີ 26 ພະຈິກ 2015, ທີ່ກຳນົດໃຫ້ມີຈຳນວນຮຸ້ນຂອງຜູ້ຖືຮຸ້ນລາຍຍ່ອຍບໍ່ຕ່ຳກວ່າ 5% ຂອງຮຸ້ນທັງໝົດ. ຜູ້ຖືຮຸ້ນຂອງບໍລິສັດ ທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີຜູ້ຖືຮຸ້ນລາຍຍ່ອຍຖືຮຸ້ນລວມກັນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ເຊິ່ງໜ້ອຍກວ່າ 5% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ແລະ TK Supports ບໍ່ມີນະໂຍບາຍທີ່ຈະຖອນສັດສ່ວນການຖືຮຸ້ນຂອງ TK Supports ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ທີ່ຖືຮຸ້ນບໍລິສັດ ຈຶ່ງເຮັດໃຫ້ການແຈກຢາຍຮຸ້ນເປັນໄປຕາມເງື່ອນໄຂໃນການຖອນການຈົດທະບຽນຮຸ້ນ;

2. ລາຄາສະເໜີຊື້ຮຸ້ນ 9.100 ກີບຕໍ່ຮຸ້ນ ເປັນລາຄາທີ່ມີຄວາມຍຸດຕິທຳຕາມທີ່ທີ່ປຶກສາດ້ານການເງິນອິດສະຫຼະໄດ້ປະເມີນໂດຍໃຊ້ວິທີຄິດໄລ່ລາຄາສູງສຸດພາຍໃນ 90 ວັນຊື້ ຂາຍ (ລາຍລະອຽດເພີ່ມເຕີມໃນສ່ວນທີ 3 ຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະຕໍ່ລາຄາສະເໜີຊື້ຮຸ້ນ) ເຊິ່ງລາຄາດັ່ງກ່າວ ເປັນລາຄາທີ່ສູງສຸດທີ່ຄິດໄລ່ໄດ້ຕາມໜັງສືແຈ້ງການຂອງ ຕລຊລ ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022 ເຊິ່ງກຳນົດໃຫ້ຄິດໄລ່ດ້ວຍ 4 ວິທີ ແລະ ລາຄາສະເໜີຊື້ຮຸ້ນ ຕ້ອງບໍ່ຕ່ຳກວ່າລາຄາສູງສຸດຂອງລາຄາທີ່ຄິດໄລ່ຕາມ 4 ວິທີ;

3. ຫຼັງຈາກຖອນຈົດທະບຽນຮຸ້ນແລ້ວ ຜູ້ຖືຮຸ້ນຂອງບໍລິສັດຈະບໍ່ມີຕະຫຼາດຂັ້ນສອງ (Secondary Market) ໃນການຊື້ ຂາຍຮຸ້ນຂອງບໍລິສັດ ຜ່ານຊ່ອງທາງຂອງ ຕລຊລ ອີກຕໍ່ໄປ ເຮັດໃຫ້ຮຸ້ນຂອງບໍລິສັດບໍ່ມີລາຄາຕະຫຼາດອ້າງອີງໃນການ ຊື້ ຂາຍ ຈຶ່ງເຮັດໃຫ້ຜູ້ຖືຮຸ້ນຂາດສະພາບຄ່ອງໃນການຊື້ ຂາຍ ແລະ ໂອກາດທີ່ຜູ້ຖືຮຸ້ນຈະໄດ້ຮັບຜົນຕອບແທນທີ່ເກີດຈາກສ່ວນຕ່າງຂອງລາຄາຊື້ ຂາຍຮຸ້ນ (Capital Gain) ຫຼຸດລົງ ໂດຍຜົນຕອບແທນສ່ວນໃຫຍ່ທີ່ຜູ້ຖືຮຸ້ນຈະໄດ້ຮັບຢູ່ໃນຮູບແບບເງິນປັນຜົນຈາກການດຳເນີນງານຂອງບໍລິສັດ ເຊິ່ງເງິນປັນຜົນທີ່ຜູ້ຖືຮຸ້ນຈະໄດ້ຮັບໃນແຕ່ລະປີອາດປ່ຽນແປງໄປຂຶ້ນກັບກົດລະບຽບ ແລະ ຜູ້ບໍລິຫານຂອງບໍລິສັດທີ່ຈະກຳນົດໃນແຕ່ລະໄລຍະ. ນອກຈາກນີ້, ຜູ້ຖືຮຸ້ນຈະບໍ່ໄດ້ຮັບການຍົກເວັ້ນອາກອນລາຍໄດ້ 10% ສຳລັບເງິນປັນຜົນ ແລະ 2% ສຳລັບການຂາຍ ຫຼື ໂອນຮຸ້ນ ອີກຕໍ່ໄປ;

4. ບໍລິສັດ ຍັງເປັນບໍລິສັດມະຫາຊົນ ແຕ່ຜູ້ຖືຮຸ້ນຈະໄດ້ຮັບຂ່າວສານ ຫຼື ຂໍ້ມູນຂອງບໍລິສັດ ຫຼຸດລົງ ພາຍຫຼັງທີ່ຮຸ້ນຂອງບໍລິສັດບໍ່ໄດ້ຈົດທະບຽນໃນ ຕລຊລ ແລ້ວ ເນື່ອງຈາກພາລະໜ້າທີ່ໃນການລາຍງານ ແລະ ເປີດເຜີຍຂໍ້ມູນ ໃນຖານະບໍລິສັດຈົດທະບຽນຕາມທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 29/ຄຄຊ, ລົງວັນທີ 29 ມີນາ 2022. ສຳລັບບໍລິສັດຈົດທະບຽນໄດ້ສິ້ນສຸດລົງ ຫຼັງຈາກໄດ້ຮັບອະນຸຍາດໃຫ້ຖອນຮຸ້ນຈົດທະບຽນອອກຈາກ ຕລຊລ.

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ໃນຖານະທີ່ປຶກສາດ້ານການເງິນອິດສະຫຼະໄດ້ສະແດງຄຳເຫັນຢ່າງກົງໄປກົງມາ ແບບອິດສະຫຼະໂດຍໃຊ້ຄວາມຮູ້, ຄວາມສາມາດ, ຄວາມລະມັດລະວັງ ແລະ ອີງຂໍ້ມູນຈາກຜູ້ປະກອບອາຊີບ, ຂໍ້ມູນ ແລະ ຂໍ້ສົມມຸດຕິຖານທີ່ໃຊ້ແມ່ນໄດ້ຮັບຈາກຜູ້ບໍລິຫານຂອງບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ໄດ້ສະເໜີຂ້າງເທິງ ນັ້ນ, ມີຄວາມສົມບຸນ, ຄົບຖ້ວນ ພາຍໃຕ້ສະຖານະການ ຂອງຂໍ້ມູນທີ່ສາມາດຮັບຮູ້ໃນປັດຈຸບັນ. ໂດຍຄຳນຶງເຖິງຜົນປະໂຫຍດ ຂອງຜູ້ຖືຮຸ້ນເປັນສິ່ງສຳຄັນ.

ຜູ້ຖືຮຸ້ນຄວນສຶກສາຂໍ້ມູນທັງໝົດທີ່ຢູ່ໃນລາຍງານຄຳເຫັນຂອງທີ່ປຶກສາດ້ານການເງິນອິດສະຫຼະ ແລະ ເອກະສານທີ່ ກ່ຽວຂ້ອງກ່ອນຕັດສິນໃຈວ່າຈະພິຈາລະນາ ອະນຸມັດ ຫຼື ບໍ່ອະນຸມັດໃຫ້ບໍລິສັດດຳເນີນການຖອນຈົດທະບຽນຮຸ້ນດັ່ງກ່າວ ເພາະ ຜູ້ຖືຮຸ້ນມີສິດອອກສຽງໃນການດຳເນີນການຖອນຈົດທະບຽນໃນຄັ້ງນີ້.

ຂ້າພະເຈົ້າຂໍຮັບຮອງວ່າເອກະສານດັ່ງກ່າວມີຄວາມຖືກຕ້ອງ ແລະ ຄົບຖ້ວນທຸກປະການ.

ຮັກສາການຜູ້ອຳນວຍການ

ວິໄລທອງ ທຳມະວົງສາ

ເອກະສານຄັດຕິດ 6:

ໜັງສືສະເໜີຊື້ຮຸ້ນ

ໜັງສືສະເໜີຊື້ຮຸ້ນ

ຂອງ

ບໍລິສັດ ລາວເວີນ ມະຫາຊົນ

ໂດຍ

TK
SUPPORT

ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ
(ຜູ້ສະເໜີຊື້)

LANEXANG
Securities Public Company

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
(ຜູ້ຈັດກຽມໜັງສືສະເໜີຊື້ ແລະ ຕົວແທນໃນການຮັບຊື້ຮຸ້ນ)

ສາລະບານ

I. ເນື້ອໃນສຳຄັນຂອງການສະເໜີຊື້ຮຸ້ນ 1

II. ລາຍລະອຽດຂອງຜູ້ຍື່ນສະເໜີຂໍຊື້ຮຸ້ນ 6

1. ຂໍ້ມູນກ່ຽວກັບຜູ້ຍື່ນສະເໜີຊື້ 6

2. ຂໍ້ມູນກ່ຽວກັບຜູ້ຈັດການໜ້າສະເໜີຊື້ຮຸ້ນ ແລະ ຕົວແທນຮັບຊື້ 8

3. ຄວາມສຳພັນລະຫວ່າງຜູ້ຍື່ນສະເໜີຊື້ຮຸ້ນ ກັບ ບໍລິສັດ ລາວເວີນ ມະຫາຊົນ 9

4. ຂໍ້ມູນອື່ນທີ່ກ່ຽວຂ້ອງຕໍ່ການຕັດສິນໃຈຂອງຜູ້ຖືຮຸ້ນ 9

III. ລາຍລະອຽດຂອງບໍລິສັດ 11

1. ຂໍ້ມູນກ່ຽວກັບບໍລິສັດ 11

IV. ລາຍລະອຽດເພີ່ມເຕີມກ່ຽວກັບການສະເໜີຂໍຊື້ຮຸ້ນ 18

1. ວິທີການຕອບຮັບການສະເໜີຂໍຊື້ຮຸ້ນ 18

2. ວິທີການຮັບຊື້ຮຸ້ນ 19

3. ວິທີການຊຳລະລາຄາ 19

4. ສິດຂອງຜູ້ຖືຮຸ້ນທີ່ມີຈຸດປະສົງທີ່ຈະຂາຍຮຸ້ນ 20

5. ເງື່ອນໄຂການຍົກເລີກຈຸດປະສົງໃນການຂາຍຮຸ້ນ 20

6. ການກຳນົດລາຄາສະເໜີຊື້ 21

V. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ 22

ເອກະສານຊ້ອນທ້າຍ 24

ຄຳສັບ	ຄວາມໝາຍ
ຜູ້ສະໜັບສະໜຸນ ຫຼື TK Supports	ບໍລິສັດ ທີເຄ ສັບພອດ ຈຳກັດຜູ້ດຽວ ຫຼື TK Supports Sole Co., LTD
ບໍລິສັດ ຫຼື LWPC	ບໍລິສັດ ລາວເວີ້ນ ມະຫາຊົນ ຫຼື Lao World Public Company
ຜູ້ຈັດການໜັງສືສະໜັບສະໜຸນ ແລະ ຕົວແທນໃນການເຂົ້າຊື້ຮຸ້ນ	ບໍລິສັດ ຫຼັກຊັບລ້ານຊ້າງ ມະຫະຊົນ ຫຼື Lanexang Securities Public Company (LXS)
ຕລຊລ	ຕະຫຼາດຫຼັກຊັບລາວ
ສຄຄຊ	ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ
ຜູ້ຖືຮຸ້ນລາຍໃຫຍ່ສຸດ	ຜູ້ຖືທີ່ມີສິດອອກສຽງຂອງບໍລິສັດຈົດທະບຽນຮຸ້ນໃນຈຳນວນຫຼາຍສຸດ. ກໍລະນີ ນີ້, ຮຸ້ນທີ່ຖືໂດຍບຸກຄົນທີ່ມີສາຍພົວພັນສະເພາະກໍ່ຖືວ່າລວມເປັນຜູ້ຖືຮຸ້ນລາຍ ໃຫຍ່ສຸດ
ສາຍພົວພັນສະເພາະ	ບຸກຄົນ ຫຼື ນິຕິບຸກຄົນທີ່ມີສາຍພົວພັນທາງກົງກັບຜູ້ຖືຮຸ້ນຫຼາຍສຸດທາງ ສາຍເລືອດຂອງບໍລິສັດຈົດທະບຽນໃດໜຶ່ງເຊັ່ນ: ພໍ່ແມ່, ລູກ ຫຼື ຄູ່ສົມລົດ, ບຸກຄົນ ຫຼື ນິຕິບຸກຄົນທີ່ມີສາຍພົວພັນທາງກົງກັບຜູ້ທີ່ມີຕຳແໜ່ງບໍລິຫານໃນ ບໍລິສັດຈົດທະບຽນ ຫຼື ສາຂາຂອງບໍລິສັດໃດໜຶ່ງ
ບຸກຄົນທີ່ກ່ຽວພັນ	ຖືຮຸ້ນຂອງບໍລິສັດອອກຈຳໜ່າຍຮຸ້ນ ແລະ/ຫຼື ບໍລິສັດຈົດທະບຽນໃນອັດຕາ ສ່ວນຕາມການກຳນົດຂອງ ຄະນະຄຳມະການຄຸ້ມຄອງຫຼັກຊັບ ເປັນຜູ້ບໍລິຫານຂອງບໍລິສັດອອກຈຳໜ່າຍຮຸ້ນ ແລະ/ຫຼື ບໍລິສັດຈົດທະບຽນ
ຜູ້ຖືຮຸ້ນລາຍຍ່ອຍ	ຜູ້ຖືຮຸ້ນໃດໜຶ່ງທີ່ເປັນເຈົ້າຂອງຮຸ້ນໃນຈຳນວນຕ່ຳກ່ວາ 1% ຂອງຈຳນວນຮຸ້ນທີ່ ອອກຈຳໜ່າຍທັງໝົດ ໂດຍບໍ່ລວມເອົາຜູ້ຖືຮຸ້ນລາຍຍ່ອຍທີ່ມີສາຍພົວພັນ ສະເພາະ

ຮຽນ: ຜູ້ຖືຮຸ້ນ ບໍລິສັດ ລາວເວີນ ມະຫາຊົນ

ຂ້າພະເຈົ້າ ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ (ຜູ້ສະເໜີຊື້ຮຸ້ນ ຫຼື TK Supports) ຂໍສະເໜີຊື້ຮຸ້ນສາມັນຂອງ ບໍລິສັດ ລາວເວີນ ມະຫາຊົນ ນຳຜູ້ຖືຮຸ້ນລາຍຍ່ອຍ ເຊິ່ງມີລາຍລະອຽດດັ່ງນີ້:

I. ເນື້ອໃນສຳຄັນຂອງການສະເໜີຊື້ຮຸ້ນ

ຕົວເລກໃນໜັງສືສະເໜີຊື້ຮຸ້ນນີ້ອາດມີການຄາດເຄື່ອນທາງດ້ານຈຳນວນຮຸ້ນ ແລະ ອັດຕາສ່ວນການຖືຄອງຮຸ້ນ ຂອງແຕ່ລະຝ່າຍ, ເນື່ອງຈາກໃນຂະນະທີ່ບໍລິສັດຈັດກຽມໜັງສືສະເໜີຊື້ຮຸ້ນ. ຮຸ້ນດັ່ງກ່າວແມ່ນຍັງມີການເຄື່ອນໄຫວຊື້ ຂາຍ ກັນໃນຕະຫລາດຫຼັກຊັບລາວຢ່າງເປັນປົກກະຕິ, ເຊິ່ງການຊື້ ຂາຍຮຸ້ນໃນຊ່ວງນີ້ອາດເຮັດໃຫ້ຕົວເລກ ແລະ ອັດຕາສ່ວນມີ ການຜິດຜ່ຽງຈາກທີ່ຄິດໄລ່ໄວ້ໃນໜັງສືສະເໜີຊື້ສະບັບນີ້. ຕົວເລກໃນໜັງສືສະເໜີນີ້ແມ່ນອີງຕາມລາຍຊື່ຜູ້ຖືຮຸ້ນຂອງ ບໍລິສັດ ທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ທີ່ອອກໂດຍ ຕລຊລ, ມີຈຳນວນຜູ້ຖື ຮຸ້ນທັງໝົດ 148 ທ່ານ, ຜູ້ຖືຮຸ້ນພາຍໃນປະເທດ 102 ທ່ານ ແລະ ຜູ້ຖືຮຸ້ນຕ່າງປະເທດ 46 ທ່ານ, ຈຳນວນຮຸ້ນທັງໝົດ 39.560.909 ຮຸ້ນ.

1. ຊື່ຜູ້ຍື່ນໜັງສະເໜີຊື້ຮຸ້ນ

ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ

2. ຊື່ຜູ້ຈັດກຽມໜັງສືສະເໜີຊື້ຮຸ້ນ ແລະ ຕົວແທນຮັບຊື້ຮຸ້ນ

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ

3. ຈຸດປະສົງ ແລະ ເຫດຜົນ ກ່ຽວກັບການສະເໜີຊື້ຮຸ້ນ

ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ເປັນບໍລິສັດທີ່ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ໄດ້ຖືກຮັບຮອງ ແລະ ລົງທະບຽນວິສາຫະກິດເລກທີ 0126/ຈທວ, ລົງວັນທີ 10/03/2017, ດຳເນີນທຸລະກິດໃນການ ໃຫ້ບໍລິການດ້ານໄອທີ ເປັນຕົ້ນແມ່ນ: ການໃຫ້ບໍລິການຂາຍຍ່ອຍ ເຄື່ອງຄອມພິວເຕີ, ອຸປະກອນຜາຍນອກ, ຊອບແວ ແລະ ອຸປະກອນໂທລະຄົມມະນາຄົມໃນຮ້ານຄ້າ ແລະ ຈຳໜ່າຍອຸປະກອນໄອທີ ແລະ ເຄື່ອງສື່ສານທຸກຊະນິດ; TK Supports ໄດ້ເຂົ້າຊື້ຮຸ້ນສາມັນນຳ ບໍລິສັດ ລາວເວີນ ມະຫາຊົນ ໃນວັນທີ 4 ພຶດສະພາ 2017 ເຮັດໃຫ້ປະຈຸບັນ TK Supports ໄດ້ ກາຍເປັນຜູ້ຖືຮຸ້ນລາຍໃຫ່ຍຂອງບໍລິສັດ. ອີງຕາມລາຍຊື່ຜູ້ຖືຮຸ້ນຂອງບໍລິສັດ ທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ໃນວັນ ທີ 17 ມີນາ 2023, TK Supports ຖືຮຸ້ນໂດຍກົງຂອງບໍລິສັດໃນຈຳນວນ 36.193.609 ຮຸ້ນ ຫຼື ເທົ່າກັບ 91,49% ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ຖືຮຸ້ນໃນຈຳນວນ 1.459.000 ຮຸ້ນ ຫຼື ເທົ່າກັບ 3,69% ລວມທັງໝົດ 37.652.609 ຮຸ້ນ ເທົ່າກັບ 95,18% ຂອງຈຳນວນຮຸ້ນທັງໝົດ ແລະ ຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ມີລາຍພົວພັນໃດໆກັບ TK Supports ຖືຮຸ້ນລວມກັນຈຳນວນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດ ທະບຽນໃນ ຕລຊລ.

ຫຼັງຈາກທີ່ TK Supports ຊື້ຮຸ້ນບໍລິສັດໃນເດືອນ ພຶດສະພາ ປີ 2017, ຜົນການດຳເນີນງານຂອງບໍລິສັດ ຕັ້ງແຕ່ ປີ 2017 ເປັນຕົ້ນມາ ບໍລິສັດເກີດຂາດທຶນຕິດຕໍ່ກັນຍ້ອນຫຼາຍປັດໄຈເປັນຕົ້ນແມ່ນ: ມີຄູ່ແຂ່ງເກີດຂຶ້ນຫຼາຍແຫ່ງ ເຮັດໃຫ້ຜູ້ ຊົມໃຊ້ມີຫຼາຍທາງເລືອກ, ໄດ້ເກີດມີການລະບາດຂະຍາດໂຄໂລນາໄວຣັດ 2019 (COVID -19) ຂຶ້ນໃນທ້າຍປີ 2019 ແລະ ແກ່ຍາວຕໍ່ເນື່ອງເຖິງ ກາງປີ 2022 ເຮັດໃຫ້ການດຳເນີນທຸລະກິດພົບບັນຫາຫຍຸ້ງຍາກຫຼາຍດ້ານ, ບໍລິສັດໄດ້ຂາດທຶນ ຕິດຕໍ່ກັນເປັນເວລາ 6 ປີແລ້ວ (2017- 9/2022) ເຮັດໃຫ້ບໍລິສັດມີຂາດທຶນສະສົມ, ການຖືຄອງຮຸ້ນຂອງ TK Supports

ຢູ່ໃນອັດຕາສ່ວນທີ່ສູງເຮັດໃຫ້ຮຸ້ນຂອງ ບໍລິສັດ ບໍ່ມີສະພາບຄ່ອງໃນການຊື້-ຂາຍ ໃນຕະຫຼາດຫຼັກຊັບລາວ, ການຂາດທຶນສະສົມຫຼາຍປີຕິດຕໍ່ກັນ ເຮັດໃຫ້ບໍລິສັດບໍ່ສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້ໃນໄລຍະຫຼາຍປີຕໍ່ໜ້າ ເນື່ອງຈາກວ່າການຂາດທຶນສະສົມຫຼາຍ ຈະສົ່ງຜົນໃນເວລາທີ່ບໍລິສັດມີກຳໄລໃນປີ ເພາະວ່າບໍລິສັດຈະຕ້ອງໄດ້ນຳກຳໄລດັ່ງກ່າວໄປສະສາງຂາດທຶນສະສົມນັ້ນຈົນໝົດກ່ອນ ຈຶ່ງຈະສາມາດຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້. ຖ້າໃນອານາຄົດ ບໍລິສັດມີຄວາມຈຳເປັນຕ້ອງການລະດົມທຶນເພີ່ມ ບໍລິສັດອາດບໍ່ສາມາດລະດົມທຶນຜ່ານຕະຫຼາດຫຼັກຊັບລາວໄດ້ ເນື່ອງຈາກວ່າບໍລິສັດມີການຂາດທຶນສະສົມເປັນຈຳນວນຫຼາຍ ເຊິ່ງເຮັດໃຫ້ນັກລົງທຶນບໍ່ມີຄວາມເຊື່ອໝັ້ນຕໍ່ການດຳເນີນທຸລະກິດຂອງບໍລິສັດ ແຕ່ບໍລິສັດສາມາດຫາແຫຼ່ງທຶນຈາກຜູ້ຖືຮຸ້ນລາຍໃຫຍ່ໄດ້ຄື TK Supports; ການຖອນຈົດທະບຽນຮຸ້ນຂອງບໍລິສັດຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ຈະເພີ່ມຄວາມຄ່ອງຕົວໃນການບໍລິຫານຈັດການການດຳເນີນທຸລະກິດ, ໜ້າລະໜ້າທີ່ ແລະ ຄ່າໃຊ້ຈ່າຍຂອງບໍລິສັດໃນອະນາຄົດ. ດັ່ງນັ້ນ, ບໍລິສັດຈຶ່ງມີຈຸດປະສົງຖອນຮຸ້ນອອກຈາກການເປັນບໍລິສັດຈົດທະບຽນໃນ ຕລຊລ.

ດັ່ງນັ້ນ, ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 28 ມີນາ 2023 ສະບັບເລກທີ 239/23/ລວມຊ, ລົງວັນທີ 28 ມີນາ 2023.ຈຶ່ງມີມະຕິອະນຸມັດໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ ການຖອນຈົດທະບຽນຮຸ້ນແບບສະໝັກໃຈ ຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໂດຍບໍລິສັດຈະດຳເນີນການຕາມໜັງສືແຈ້ງການຂອງ ຕລຊລ (ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022) ໃນການຂໍຖອນການຈົດທະບຽນຮຸ້ນດັ່ງກ່າວ ຈະຕ້ອງໄດ້ຮັບມະຕິຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໂດຍມີຄະແນນສຽງເຫັນດີຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທັງໝົດ ເຂົ້າຮ່ວມກອງປະຊຸມ ໂດຍບໍ່ນັບເອົາຮຸ້ນຂອງຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ. ພ້ອມນັ້ນ, ຜູ້ສະເໜີຊື້ຮຸ້ນ ແລະ ບຸກຄົນທີ່ກ່ຽວພັນ ແມ່ນບໍ່ມີສິດລົງຄະແນນສຽງຕໍ່ວາລະດັ່ງກ່າວ. ໃນນີ້, ຄະແນນສຽງບໍ່ເຫັນດີຕໍ່ວາລະດັ່ງກ່າວ ຕ້ອງບໍ່ເກີນ 5% ຂອງຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ. ໂດຍ TK Supports ຈະເປັນຜູ້ດຳເນີນການສະເໜີຊື້ຮຸ້ນ ໃນລາຄາສະເໜີຊື້ເທົ່າກັບ 9.100 ກີບຕໍ່ຮຸ້ນ, ບໍລິສັດ ກຳນົດໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 27 ເມສາ 2023. ພ້ອມກັນນີ້, ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 20 ມີນາ 2023 ສະບັບເລກທີ 219/23/ລວມຊ, ລົງວັນທີ 20 ມີນາ 2023 ໄດ້ມີມະຕິອະນຸມັດແຕ່ງຕັ້ງ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ (LXS) ເປັນທີ່ປຶກສາດ້ານການເງິນອິດສະຫຼະ ("ທີ່ປຶກສາດ້ານການເງິນອິດສະຫຼະ") ໃນການໃຫ້ຄຳເຫັນຕໍ່ຜູ້ຖືຮຸ້ນລາຍຍ່ອຍທີ່ບໍ່ກ່ຽວຂ້ອງກັບຜູ້ສະເໜີຊື້ຮຸ້ນ ເພື່ອໃຫ້ຜູ້ຖືຮຸ້ນລາຍຍ່ອຍໃຊ້ໃນການປະກອບການພິຈາລະນາ ກ່ຽວກັບການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ໃນຄັ້ງນີ້.

4. ປະເພດຫຼັກຊັບທີ່ສະເໜີຊື້

ຫຼັກຊັບທີ່ຜູ້ສະເໜີຊື້ຄັ້ງນີ້ແມ່ນ ຮຸ້ນສາມັນທີ່ຖືໂດຍຜູ້ຖືຮຸ້ນລາຍຍ່ອຍ ຈຳນວນ 1.908.300 ຮຸ້ນ ຫຼື ເທົ່າກັບ 4,82% ຂອງຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ. ນັບຕັ້ງແຕ່ TK Supports ໄດ້ດຳເນີນການຊື້ຮຸ້ນ ໃນວັນທີ 4 ພຶດສະພາ 2017 ຈົນມາຮອດປະຈຸບັນ TK Supports ໄດ້ຖືຮຸ້ນທາງກົງທັງໝົດ 36.193.609 ຮຸ້ນ ຫຼື ເທົ່າກັບ 91,49% ແລະ ບຸກຄົນທີ່ກ່ຽວພັນກັບ TK Supports ຖືຮຸ້ນໃນຈຳນວນ 1.459.000 ຮຸ້ນ ຫຼື ເທົ່າກັບ 3,69% ລວມທັງໝົດ 37.652.609 ຮຸ້ນ ເທົ່າກັບ 95,18% ຂອງຈຳນວນຮຸ້ນທັງໝົດ.

5. ລາຄາທີ່ສະເໜີຊື້:

ລາຄາສະເໜີຊື້ຮຸ້ນ **9.100** ກີບຕໍ່ຮຸ້ນ ເປັນລາຄາທີ່ມີຄວາມຍຸດຕິທຳຕາມທີ່ທີ່ປຶກສາດ້ານການເງິນອິດສະຫຼະໄດ້ປະເມີນໂດຍໃຊ້ວິທີຄິດໄລ່ລາຄາສູງສຸດພາຍໃນ 90 ວັນຊື້ ຂາຍ. ເຊິ່ງລາຄາດັ່ງກ່າວ ເປັນລາຄາທີ່ສູງສຸດທີ່ຄິດໄລ່ໄດ້ຕາມໜັງສືແຈ້ງການຂອງ ຕລຊລ (ເລື່ອງ: ກົນໄກການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022) ເຊິ່ງກຳນົດໃຫ້ຄິດໄລ່ດ້ວຍ 4 ວິທີ ແລະ ລາຄາສະເໜີຊື້ຮຸ້ນ ຕ້ອງບໍ່ຕ່ຳກວ່າລາຄາສູງສຸດຂອງລາຄາທີ່ຄິດໄລ່ຕາມ 4 ວິທີ.

ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 28 ມີນາ 2023 ສະບັບເລກທີ 239/23/ລວມຊ, ລົງວັນທີ 28 ມີນາ 2023 ໄດ້ມີມະຕິອະນຸມັດໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ ການຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ດ້ວຍການສະເໜີຊື້ຮຸ້ນຈາກຜູ້ຖືຮຸ້ນລາຍຍ່ອຍທັງໝົດ. ໂດຍ TK Supports ຈະເປັນຜູ້ດຳເນີນການສະເໜີຊື້ຮຸ້ນສາມັນຂອງບໍລິສັດໃນລາຄາຮຸ້ນລະ 9.100 ກີບ (**"ລາຄາສະເໜີຊື້"**) ແລະ ມີພັນທະຄ່າທຳນຽມໃນການສະເໜີຂາຍຮຸ້ນດັ່ງກ່າວ ໃນອັດຕາ 0,34% ຂອງລາຄາສະເໜີຊື້. ດັ່ງນັ້ນ, ລາຄາສຸດທິທີ່ຜູ້ສະແດງເຈດຈຳນົງໃນການຂາຍຈະໄດ້ຮັບ ມູນຄ່າປະມານຮຸ້ນລະ 9.069 ກີບ (**"ລາຄາສະເໜີຊື້ສຸດທິ"**) ເຊິ່ງລາຄາດັ່ງກ່າວ:

(√) ເປັນລາຄາສະເໜີຊື້ສຸດທ້າຍທີ່ຈະບໍ່ມີການປ່ຽນແປງອີກ (Final Offer) (ຍົກເວັ້ນເມື່ອເຂົ້າເງື່ອນໄຂທີ່ລະບຸໄວ້ຕາມຂໍ້ 8)

( ) ບໍ່ແມ່ນລາຄາສະເໜີຊື້ສຸດທ້າຍ ຜູ້ຍື່ນໜັງສືສະເໜີຊື້ອາດມີການປ່ຽນແປງລາຄາສະເໜີຊື້ໄດ້.

6. ໄລຍະເວລາຮັບຊື້:

ນັບຕັ້ງແຕ່ວັນທີ 15 ພຶດສະພາ 2023 ຫາ ວັນທີ 13 ມິຖຸນາ 2023 ເປັນໄລຍະເວລາ 30 ວັນ ເລີ່ມຕັ້ງແຕ່ເວລາ 9:00 ໂມງ - 3:00 ໂມງ ໃນວັນລັດຖະການ (**"ໄລຍະເວລາຮັບຊື້"**) ຊຶ່ງໄລຍະເວລາດັ່ງກ່າວແມ່ນ:

(√) ໄລຍະເວລາຮັບຊື້ສຸດທ້າຍທີ່ຈະບໍ່ຂະຫຍາຍໄລຍະເວລາຮັບຊື້ອີກ. (Final period) (ຍົກເວັ້ນເມື່ອເຂົ້າເງື່ອນໄຂທີ່ລະບຸໄວ້ຕາມຂໍ້ 8)

( ) ບໍ່ແມ່ນໄລຍະເວລາຮັບຊື້ສຸດທ້າຍ, ຜູ້ສະເໜີຊື້ອາດຂະຫຍາຍໄລຍະເວລາຮັບຊື້ໄດ້.

ເຖິງຢ່າງໃດກໍ່ຕາມ, ຖ້າຫາກມີການແຈ້ງການວັນພັກລັດຖະການ (ທີ່ບໍ່ແມ່ນວັນເສົາ ແລະ ວັນອາທິດ) ເພີ່ມເຕີມໃນຊ່ວງໄລຍະເວລາໃນການຮັບຊື້ດັ່ງກ່າວ ຜູ້ຍື່ນໜັງສືສະເໜີຊື້ ຈະຂະຫຍາຍໄລຍະເວລາຮັບຊື້ຮຸ້ນ ເພື່ອໃຫ້ໄລຍະເວລາໃນການຮັບຊື້ຮຸ້ນຄົບ 30 ວັນ ເພື່ອໃຫ້ສອດຄ່ອງຕາມລະບຽບວ່າດ້ວຍການຄອບຄອງກິດຈະການ.

7. ເງື່ອນໄຂໃນການແກ້ໄຂ ແລະ ປ່ຽນແປງໜັງສືສະເໜີຊື້.

( ) ບໍ່ມີເງື່ອນໄຂ

(√) ມີເງື່ອນໄຂໃນການແກ້ໄຂປ່ຽນແປງສະເໜີດັ່ງນີ້:

(√) ຜູ້ຍື່ນໜັງສືສະເໜີຊື້ອາດຫຼຸດລາຄາສະເໜີຊື້ ຫຼື ຂະຫຍາຍໄລຍະເວລາໃນການສະເໜີຊື້ ຫາກມີເຫດການຮ້າຍແຮງທີ່ສົ່ງຜົນຕໍ່ສັນຖານະ ຫຼື ຊັບສິນຂອງບໍລິສັດໃນລະຫວ່າງໄລຍະການຮັບຊື້.

(√) ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

8. ເງື່ອນໄຂໃນການຍົກເລີກສະເໜີຂໍຊື້ຮຸ້ນ (ຖ້າມີ)

ຜູ້ສະເໜີຊື້ ອາດຍົກເລີກສະເໜີຊື້ຮຸ້ນໄດ້ໃນກໍລະນີ ດັ່ງນີ້:

1) ໃນໄລຍະຂອງການດຳເນີນການສະເໜີຊື້ຮຸ້ນ ຫາກມີເຫດການໃດໜຶ່ງເກີດຂຶ້ນ ຊຶ່ງອາດສ້າງຄວາມເສຍຫາຍຕໍ່ຖານະການເງິນ ແລະ ຜົນການດຳເນີນທຸລະກິດຂອງບໍລິສັດ;
2) ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

9. ໄລຍະເວລາຮັບຊື້ທີ່ຜູ້ຖືຮຸ້ນສາມາດຍົກເລີກການສະແດງເຈດຈຳນົງຂາຍ

ຜູ້ສະແດງເຈດຈຳນົງຂາຍ ສາມາດຍົກເລີກການສະແດງເຈດຈຳນົງຂາຍຮຸ້ນສາມັນຂອງບໍລິສັດໄດ້ ຢູ່ທີ່ສຳນັກງານຕົວແທນການຮັບຊື້ຮຸ້ນ (ບໍລິສັດ ນັບຕັ້ງແຕ່ວັນ 15 ພຶດສະພາ 2023 ຫາ ວັນທີ 13 ມິຖຸນາ 2023 ເປັນໄລຍະເວລາ 25 ວັນ ເລີ່ມຕັ້ງແຕ່ເວລາ 9:00 ໂມງ - 3:00 ໂມງ ຂອງທຸກວັນລັດຖະການຂອງຕົວແທນໃນການຮັບຊື້ຮຸ້ນ ຫລື ກ່ອນມື້ປິດການຮັບຊື້ 5 ວັນ.

10. ແຫຼ່ງເງິນທຶນທີ່ຈະໃຊ້ໃນການສະເໜີຂໍຊື້ຮຸ້ນ

ບໍລິສັດ ທີເຄສັບພອດ ຈຳກັດ ຈະນຳໃຊ້ແຫຼ່ງທຶນ ທີ່ເປັນການກູ້ຢືມນຳບໍລິສັດແມ່ ກໍ່ຄື ບໍລິສັດ ທີເຄ ກຣຸບ, ໃນຈຳນວນ 18.000.000.000 ກີບ (ສິບແປດຕື້ກີບ) ເພື່ອກະກຽມຊຳລະສະສາງຄ່າຊື້ຮຸ້ນສາມັນນຳຜູ້ຖືຮຸ້ນລາຍຍ່ອຍ ໃນຈຳນວນຮຸ້ນສາມັນທັງໝົດ 1.908.300 ຮຸ້ນ, ລາຄາສະເໜີຊື້ 9.100 ກີບຕໍ່ຮຸ້ນ ມູນຄ່າທີ່ຕ້ອງຊຳລະຄ່າຮຸ້ນແມ່ນ 17.365.530.000 ກີບ (ສິບເຈັດຕື້ສາມຮ້ອຍຫົກສິບຫ້າລ້ານຫ້າແສນສາມສິບພັນກີບ), ເສຍຄ່າທຳນຽມຊື້ຮຸ້ນ ໃນອັດຕາ 0,34% ຂອງມູນຄ່າເກັບຊື້ຮຸ້ນ ເປັນມູນຄ່າ 59.042.802 ກີບ (ຫ້າສິບເກົ້າລ້ານສີ່ສິບສອງພັນແປດຮ້ອຍສອງກີບ) (ໃນອັດຕາຄ່າທຳນຽມດັ່ງກ່າວ, ລວມມີຄ່າທຳນຽມໃຫ້ກັບຄະນະກຳມະການຄຸ້ມຄອງຫລັກຊັບ 0,04%, ຕະຫລາດຫຼັກຊັບ 0,15%, ບໍລິສັດຫຼັກຊັບ 0,14%, ກອງທຶນປົກປ້ອງຄວາມສ່ຽງ 0,01%), ເຊິ່ງລວມເງິນທັງໝົດທີ່ TK Supports ຈະຕ້ອງໃຊ້ສຳລັບຄ່າເກັບຊື້ຮຸ້ນ ແລະ ຄ່າທຳນຽມໃນການເກັບຊື້ຮຸ້ນເປັນຈຳນວນ 17.424.572.802 ກີບ (ສິບເຈັດຕື້ສີ່ຮ້ອຍຊາວສີ່ລ້ານຫ້າແສນເຈັດສິບສອງພັນແປດຮ້ອຍສອງກີບ) ໃນກໍລະນີຜູ້ຖືຮຸ້ນລາຍຍ່ອຍທັງໝົດຕອບຮັບການສະເໜີຊື້.

11. ຕົວແທນໃນການຮັບຊື້ຮຸ້ນ

ຊື່ບໍລິສັດ	ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
ທະບຽນວິສາຫະກິດ	ເລກທີ: 1935/ຈຫວ, ລົງວັນທີ: 01 ກັນຍາ 2022,
ທີ່ຢູ່	ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 5, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
ໂທລະສັບ	021 265461, 021 265462, 021 265463
ຜູ້ຕິດຕໍ່	ທ່ານ ວຽງແກ້ວ ພົງສາ, ເບີຕິດຕໍ່: 020 55491414 ທ່ານ ນາງ ທິບພະພອນ ພັດທະວີແສງ, ເບີຕິດຕໍ່: 020 54886648 (ພະແນກ ນາຍໜ້າຊື້-ຂາຍຫຼັກຊັບ)

12. ສະຖານທີ່ຕິດຕໍ່ໃນການຮັບຊື້ ແລະ ຍື່ນເອກະສານຕອບຮັບສະເໜີຂໍຊື້ຮຸ້ນ

ສຳລັບຜູ້ຖືຮຸ້ນຕ້ອງການປະກອບເອກະສານໃນການສະເໜີຂາຍຮຸ້ນແມ່ນສາມາດຕິດຕໍ່ ຫລື ປະກອບແບບຟອມໄດ້ ທີ່ ບໍລິສັດຫຼັກຊັບທີ່ລຸ່ມຄໍາມີຮຸ້ນຢູ່ນຳຕາມແຕ່ລະບໍລິສັດຫຼັກຊັບດັ່ງນີ້:

12.1 ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ

ລາຍລະອຽດ	ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
ທີ່ຢູ່	ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 5, ບ້ານ ໂພນຫັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
ໂທລະສັບ	021 265461, 021 265462, 021 265463
ຜູ້ຕິດຕໍ່	ທ່ານ ວຽງແກ້ວ ມີຊາ, ເບີຕິດຕໍ່: 020 55491414 ທ່ານ ນາງ ທິນະພອນ ພັດທະວີແສງ, ເບີຕິດຕໍ່: 020 54886648 (ພະແນກ ນາຍໜ້າຊື້-ຂາຍຫຼັກຊັບ)

12.2 ບໍລິສັດຫຼັກຊັບ ຫລາລ-ภาษา ຈຳກັດ

ລາຍລະອຽດ	ບໍລິສັດຫຼັກຊັບ ຫລາລ-ภาษา ຈຳກັດ
ທີ່ຢູ່	ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 7, ບ້ານ ໂພນຫັນ, ເມືອງ ໄຊເສດຖາ, ນະຄອນຫລວງຈຽງຈັນ
ໂທລະສັບ	021 265461, 021 265462, 021 265463
ຜູ້ຕິດຕໍ່	ທ່ານ ນາງ ແສງລາວີ ວິໄສວັນທອງ, ເບີຕິດຕໍ່ 020 23267799 (ພະແນກ ນາຍໜ້າຊື້-ຂາຍຫຼັກຊັບ)

12.3 ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ລາຍລະອຽດ	ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ
ທີ່ຢູ່	ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 6, ບ້ານ ໂພນຫັນ, ເມືອງ ໄຊເສດຖາ, ນະຄອນຫລວງຈຽງຈັນ
ໂທລະສັບ	021 419222, 021 419210, 021 419211
ຜູ້ຕິດຕໍ່	ທ່ານ ຕັນ ມະນີວົງ, ເບີຕິດຕໍ່: 020 28263989 (ພະແນກ ນາຍໜ້າຊື້-ຂາຍຫຼັກຊັບ)

13. ວັນທີຊຳລະສະສາງລາຄາຮຸ້ນ

ພາຍຫຼັງທີ່ ຕລຊລ ດຳເນີນການໂອນຮຸ້ນຂອງຜູ້ຖືຮຸ້ນທີ່ສະເໜີຂາຍ ໄປຍັງບັນຊີຜູ້ສະເໜີຊື້ແລ້ວ, ຜູ້ສະເໜີຊື້ຮຸ້ນ ຈະດຳເນີນການໂອນເງິນ ຕາມມູນຄ່າລວມທີ່ຜູ້ຖືຮຸ້ນສະເໜີຂາຍ (ຕາມການລາຍງານຂອງຕົວແທນຮັບຊື້) ໂດຍຜ່ານບໍລິສັດຫຼັກຊັບທີ່ເປັນຕົວແທນໃນການຮັບຊື້ ໄປຫາບໍລິສັດຫຼັກຊັບທີ່ຜູ້ຖືຮຸ້ນມີບັນຊີຢູ່ນຳ ເພື່ອດຳເນີນຊຳລະສະສາງໃຫ້ຜູ້ຖືຮຸ້ນ ແຕ່ລະລາຍທີ່ສະເໜີຂາຍ. ດັ່ງນັ້ນ, ຜູ້ຖືຮຸ້ນລາຍຍ່ອຍທີ່ສະເໜີຂາຍຮຸ້ນ ຈະໄດ້ຮັບການຊຳລະເງິນພາຍໃນກຳນົດ 5 ວັນລັດຖະການ ນັບຕັ້ງແຕ່ມື້ສິ້ນສຸດໄລຍະຂອງການຮັບຊື້ (ມາດຕາ 1 ຂໍ້ 6).

II. ລາຍລະອຽດຂອງຜູ້ຍື່ນສະເໜີຂໍຮຸ້ນ

1. ຂໍ້ມູນກ່ຽວກັບຜູ້ຍື່ນສະເໜີຊື້

1.1 ຂໍ້ມູນທົ່ວໄປ.

ລາຍລະອຽດ	ບໍລິສັດ ທີເຄ ຊັບພໍເທ ແອນ ຈຳກັດຜູ້ດຽວ
ຊື່ບໍລິສັດເປັນພາສາລາວ	T K SUPPORTS SOLE CO., LTD
ດຳເນີນທຸລະກິດ	ບໍລິການຂາຍຍ່ອຍ ເຄື່ອງຄອມພິວເຕີ, ອຸປະກອນພາຍນອກ, ຊອບແວ ແລະ ອຸປະກອນໄຫລະຄົມມະນາຄົມໃນຮ້ານຄ້າ, ແລະ ຈຳໜ່າຍອຸປະກອນໄອທີ ແລະ ເຄື່ອງສື່ສານທຸກຊະນິດ
ທະບຽນວິສາຫະກິດ	ເລກທີ 0126/ຈໜວ, ລົງວັນທີ: 10 ມີນາ 2017
ເລກປັກອາກອນ	774715609900
ທຶນຈົດທະບຽນ	2.000.000.000 ກີບ
ຈຳນວນຮຸ້ນ	200.000 ຮຸ້ນ
ມູນຄ່າກຳນົດຮຸ້ນລະ	10.000 ກີບ
ທີ່ຢູ່	ບ້ານ ສີເມືອງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ
ໂທລະສັບ	021 254841

1.2 ຂໍ້ມູນທາງທຸລະກິດ ແລະ ຂໍ້ມູນອື່ນໆ.

ບໍລິສັດ ທີເຄ ຊັບພໍເທ ແອນ ຈຳກັດຜູ້ດຽວ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ດຳເນີນທຸລະກິດໃນການໃຫ້ບໍລິການດ້ານໄອທີ ນັບຕັ້ງແຕ່ປີ 2005 ເປັນຕົ້ນແມ່ນ: ການໃຫ້ບໍລິການຂາຍຍ່ອຍ ເຄື່ອງຄອມພິວເຕີ, ອຸປະກອນພາຍນອກ, ຊອບແວ ແລະ ອຸປະກອນໄຫລະຄົມມະນາຄົມໃນຮ້ານຄ້າ ແລະ ຈຳໜ່າຍອຸປະກອນໄອທີ ແລະ ເຄື່ອງສື່ສານທຸກຊະນິດ; ເຊິ່ງເປັນບໍລິສັດທຳອິດ ຂອງກຸ່ມບໍລິສັດ ທີເຄ. ພາລະກິດຫຼັກຂອງບໍລິສັດ ແມ່ນເປັນຜູ້ສະໜອງລະບົບເຕັກໂນໂລຊີ ທີ່ທັນສະໄໝໃຫ້ກັບພັນທະມິດທຸລະກິດຕ່າງໆຢູ່ໃນ ສປປ ລາວ ແລະ ວິໄສທັດຂອງບໍລິສັດ ແມ່ນຈະກາຍເປັນບໍລິສັດຊັ້ນນຳ ດ້ານເຕັກໂນໂລຊີຂໍ້ມູນຂ່າວສານໃນ ສປປ ລາວ. ການບໍລິການດ້ານລະບົບໄອທີ ທີ່ບໍລິສັດມີຄວາມຊຳນານທີ່ສຸດແມ່ນ: ລະບົບຫ້ອງການ, ລະບົບບໍລິຫານບຸກຄະລາກອນຂອງອົງກອນທົ່ວໄປ, ລະບົບຄຸ້ມຄອງການຈັດຊື້-ຈັດຈ້າງ, ລະບົບໜັດເອີກ, ລະບົບຮັກສາຄວາມປອດໄພ ແລະ ການພັດທະນາຊອບແວໃໝ່ຕາມຄວາມຕ້ອງການຂອງລູກຄ້າ.

ໃນໄລຍະທີ່ຜ່ານມາບໍລິສັດໄດ້ມີການຈັດຕັ້ງປະຕິບັດ ບັນດາໂຄງການທີ່ສຳຄັນໃຫ້ສຳເລັດ ມາແລ້ວຫຼາຍໂຄງການ ເຊິ່ງໃນນັ້ນລວມມີ: ໂຄງການພັດທະນາ ແລະ ຕິດຕັ້ງລະບົບເອເລັກໂຕນິກ ທີ່ທັນສະໄໝໃນການເກັບເງິນຄ່າພາຫະນະຜ່ານ *ຂົວມິດຕະພາບລາວ-ໄທແຫ່ງທີ 1*, ໂຄງການພັດທະນາ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ (Core Banking) ໃຫ້ກັບ ທະນາຄານນະໂຍບາຍ, ໂຄງການພັດທະນາ ແລະ ຕິດຕັ້ງລະ ບົບລາຍງານການຊື້-ຂາຍເງິນຕາຕ່າງປະເທດ ໃຫ້ກັບ ທະນາຄານ ແຫ່ງ ສປປ ລາວ, ໂຄງການຕິດຕັ້ງລະບົບຫ້ວໜ່ວຍບໍລິການນ້ອຍ-ສົ່ງຄົນກວ້າງ ແລະ ຕາປະທັບດຽວ ຂອງ ຄະນະກຳມະການ ຄຸ້ມຄອງເສດຖະກິດພິເສດ ແລະ ເສດຖະກິດສະເພາະ ດ້ວຍລະບົບເອເລັກໂຕນິກ ໃນຂອບເຂດທົ່ວ ປະເທດ, ໂຄງການຕິດຕັ້ງລະບົບຄຸ້ມຄອງການເຂົ້າ-ຂາອອກ ໃຫ້ແກ່ພະນັກງານພາຍໃນສຳນັກງານ ທະນາຄານແຫ່ງ ສປປ ລາວ ແລະ ໂຄງການອື່ນໆທີ່ ກ່ຽວຂ້ອງກັບລະບົບໄອທີໃນຫຼາຍຂະແໜງການ.

ເມື່ອຈາກ ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ໄດ້ມີການຈັດຕັ້ງປະຕິບັດໂຄງການ ຫລາຍໂຄງການ ມີທັງ ໂຄງການຂະໜາດນ້ອຍ ແລະ ໂຄງການຂະໜາດໃຫຍ່ ຈຶ່ງເຮັດໃຫ້ບໍລິສັດມີຄວາມພ້ອມສູງໃນດ້ານທີມງານທີ່ຈະຮັບໃຊ້ ການບໍລິການ. ປັດຈຸບັນມີທີມງານທັງໝົດປະມານ 40 ຄົນ. ພ້ອມນັ້ນ, ກໍ່ຍັງມີບັນດາຄູ່ຮ່ວມທຸລະກິດທັງພາຍໃນ ແລະ ຕ່າງປະເທດອີກຫຼາຍບໍລິສັດ. ດ້ວຍເຫດຜົນນີ້ການໃຫ້ບໍລິການດ້ານໄອທີຈຶ່ງມີຫຼາກຫຼາຍຜະລິດຕະພັນດັ່ງລຸ່ມນີ້:

- ລະບົບທະນາຄານ ແລະ ສະຖາບັນການເງິນ (Banking and MFI Solutions): ຈັດຕັ້ງປະຕິບັດ ແລະ ພັດທະນາລະບົບຄໍແບ້ງຄິ (Core Banking), ລະບົບເງິນກູ້ (Loan Origination Systems) ແລະ ລະບົບ ເອທີເອັມ (ATM Interface and ATM Switching Systems);
- ລະບົບນຳໃຊ້ໃນວິສາຫະກິດທົ່ວໄປ (Enterprise Systems): ລະບົບບໍລິຫານ-ຈັດການ ຊັບພະຍາກອນ ມະນຸດ (HRMS), ລະບົບຄຸ້ມຄອງແຜນງົບປະມານ, ຈັດຊື້-ຈັດຈ້າງ ແລະ ຊຳລະເງິນ (Procure-to-Pay Systems), ລະບົບກັບເງິນໂດຍນຳໃຊ້ບັດ Smart Card;
- ລະບົບພື້ນຖານໂຄງລ່າງໄອທີ ທີ່ທັນສະໄໝ: ລະບົບສາຍໃຍແກ້ວຄວາມໄວສູງ, ລະບົບຊິບເວີ ແລະ ເຄືອຂ່າຍ;
- ລະບົບຮັກສາຄວາມປອດໄພ: ລະບົບກ້ອງວົງຈອນປິດ (CCTVs), ລະບົບຄວບຄຸມການເຂົ້າ-ອອກ ແລະ ການນຳໃຊ້ Smart Card ຕ່າງໆ;
- ການພັດທະນາລະບົບຊອບແວ່ຕ່າງໆ ຕາມຄວາມຕ້ອງການຂອງລູກຄ້າ.

1.3 ໂຄງສ້າງທຶນ

1.3.1 ທຶນຈົດທະບຽນ

ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ມີທຶນຈົດທະບຽນທີ່ຊຳລະແລ້ວທັງໝົດ 2.000.000.000 ກີບ (ສອງຕື້ກີບ) ໂດຍແບ່ງເປັນຮຸ້ນສາມັນທັງໝົດ 200.000 ຮຸ້ນ ແລະ ມີມູນຄ່າທຳນິດ (Par Value) ຮຸ້ນລະ 10.000 ກີບ.

1.3.2 ໂຄງສ້າງຜູ້ຖືຮຸ້ນ

ລຳດັບ	ຊື່ ແລະ ນາມສະກຸນ	ຈຳນວນຮຸ້ນ	ອັດຕາສ່ວນການຖືຄອງ
1	ທ່ານ ນາງ ສີນອນຄຳ ຄວງດາລາ	200.000	100%

ໝາຍເຫດ: ໂຄງສ້າງການຖືຮຸ້ນນີ້ 1 ທ່ານ ເນື່ອງຈາກ TK Supports ດຳເນີນທຸລະກິດໃນຮູບແບບຈຳກັດຜູ້ດຽວ.

1.4 ສະຫຼຸບຖານະການເງິນ ແລະ ຜົນການດຳເນີນງານຂອງຜູ້ຍື່ນສະເໜີຂໍຊື້ຫຼັກຊັບ.

ຜົນການດຳເນີນງານ ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ ໃນໄລຍະ 3 ປີ ຜ່ານມາ ນັບແຕ່ປີ 2020 ຫາປີ 2022 ຊຶ່ງສະແດງໃຫ້ເຫັນລາຍຮັບ-ລາຍຈ່າຍ, ກຳໄລ-ຂາດທຶນ ແລະ ຊັບສິນ-ໜີ້ສິນລວມ ລາຍລະອຽດດັ່ງນີ້:

ຫົວໜ່ວຍ: ລ້ານກີບ

ຂໍ້ມູນທີ່ສຳຄັນຂອງ ເອກະສານລາຍງານການເງິນ	2020	2021	2022
ຊັບສິນລວມ	**259.163**	**260.780**	**257.037**
ໜີ້ສິນລວມ	**141.019**	**166.989**	**158.436**
ສ່ວນຂອງຜູ້ຖືຮຸ້ນ	**116.143**	**91.791**	**96.601**
ທຶນຈົດທະບຽນ	2.000	2.000	2.000
ລາຍຮັບລວມ	**15.187**	**14.727**	**4.886**
ຄ່າໃຊ້ຈ່າຍ	12.336	13.259	2.371
ກຳໄລ ສຳລັບປີ	2.852	1.469	2.515
ກຳໄລຕໍ່ຮຸ້ນ (ກີບ)	14.259	7.344	12.575
ເງິນປັນຜົນຕໍ່ຮຸ້ນ	-	-	-
ມູນຄ່າຕາມບັນຊີຕໍ່ຮຸ້ນ (ກີບ)	580.716	458.954	483.006

ເນື່ອງຈາກບໍລິສັດ ຫິເຄລັບພອດ ຈຳກັດຜູ້ດຽວ ເປັນບໍລິສັດຈຳກັດຜູ້ດຽວ ແລະ ບໍ່ໄດ້ເປັນບໍລິສັດມະຫາຊົນ ຈຶ່ງບໍ່ໄດ້ມີການກວດສອບຈາກບໍລິສັດກວດສອບພາຍນອກ ຂໍ້ມູນທີ່ບໍລິສັດທີ່ຜູ້ຈັດການໜັງສືສະເໜີຊື້ ນຳມາອ້າງອີງຄັ້ງນີ້ແມ່ນ ອີງໃສ່ (ຂໍ້ມູນຢັ້ງຢືນຄວາມຖືກຕ້ອງຈາກ ບໍລິສັດ ຫິເຄລັບພອດ ຈຳກັດຜູ້ດຽວ ໂດຍມີການລົງລາຍເຊັນຈາກພະນັກງານ ບັນຊີ, ຫົວໜ້າພະແນກບັນຊີ-ການເງິນ ແລະ ຜູ້ອຳນວຍການບໍລິສັດ ຢ່າງຄົບຖ້ວນ)

1.4.1 ຂໍ້ມູນກ່ຽວກັບປະຫວັດການກະທຳຜິດທາງອາຍາ.

ນັບແຕ່ເປີດບໍລິສັດດຳເນີນກິດຈະການແຕ່ປີ 2017 ມາຈົນເຖິງປະຈຸບັນ, ບໍລິສັດ ແລະ ຜູ້ບໍລິຫານບໍລິສັດບໍ່ເຄີຍມີ ປະຫວັດການກະທຳຜິດທາງອາຍາ.

1.4.2 ຄຳພິພາກສາທາງກົດໝາຍທີ່ຍັງບໍ່ສິ້ນສຸດ.

ໃນວັນທີ່ຍື່ນໜັງສືສະເໜີຂໍຊື້ຮຸ້ນສາມັນ, ບໍລິສັດ ແລະ ຜູ້ບໍລິຫານຂອງບໍລິສັດ ແມ່ນບໍ່ມີຄະດີຮ້ອງຟ້ອງໃນສານ, ຕົກເປັນຄະດີໃດໆ ແລະ ບໍ່ມີຂໍ້ຜິດພາກສາທາງດ້ານກົດໝາຍທີ່ຍັງບໍ່ທັນສິ້ນສຸດ.

2. ຂໍ້ມູນກ່ຽວກັບຜູ້ຈັດການໜັງສືສະເໜີຊື້ຮຸ້ນ ແລະ ຕົວແທນຮັບຊື້

ຊື່ບໍລິສັດ	ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
ທີ່ຢູ່	**ຕຶກສຳນັກງານໃຫຍ່ ທະນາຄານ ພັດທະນາ ການຄ້າ ລາວ ມະຫາຊົນ, ຊັ້ນ 5, ບ້ານ ໂພນຫ້ວາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ**
ໂທລະສັບ	021 265461, 021 265462, 021 265463

3. ความสัมพันธ์ระหว่างผู้ยื่นสนเข้าซื้อหุ้น กับ บริษัท ลาวเวิน มหาชน

3.1 สัญญาซื้อ ขายหุ้นของ LWPC ในโอกาสก่อนการยื่นหนังสือเข้าซื้อหุ้น

คู่สัญญา	:	ผู้ซื้อหุ้น	บริษัท ทิเลลับพอก จำกัดผู้เดียว
		ผู้ขายหุ้น	ท่าน สักไชุ วิมมาลาสิก และ ท่าน ปิแก้ จัน
วันที่ซื้อ ขายหุ้น	:	4 มิถุนายน 2017	
จำนวนหุ้น	:	35.604.500 หุ้น	
ราคา	:	7.400 กีบ/หุ้น	

3.2 การถือหุ้นทางตรง และ ทางอ้อม (ถือหุ้นโดยบุคคลที่เกี่ยวพันกับ TK Supports) ใน LWPC

บริษัท ทิเลลับพอก จำกัดผู้เดียว ถือหุ้นทางตรงในบริษัท จำนวน 36.193.609 หุ้น หรือ เท่ากับ 91,49% และ บุคคลที่เกี่ยวพันกับ TK Supports ถือหุ้นในจำนวน 1.459.000 หุ้น หรือ เท่ากับ 3,69% รวมทั้งหมด 37.652.609 หุ้น เท่ากับ 95,18% ของจำนวนหุ้นทั้งหมดของบริษัทที่จดทะบียนใน ตลาดฯ.

3.3 การมีกรรมการผู้บริหารร่วมกัน

ปัจจุบัน, บริษัท ทิเลลับพอก จำกัดผู้เดียว (ผู้ยื่นสนเข้าซื้อหุ้น) และ บริษัท ลาวเวิน มหาชน มีผู้อำนวยการใหญ่คนเดียวกันคือ: ท่าน นาง สิพอนทำ ดวงดาลา.

4. ข้อมูลอื่นที่เกี่ยวข้องกับการตัดสินใจของผู้ถือหุ้น

4.1 หุ้นของผู้ยื่นหนังสือเข้าซื้อ

ตามเอกสารในหนังสือเข้าซื้อนี้แนบฉบับรายชื่อผู้ถือหุ้นของบริษัท ที่มีรายชื่อในสมุดทะบียนผู้ถือหุ้น วันที่ 17 มิถุนายน 2023 (ครั้งล่าสุด) ที่ออกโดย ตลาดฯ, มีจำนวนผู้ถือหุ้นทั้งหมด 148 ท่าน, ผู้ถือหุ้นภายในประเทศ 102 ท่าน และ ผู้ถือหุ้นต่างประเทศ 46 ท่าน, จำนวนหุ้นทั้งหมด 39.560.909 หุ้น. เรื่องมีรายละเอียดดังต่อไปนี้:

ลำดับ	ชื่อ	ประเภทหุ้น	จำนวนหุ้น	อัตราส่วนหุ้นรวมในหุ้นจำหน่ายบริษัท	อัตราส่วนรวมในการออกหุ้นทั้งหมด
I	**ผู้ยื่นหนังสือเข้าซื้อ**	**หุ้นสามัญ**	**36.193.609**	**91,49%**	**91,49%**
II	**บุคคลที่เกี่ยวพันกับผู้ยื่นสนเข้าซื้อ**		**1.459.000**	**3,69%**	**3,69%**
1	ท่าน ทัดสะคอน ทำมะวง	หุ้นสามัญ	1.436.200	3,63%	3,63%
2	ท่าน ธส. เดดผุวัง มุลธัตน์	หุ้นสามัญ	2.600	0,01%	0,01%
3	ท่าน สิบุนทำ สิบุนมี	หุ้นสามัญ	3.500	0,01%	0,01%
4	ท่าน แสงสะหวาง กี่งสะดา	หุ้นสามัญ	3.500	0,01%	0,01%
5	ท่าน ทะมุไชุ ทำมะวง	หุ้นสามัญ	3.500	0,01%	0,01%
6	ท่าน สุลาลัก มิงมะจิด	หุ้นสามัญ	2.700	0,01%	0,01%
7	ท่าน นาง สุวิมล ทำมะวง	หุ้นสามัญ	3.500	0,01%	0,01%

8	ທ່ານ ດວງດີ ພົມມະຈັນ	ຮຸ້ນສາມັນ	3.500	0,01%	0,01%
III	**ບຸກຄົນຕາມກົດໝາຍ**		**1.908.300**	**4,82%**	**4,82%**
	ຜູ້ຖືຮຸ້ນລາຍຍ່ອຍ	ຮຸ້ນສາມັນ	**1.908.300**	**4,82%**	**4,82%**
	ລວມທັງໝົດ		**39.560.909**	**100%**	**100%**

4.2 ແຫຼ່ງເງິນທຶນທີ່ຜູ້ຍື່ນສະເໜີຂໍຊື້ໃຊ້ໃນການເຂົ້າຊື້ບໍລິສັດ.

ແຫຼ່ງທຶນໃນການເກັບຊື້ຮຸ້ນຄືນໃນຄັ້ງນີ້ ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວຈະໄດ້ກູ້ຢືມນຳບໍລິສັດແມ່ ກໍ່ຄື ບໍລິສັດ ທີເຄ ກຣຸບ, ໃນຈຳນວນ 18.000.000.000 ກີບ (ສິບແປດຕື້ກີບ) ໂດຍອີງຕາມສັນຍາກູ້ຢືມເລກທີ2303011/ ທຄກ, ສະບັບລົງວັນທີ: 23/03/2023 ມີກຳນົດໄລຍະຂອງການກູ້ຢືມ 5 ປີ, ກຳນົດຊຳລະຄືນເປັນປີລະງວດ, ງວດລະ 3.600.000.000 ກີບ (ສາມຕື້ຫົກຮ້ອຍລ້ານກີບ) ເພື່ອກະກຽມຊຳລະສະສາງຄ່າຊື້ຮຸ້ນສາມັນຈາກຜູ້ຖືຮຸ້ນລາຍຍ່ອຍ ໃນ ຈຳນວນທັງໝົດ 1.908.300 ຮຸ້ນ, ລາຄາສະເໜີຊື້ 9.100 ກີບຕໍ່ຮຸ້ນ ຄາດຄະເນມູນຄ່າທີ່ຕ້ອງຊຳລະຄ່າຮຸ້ນແມ່ນ 17.424.572.802 ກີບ (ສິບເຈັດຕື້ສີ່ຮ້ອຍຊາວສີ່ລ້ານຫ້າແສນເຈັດສິບສອງພັນແປດຮ້ອຍສອງກີບ).

III. ລາຍລະອຽດຂອງບໍລິສັດ

1. ຂໍ້ມູນກ່ຽວກັບບໍລິສັດ

ລາຍລະອຽດ	ບໍລິສັດ ລາວເວີນ ມະຫາຊົນ
ຊື່ບໍລິສັດເປັນພາສາສາກົນ	Lao World Public Company
ທະບຽນວິສາຫະກິດສະບັບປັບປຸງ	ເລກທີ 0748/ຈຫລ, ລົງວັນທີ: 21 ສິງຫາ 2017
ທຶນຈົດທະບຽນ	79.121.818.000 ກີບ
ຈຳນວນຮຸ້ນ	39.560.909 ຮຸ້ນ
ມູນຄ່າກຳນົດຮຸ້ນລະ	2.000 ກີບ
ທີ່ຢູ່	ບ້ານ ໄຫນຫັນເໜືອ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
ໂທລະສັບ	(856-21) 415 477
ແຟັກ	(856-21) 416 409
ເວັບໄຊ	www.laoworldpublic.com

1.1. ປະຫວັດຄວາມເປັນມາຂອງ ບໍລິສັດ

ບໍລິສັດ ລາວເວີນ ມະຫາຊົນ ໄດ້ລົງນາມສັນຍາຈຳດ້ວຍການລົງທຶນສ້າງຕັ້ງສູນການຄ້າ, ການວາງສະແດງ ແລະ ການປະຊຸມລາວ - ສາກົນ ຢູ່ນະຄອນຫຼວງວຽງຈັນ ສປປ ລາວ ໃນກຳນົດເວລາ 35 ປີ ກັບລັດຖະບານ ສປປ ລາວ ໃນວັນ ທີ 24 ທັນວາ 2003 ເຊິ່ງຮຽກຮ້ອງໃຫ້ບໍລິສັດ ລົງທຶນໃນດ້ານສູນວາງສະແດງສິນຄ້າ, ສະຖານບັນເທີງຄົບຊຸດ ແລະ ກິດຈະການອື່ນໆ ພາຍໃນ ເນື້ອທີ່ 142.627 ຕາແມັດ ພາຍໃຕ້ການພິຈາລະນາຂອງລັດຖະບານສຳລັບ 35 ປີ ນັບແຕ່ມີລົງ ນາມໃນສັນຍາຈຳດ້ວຍການລົງທຶນ. ໃນນັ້ນ, ຊັບສິນ ແລະ ກິດຈະການທັງໝົດພາຍໃຕ້ສັນຍາຈຳດ້ວຍການລົງທຶນທີ່ກ່າວ ມາຂ້າງເທິງນີ້ ຈະຖືກໂອນໃຫ້ລັດຖະບານພາຍຫຼັງໄດ້ໝົດກຳນົດເວລາການລົງທຶນ ພາຍໃຕ້ເງື່ອນໄຂໃນຮູບການກໍ່ສ້າງ, ດຳ ເນີນການ ແລະ ໂອນມອບ (Build, Operate and Transfer "BOT"). ນອກຈາກນີ້, ບໍລິສັດ ໄດ້ຮັບການຍົກເວັ້ນໃນ ການເຊົ່າທີ່ດິນ ແລະ ຍົກເວັ້ນອາກອນກຳໄລ 10 ປີທຳອິດ, ສ່ວນ 10 ປີ ຕໍ່ໄປໄດ້ຮັບການຍົກເວັ້ນອັດອາກອນກຳໄລເຖິງ ໜຶ່ງ 50% ຈາກອັດການປົກກະຕິການທີ່ລະບຸໄວ້ໃນກົດໝາຍ.

ບໍລິສັດ ລາວເວີນ ມະຫາຊົນ ("ບໍລິສັດ" ຫຼື "LWPC") ໄດ້ຮັບການສ້າງຕັ້ງຂຶ້ນໃນວັນ 31 ມີນາ 2004 ພາຍໃຕ້ໃບ ອານຸຍາດລົງທຶນຕ່າງປະເທດສະບັບເລກທີ 0064-04/ຄລຮ, ລົງວັນທີ 25/06/2004 ແລະ 0065-04/ຄລຮ, ລົງວັນທີ 25/06/2004 ໃນຮູບແບບບໍລິສັດຈຳກັດ ໂດຍໃຊ້ຊື່ວ່າ ບໍລິສັດ ຈັນຄອມເປັກສ ຈຳກັດ. ເຊິ່ງມີນັກລົງທຶນລາວຖືຮຸ້ນ 51% ແລະ ນັກລົງທຶນຕ່າງປະເທດຖືຮຸ້ນ 49%. ເພື່ອສ້າງເປັນສູນວາງສະແດງສິນຄ້າ, ສູນການຄ້າ ແລະ ສູນການປະຊຸມສາກົນ ຫຼື (ລາວ-ໄອເຕັກ) ແຫ່ງທຳອິດຂອງ ສປປ ລາວ ຢູ່ໃນຄອນຫຼວງວຽງຈັນ ແລະ ໄດ້ເຄື່ອນໄຫວດຳເນີນທຸລະກິດເລື່ອຍໆມາ ຈົນມາຮອດວັນທີ 12 ຕຸລາ 2011 ຈຶ່ງໄດ້ຫັນປ່ຽນມາເປັນ ບໍລິສັດ ລາວເວີນ ມະຫາຊົນ.

ໃນວັນທີ 22 ພະຈິກ 2011 ບໍລິສັດໄດ້ເພີ່ມທຶນຈົດທະບຽນຂຶ້ນເປັນ 44.190.000.000 ກີບ, ບໍລິສັດໄດ້ຮັບໃບ ທະບຽນເລກທີ 4224/ຫຈກ. ຕໍ່ມາໃນວັນທີ 11 ພຶດສະພາ 2011 ແລະ 17 ກັນຍາ 2012 ລັດຖະບານ ແລະ ບໍລິສັດ ຖືກລົງເຫັນດີແກ້ໄຂປ່ຽນແປງສັນຍາຈຳດ້ວຍການລົງທຶນສະບັບ ວັນທີ 24 ທັນວາ 2003 ໂດຍຂະຫຍາຍການກຳນົດເວລາ ການລົງທຶນອອກໄປຕື່ມອີກ 55 ປີ, ຈາກ 35 ປີ ເປັນ 90 ປີ (ເລີ່ມແຕ່ປີ 2003 ເຖິງປີ 2093) ເພື່ອສ້າງເງື່ອນໄຂ ແລະ ຊຸກຍູ້ໃຫ້ແກ່ການຈົດທະບຽນບໍລິສັດໃນຕະຫຼາດຫຼັກຊັບລາວ.

ກ່ອນສະເໜີຂາຍຮຸ້ນສາມັນເພີ່ມທຶນຕໍ່ມວນຊົນຄັ້ງທຳອິດ, ໄດ້ມີຜູ້ສ້າງຕັ້ງບໍລິສັດຮ່ວມກັນ ທັງໝົດ 9 ຄົນ ທີ່ຖືຮຸ້ນຮ່ວມກັນ 100% ຂອງທຶນທັງໝົດຂອງບໍລິສັດ. ຕໍ່ມາວັນທີ 28 ພຶດສະພາ 2013, ກອງປະຊຸມຜູ້ຖືຮຸ້ນຄັ້ງທີ 1 ປີ 2013 ໄດ້ມີມະຕິຕົກລົງເພີ່ມທຶນຈົດທະບຽນບໍລິສັດຂຶ້ນອີກ ຈຳນວນ 27.019.618.000 ກີບ ຈາກເດີມ 44.190.000.000 ກີບ ມາເປັນ 71.209.618.000 ກີບ ແລະ ໃຫ້ນຳເອົາ ບໍລິສັດ ລາວເວີນ ສະຫວັນ ຈຳກັດ ຊຶ່ງເປັນສູນວາງສະແດງສິນຄ້າ ແລະ ສູນການປະຊຸມສາກົນ ຫຼື (ສະຫວັນ-ໄອເຕັກ) ຢູ່ໃນແຂວງສະຫວັນນະເຂດ ເຂົ້າມາເປັນບໍລິສັດໃນເຄືອ LWPC. ໂດຍໄດ້ມີການໂອນສ່ວນໄດ້ເສຍ 100% ຈາກຜູ້ຖືຮຸ້ນເດີມ ເຮັດໃຫ້ບໍລິສັດ ເຂົ້າຖືຮຸ້ນ 100% ຂອງຮຸ້ນທັງໝົດໃນລາວເວີນ ສະຫວັນ.

ໃນວັນທີ 23 ທັນວາ 2013 ບໍລິສັດ ລາວເວີນ ມະຫາຊົນ ໄດ້ສຳເລັດການຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແລະ ໄດ້ສຳເລັດການຂາຍຮຸ້ນອອກສູ່ມວນຊົນ.

ໃນວັນທີ 14 ພະຈິກ 2015, ບໍລິສັດ ລາວເວີນ ມະຫາຊົນ ໄດ້ເປີດອາຄານສູນການຄ້າຂະໜາດໃຫຍ່ທີ່ມີຄວາມສູງ 8 ຊັ້ນ ແລະ ມີເນື້ອທີ່ 63.505 ຕາແມັດ ດ້ວຍເຄື່ອງໝາຍການຄ້າ ສູນການຄ້າໄອເຕັກມໍ.

ສວນນ້ຳໂອຊ່ຽນປາກ ຖືວ່າເປັນສວນນ້ຳແຫ່ງໃຫຍ່ທີ່ສຸດໃນວຽງຈັນ ແລະ ເປີດໃຫ້ບໍລິການມາຕັ້ງແຕ່ວັນທີ 28 ທັນວາ 2015. ສວນນ້ຳໂອຊ່ຽນປາກມີພື້ນທີ່ ປະມານ 30.000 ຕາແມັດ ແລະ ສາມາດຮັບຮອງລູກຄ້າໄດ້ກວ່າ 3.000 ຄົນ.

ວັນທີ 4 ພຶດສະພາ 2017 ທ່ານ ສັກໄຊ ວົງມາລາສິດ ແລະ ທ່ານ ປິເຕີ ຈັນ ເຊິ່ງເປັນຜູ້ສ້າງຕັ້ງ ແລະ ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ລາວເວີນ ມະຫາຊົນໄດ້ຂາຍຮຸ້ນຈຳນວນ 34.156.120 ຮຸ້ນ ຫຼື ເທົ່າກັບ 86,34% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ໃຫ້ກັບ TK Supports ເພື່ອພັດທະນາທຸລະກິດຂອງບໍລິສັດໃນອະນາຄົດ.

1.2. ພາບລວມຂອງການປະກອບທຸລະກິດ

1.2.1. ລັກສະນະທຸລະກິດຂອງ ບໍລິສັດ ລາວເວີນ ມະຫາຊົນ ແລະ ບໍລິສັດໃນເຄືອ

ບໍລິສັດ ລາວເວີນ ມະຫາຊົນ ຄືສູນການຄ້າຄົບວົງຈອນ ທີ່ຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ ແລະ ຜູ້ອຸປະໂພກທຸກກຸ່ມເປົ້າໝາຍດ້ວຍການບໍລິການທີ່ຫຼາກຫຼາຍໃນສູນການຄ້າເຊັ່ນ: ການປະສົມປະສານຮ້ານຄ້າຂະໜາດໃຫຍ່, ຂະໜາດນ້ອຍ, ງານວາງສະແດງສິນຄ້າຕ່າງໆ,ຈັດງານລ້ຽງ, ສູນການສຶກສາ, ສູນອາຫານ ແລະ ເຄື່ອງດື່ມ, ສະຖານທີ່ອອກກຳລັງກາຍ, ການບັນເທີງດ້ວຍໂຮງສາຍຮູບເງົາ, ສວນນ້ຳ, ການຈັດງານສົນລະປະ. ສ້າງຄວາມພໍໃຈໃຫ້ລູກຄ້າ ຕອບໂຈດທຸກຄວາມຕ້ອງການໃນບ່ອນດຽວ.


ບໍລິສັດ ປະກອບມີ ສູນວາງສະແດງສິນຄ້າໄອເຕັກ, ສູນການຄ້າໄອເຕັກມໍ, ສວນນ້ຳໂອຊ່ຽນປາກ ແລະ ສູນການຄ້າທ່ຽງຂັນຄຳ ເຊິ່ງສະໜອງການບໍລິການໃຫ້ເຊົ່າພື້ນທີ່ ແລະ ເຊົ່າຫ້ອງ, ງານວາງສະແດງສິນຄ້າ, ງານລ້ຽງ, ກິດຈະກຳບັນເທີງ, ສວນນ້ຳ, ອາຫານ ແລະ ເຄື່ອງດື່ມ. ບໍລິສັດມີ 1 ບໍລິສັດລູກເຊິ່ງຖືຮຸ້ນ 100% ຄື ບໍລິສັດ ລາວເວີນ ສະຫວັນ ຈຳກັດ (ສູນການຄ້າສະຫວັນ-ໄອເຕັກ) ໃຫ້ບໍລິການກ່ຽວກັບການເຊົ່າພື້ນທີ່ ແລະ ຫ້ອງເຊົ່າ, ການວາງສະແດງ ແລະ ການບັນເທີງ. ແຕ່ລະສູນການຄ້າຂອງ LWPC ມີລາຍລະອຽດດັ່ງນີ້:

ລ/ດ	ຊື່	ລາຍລະອຽດ
1	ສຸນວາງສະແດງສິນຄ້າໄອເຕັກ	ອາຄານ ສູງ 15 ແມັດ ປະກອບດ້ວຍ ຊັ້ນທີ່ໜຶ່ງ ທີ່ມີເນື້ອທີ່ 8.200 ຕາແມັດ ແລະ 12 ຫ້ອງ ທີ່ມີຫຼາຍຂະໜາດ ຈັດສະແດງສິນຄ້າແຕ່ລະປະເພດຕາມລະບົບສາກົນເຊິ່ງມີການວາງສະແດງຕ່າງໆ ເປັນແຕ່ລະປະເພດຕາມແຕ່ລະໄລຍະ ເຊັ່ນ: ການວາງສະແດງສິນຄ້າ, ການຈັດກອງປະຊຸມ, ການຈັດງານດອງ, ການພົບປະ, ງານສະແດງຄອນເສີດ ແລະ ກິດຈະກຳໂຄສະນາສິນຄ້າ.
2	ສຸນການຄ້າໄອເຕັກມໍ	ອາຄານສຸນການຄ້າຂະໜາດໃຫຍ່ທີ່ມີຄວາມສູງ 8 ຊັ້ນ ແລະ ມີເນື້ອທີ່ 63.505 ຕາແມັດ ເພື່ອນຳສະເໜີການຄ້າຍ່ອຍ, ສຸນອາຫານ ແລະ ເຄື່ອງດື່ມ, ກິດຈະກຳເພື່ອການສຶກສາ ແລະ ການພັກຜ່ອນທີ່ຫລາກຫລາຍ.
3	ສວນນ້ຳໄອຊ່ຽນປາກ	ຖືວ່າເປັນສວນນ້ຳແຫ່ງໃຫຍ່ທີ່ສຸດໃນນະຄອນຫຼວງວຽງຈັນ, ມີພື້ນທີ່ ປະມານ 30.000 ຕາແມັດ ແລະ ສາມາດຮັບຮອງລູກຄ້າໄດ້ກວ່າ 3.000 ຄົນ. ເປັນສະຖານທີ່ ທີ່ມີເຄື່ອງຫຼິ້ນ ແລະ ກິດຈະກຳສຳລັບທຸກໆຄົນ. ເໝາະສົມຢ່າງຍິ່ງທີ່ຈະເພີ່ມຄວາມຕື່ນຕົ້ນ, ມີຊີວິດຊີວາ ແລະ ມ່ວນຊື່ນໃນວັນພັກຜ່ອນ.
4	ສຸນການຄ້າທົ່ງຂັນຄຳ	ເປັນໂຄງການທີ່ສ້າງແທນໂຄງການຕະຫຼາດຫຼັງເກົ່າພາຍໃຕ້ເງື່ອນໄຂສຳປະທານເປັນເວລາ 70 ປີ ເລີ່ມແຕ່ປີ 2014-2084. ອາຄານປະກອບມີ 5 ຊັ້ນ ແບ່ງອອກເປັນ 2 ສ່ວນຄື: 1.) ຊັ້ນໜຶ່ງແມ່ນເປັນຕະຫຼາດສົດ (ຮັກສາໄວ້ໃຫ້ເປັນກິດຈະກຳແບບດັ່ງເດີມຂອງຕະຫຼາດເກົ່າ ເຊິ່ງແບ່ງອອກເປັນສອງສ່ວນຄື: ມີເຄື່ອງປັບອາກາດ ແລະ ບໍ່ມີເຄື່ອງເປັບອາກາດ; 2.) ຊັ້ນສອງຫາຊັ້ນຫ້າ ເປັນສຸນກາງເພື່ອຮັກສາໄວ້ໃຫ້ເປັນພື້ນທີ່ເຊົ່າສຳລັບການເຮັດທຸລະກິດ ແລະ ສະຖານທີ່ບັນເທີງ.
5	ສຸນການຄ້າ ສະຫວັນ-ໄອເຕັກ	ອາຄານສາມຊັ້ນມີເນື້ອທີ່ປະມານ 13.050 ຕາແມັດ. ອາຄານມີຫ້ອງໂຖງທີ່ໃຫຍ່ສຳລັບການຈັດວາງສະແດງສິນຄ້າ, ການຈັດກອງປະຊຸມ, ການຈັດງານດອງ ແລະ ການຈັດງານສຳມະນາ. ມີຮ້ານສັບພະສິນຄ້າຕ່າງໜ, ພື້ນທີ່ຫວ່າງສຳລັບເຊົ່າ ແລະ ສະຖານທີ່ຈອດລົດທີ່ກວ້າງຂວາງ.

1.2.2. ໂຄງສ້າງຂອງບໍລິສັດ

❖ **ໂຄງຮ່າງການຈັດຕັ້ງ**

ໂຄງຮ່າງການຈັດຕັ້ງຂອງ ບໍລິສັດ ປະກອບດ້ວຍ ກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະກຳມະການ, ຜູ້ອຳນວຍການ, ຮອງຜູ້ອຳນວຍການ, ຜູ້ຈັດການທົ່ວໄປ ແລະ ພະນັກງານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:



❖ ຜູ້ຖືຮຸ້ນຂອງບໍລິສັດ

ຜູ້ຖືຮຸ້ນຂອງບໍລິສັດ ພ້ອມທັງຈຳນວນຮຸ້ນ ແລະ ສັດສ່ວນການຖືຄອງ ຮອດວັນທີ 17 ມີນາ 2023 (ຄັ້ງລ່າສຸດ) ມີ ລາຍລະອຽດດັ່ງລຸ່ມນີ້:

ລ/ດ	ລາຍຊື່	ຈຳນວນຮຸ້ນ	(%)
1	ບໍລິສັດ ທີເຄຊັ້ນເອດ ຈຳກັດ(ມະຫາຊົນ)	36.193.609	91,49%
2	ທ່ານ ທັດສະກອນ ທຳມະວົງ	1.436.200	3,63%
3	ທ່ານ ຣສ. ເດດພູວົງ ມຸລຣັຕນ໌	2.600	0,01%
4	ທ່ານ ສີບຸນທ່າ ສີບຸນມີ	3.500	0,01%
5	ທ່ານ ແສງສະຫວ່າງ ກິ່ງສະກາ	3.500	0,01%
6	ທ່ານ ທະນຸໄຊ ທຳມະວົງ	3.500	0,01%
7	ທ່ານ ສຸລາລັກ ມີໄມະຈິດ	2.700	0,01%
8	ທ່ານ ບາງ ສຸວິນດ ທຳມະວົງ	3.500	0,01%
9	ທ່ານ ດວງດີ ມີໄມະຈັນ	3.500	0,01%
10	ຜູ້ຖືຮຸ້ນລາຍຍ່ອຍ	1.908.300	4,82%
	ລວມທັງໝົດ	**39.560.909**	**100%**

❖ ສະພາບໍລິຫານ

ສະພາບໍລິຫານຂອງບໍລິສັດປະກອບມີທັງໝົດ 5 ທ່ານ ທີ່ມີຄຸນວຸດທິ ແລະ ປະສົບການໃນການບໍລິຫານ ມີລາຍລະອຽດດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ທັດສະຄອນ ທຳມະວົງ	ປະທານ
2	ທ່ານ ນາງ ສີພອນຄຳ ຄວງດາລາ	ສະມາຊິກ/ຜູ້ອຳນວຍການໃຫຍ່
3	ທ່ານ ສີບຸນທຳ ສີບຸນມີ	ສະມາຊິກ
4	ທ່ານ ຣສ ເດຄຸວ້ງ ມຸລຣ໌ເນ	ສະມາຊິກສະມາຊິກ/ກຳມະການອິດສະຫຼະ
5	ທ່ານ ສີຫວັກ ແສງດວງຈັນ	ສະມາຊິກ/ກຳມະການອິດສະຫຼະ/ປະທານກວດສອບພາຍໃນ

❖ ຄະນະບໍລິຫານ

ຄະນະບໍລິຫານງານຂອງບໍລິສັດປະກອບມີທັງໝົດ 8 ທ່ານ ທີ່ມີຄຸນວຸດທິ ແລະ ປະສົບການໃນການບໍລິຫານ ມີລາຍລະອຽດດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນາງ ສີພອນຄຳ ຄວງດາລາ	ຜູ້ອຳນວຍການໃຫຍ່
2	ທ່ານ ນາງ ລັຈງົມ ມາດນະນີວົງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ
3	ທ່ານ ນາງ ນິພາພອນ ບັນດາວົງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍທຳນຸບຳລຸງ
4	ທ່ານ ພຸທະວົງ ວັນລາວົງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍອະສັງຫາລິມະຊັບ
5	ທ່ານ ປິ່ງ ຮ່ວງສະນະໄຊ	ຮອງຜູ້ອຳນວຍການໃຫຍ່ ຝ່າຍໄອທີ
6	ທ່ານ ນາງ ຄຳພາ ຄຳບຸນເຮືອງ	ຮອງຜູ້ອຳນວຍການໃຫຍ່ ຝ່າຍການຄ້າ
7	ທ່ານ ນາງ ວຽງວິໄລ ມີ່ງບຸບຜາ	ຜູ້ຈັດການທົ່ວໄປ ສູນການຄ້າລາວໄອເຕັກມ໌
8	ທ່ານ ສຸວັນນາ ເສນໝຸນີ	ຜູ້ຈັດການທົ່ວໄປ ສວນນ້ຳໃຈຊ່ຽນຜາ

1.3. ສະຫຼຸບຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດ

ລາຍຮັບຫຼັກຂອງບໍລິສັດມາຈາກການໃຫ້ເຊົ່າພື້ນທີ່ ແລະ ການບໍລິການວາງສະແດງສິນຄ້າ ອີງຕາມຂໍ້ມູນໃນເອກະສານລາຍງານການເງິນປະຈຳປີ 2020 ແລະ 2021 ສາມາດສະຫຼຸບຕາມອັດຕາສ່ວນດັ່ງລຸ່ມນີ້:

ລາຍຮັບຈາກການຂາຍ ແລະ ບໍລິການ	ປີ 2020		ປີ 2021	
	ມູນຄ່າ (ລ້ານກີບ)	ສັດສ່ວນ (%)	ມູນຄ່າ (ລ້ານກີບ)	ສັດສ່ວນ (%)
ລາຍຮັບຈາກການໃຫ້ເຊົ່າ	14.399	38,51%	16.600	59,34%
ລາຍຮັບຈາກການບໍລິການວາງສະແດງ	14.867	39,76%	6.699	23,95%
ລາຍຮັບຈາກການບໍລິການສວນນ້ຳ	1.554	4,16%	1.085	3,88%
ລາຍຮັບຈາກຄ່າບໍລິຫານ	5.795	15,50%	3.279	11,72%
ລາຍຮັບຈາກບໍລິການອື່ນໆ	780	2,09%	312	1,12%
ລວມ	**37.395**	**100%**	**27.976**	**100%**

1.3.1. ໃບລາຍງານຜົນການດຳເນີນງານ

ຫົວໜ່ວຍ: ລ້ານກີບ	2019	2020	2021	9 ເດືອນ 2021	9 ເດືອນ 2022
ລາຍຮັບຈາກການຂາຍ ແລະ ບໍລິການ	45.453	37.395	24.976	20.771	34.228
ຕົ້ນທຶນໃນການຂາຍ ແລະ ການບໍລິການ	(36.172)	(26.388)	(21.450)	(17.412)	(23.330)
ກຳໄລຂັ້ນຕົ້ນ	**9.281**	**11.007**	**3.525**	**3.359**	**10.898**
ລາຍຈ່າຍບໍລິຫານ	(23.768)	(22.371)	(24.461)	(17.741)	(14.217)
ລາຍຮັບອື່ນໆ	877	557	345	272	319
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ,ສຸດທິ	(1.773)	(2.301)	(18.611)	(1.886)	(28.506)
ກຳໄລຈາກການດຳເນີນງານ	**(15.382)**	**(13.107)**	**(39.201)**	**(15.996)**	**(31.506)**
ລາຍຈ່າຍດອກເບ້ຍ	(119)	(948)	(1.240)	(946)	(376)
ກຳໄລ/ຂາດທຶນ ກ່ອນຫັກອາກອນກຳໄລ	**(15.502)**	**(14.056)**	**(40.441)**	**(16.942)**	**(31.882)**
ອາກອນກຳໄລ	-	-	-		-
ກຳໄລ/ຂາດທຶນ ສຳລັບປີ	**(15.503)**	**(14.056)**	**(40.441)**	**(16.942)**	**(31.882)**
ກຳໄລພື້ນຖານຕໍ່ຮຸ້ນ	**(392)**	**(355)**	**(1.022)**	**(428)**	**(806)**

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງ LWPC

1.3.2. ໃບລາຍງານຖານະການເງິນ

ຫົວໜ່ວຍ: ລ້ານກີບ	2019	2020	2021	9 ເດືອນ 2021	9 ເດືອນ 2022
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	2.255	4.624	3.993	3.569	4.382
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	34.818	38.421	38.585	36.527	78.469
ເຄື່ອງໃຊ້ໄມ້ໆ, ສຸດທິ	3.616	3.538	2.749	2.877	3.022
ຊັບສິນໝຸນວຽນອື່ນໆ	1.648	7.537	7.016	6.718	11.807
ລວມຊັບສິນໝຸນວຽນ	**42.337**	**54.120**	**52.343**	**49.691**	**97.681**
ຊັບສິນຄົງທີ່ ມີຕົວຕົນ, ສຸດທິ (ທີ່ດິນ, ອາຄານ ແລະ ອຸປະກອນ)	606.289	148.718	140.555	143.355	134.296
ຊັບສິນເພື່ອການລົງທຶນ	-	442.603	435.472	437.995	430.395
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	101	50	98	94	214
ຊັບສິນບໍ່ໝຸນວຽນອື່ນໆ	51.490	44.314	42.642	42.645	6.914
ລວມຊັບສິນບໍ່ໝຸນວຽນ	**657.880**	**635.686**	**618.767**	**624.089**	**571.818**
ລວມຊັບສິນ	**700.216**	**689.806**	**671.111**	**673.780**	**669.499**
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	138.741	148.930	177.816	154.351	202.288
ເງິນກູ້ຢືມ	30.400	30.400	32.832	30.400	30.400
ລາຍຮັບລ່ວງໜ້າ-ໝຸນວຽນ	4.587	4.587	4.499	5.945	4.241
ໜີ້ສິນໝຸນວຽນອື່ນໆ	36.204	34.395	34.616	33.413	39.126

ລວມໜີ້ສິນໝຸນວຽນ	209.932	218.312	249.763	224.109	276.055
ເງິນກູ້ໄລຍະຍາວ	7.728	13.667	14.008	13.918	21.596
ລາຍຮັບລ່ວງໜ້າ-ບໍ່ໝຸນວຽນ	332.045	321.372	311.326	315.778	307.716
ລວມໜີ້ສິນບໍ່ໝຸນວຽນ	**339.773**	**335.038**	**325.334**	**329.696**	**329.312**
ລວມໜີ້ສິນ	**549.706**	**553.350**	**575.097**	**553.805**	**605.367**
ທຶນຈົດທະບຽນທີ່ອອກ ແລະ ຖືຍາແລ້ວ	79.122	79.122	79.122	79.122	79.122
ສ່ວນເພີ່ມມູນຄ່າຮຸ້ນ	33.582	33.582	33.582	33.582	33.582
ສຳຮອງຈາກການຮ່ວມທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມດຽວກັນ	(12.996)	(12.996)	(12.996)	(12.996)	(12.996)
ຄັງສຳຮອງການລະບຽນການ	13.358	13.358	13.358	13.358	13.358
ກຳໄລສະສົມ	37.446	23.390	(17.051)	6.910	(48.933)
ລວມທຶນເຈົ້າຂອງ	**150.511**	**136.455**	**96.014**	**119.975**	**64.132**
ລວມໜີ້ສິນ ແລະ ທຶນເຈົ້າຂອງ	**700.216**	**689.806**	**671.111**	**673.780**	**669.499**

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງ LWPC

1.3.3. ໃບລາຍງານກະແສເງິນສົດ

ຫົວໜ່ວຍ: ລ້ານກີບ	2019	2020	2021	9 ເດືອນ 2021	9 ເດືອນ 2022
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ	(2.853)	(1.897)	(357)	(187)	603
ເງິນສົດສຸດທິຈາກກິດຈະກຳການລົງທຶນ	(4.412)	(1.255)	(842)	(308)	(400)
ເງິນສົດສຸດທິຈາກກິດຈະກຳການເງິນ	7.666	5.441	-	-	(289)
(ຫຼຸດລົງ)/ເພີ່ມຂຶ້ນສຸດທິໃນເງິນສົດ	401	2.289	(1.200)	(121)	(86)
ເງິນສົດໃນຕົ້ນປີ	1.780	2.255	4.624	3.994	3.993
ກຳໄລຈາກການແລກປ່ຽນໃນເງິນສົດ	74	81	569	(304)	476
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	**2.255**	**4.624**	**3.993**	**3.569**	**4.382**

ແຫຼ່ງທີ່ມາ: ເອກະສານລາຍງານການເງິນຂອງ LWPC

IV. ລາຍລະອຽດເພີ່ມເຕີມກ່ຽວກັບການສະເໜີຂໍຊື້ຮຸ້ນ

1. ວິທີການຕອບຮັບການສະເໜີຂໍຊື້ຮຸ້ນ

ໃນການຕອບຮັບການສະເໜີຊື້ຮຸ້ນ ຜູ້ຖືຮຸ້ນທີ່ມີຈຸດປະສົງຈະຂາຍຮຸ້ນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ແມ່ນຕ້ອງໄດ້ປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

1.1. ຜູ້ຖືຮຸ້ນສາມາດຂໍຮັບເອົາ **ແບບຕອບຮັບການສະເໜີຊື້ຮຸ້ນ (ຕາມເອກະສານຊ້ອນທ້າຍ 2)** ໄດ້ຈາກ ບໍລິສັດຫຼັກຊັບ ທີ່ເປັນຕົວແທນໃນການຮັບຊື້ຮຸ້ນ ກໍຄື ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ເຊິ່ງຕັ້ງຢູ່ຊັ້ນ 5 ອາຄານຕະຫຼາດຫຼັກຊັບລາວ, ຖະໜົນກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ພາຍໃນກຳນົດເວລາການສະເໜີຊື້ຮຸ້ນ ທີ່ໄດ້ລະບຸໄວ້ໃນ ພາກທີ 1 ຂໍ້ທີ 7 ຂອງໜັງສືສະເໜີຊື້ຮຸ້ນສະບັບນີ້ ຫຼື ສາມາດຂໍຮັບເອົາແບບຕອບຮັບການສະເໜີຊື້ຮຸ້ນ ໄດ້ຈາກ ບໍລິສັດຫຼັກຊັບ ທີ່ຜູ້ຖືຮຸ້ນເປີດບັນຊີນຳ;

1.2. ຂຽນແບບຟອມ "ແບບຕອບຮັບການສະເໜີຊື້ຮຸ້ນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) **(ຕາມເອກະສານຊ້ອນທ້າຍ 2)**" ຢ່າງຖືກຕ້ອງ ແລະ ຄົບຖ້ວນ ພ້ອມທັງລົງລາຍເຊັນຢັ້ງຢືນ ຫຼື ກໍລະນີມອບສິດໃຫ້ບຸກຄົນທີສາມດຳເນີນການແທນ ຕ້ອງມີໃບມອບສິດ **(ຕາມເອກະສານຊ້ອນທ້າຍ 4)** ຕາມແບບຟອມທີ່ໄດ້ກຳນົດໄວ້;

1.3. ຫຼັງຈາກຂຽນແບບຟອມແບບຕອບຮັບການສະເໜີຊື້ຮຸ້ນ ແລະ ປະກອບເອກະສານຖືກຕ້ອງຄົບຖ້ວນແລ້ວ ຜູ້ຖືຮຸ້ນຕ້ອງສົ່ງເອກະສານຕ່າງໆ ໃຫ້ກັບບໍລິສັດຫຼັກຊັບທີ່ຕົນເອງໄດ້ເປີດບັນຊີຢູ່ນຳ ເພື່ອກວດກາຄວາມຖືກຕ້ອງ ພາຍໃນໄລຍະເວລາຮັບຊື້ຮຸ້ນທີ່ກຳນົດໄວ້ໃນພາກທີ 1 ຂໍ້ທີ 7.

ເອກະສານຢັ້ງຢືນຕົວຕົນຂອງ ຜູ້ຖືຮຸ້ນທີ່ມີຈຸດປະສົງຂາຍຮຸ້ນ:

- ສຳລັບຜູ້ລົງທຶນປະເພດບຸກຄົນພາຍໃນ:
  - ສຳເນົາ ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (Passport);
  - ໃບຢັ້ງຢືນການຖືຄອງຮຸ້ນ LWPC (ຈາກບໍລິສັດຫຼັກຊັບທີ່ຕົນເປີດບັນຊີນຳ).
- ສຳລັບຜູ້ລົງທຶນປະເພດບຸກຄົນຕ່າງປະເທດ:
  - ສຳເນົາ ໜັງສືຜ່ານແດນ (Passport) ແລະ ເລກລະຫັດຜູ້ລົງທຶນ;
  - ໃບຢັ້ງຢືນການຖືຄອງຮຸ້ນ LWPC (ຈາກບໍລິສັດຫຼັກຊັບທີ່ຕົນເປີດບັນຊີນຳ).
- ສຳລັບຜູ້ລົງທຶນປະເພດສະຖາບັນ:
  - ສຳເນົາໃບທະບຽນວິສາຫະກິດ;
  - ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (Passport) ຂອງບຸກຄົນທີ່ໄດ້ຮັບມອບສິດ;
  - ໃບຢັ້ງຢືນການຖືຄອງຮຸ້ນ LWPC (ຈາກບໍລິສັດຫຼັກຊັບທີ່ຕົນເປີດບັນຊີນຳ).
- ກໍລະນີມອບສິດໃຫ້ບຸກຄົນທີສາມດຳເນີນການແທນ
  - ໃບມອບສິດ;
  - ສຳເນົາ ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (Passport) ຂອງຜູ້ມອບສິດ ແລະ ຜູ້ຮັບສິດ;

1.4. ບໍລິສັດຫຼັກຊັບທີ່ຮັບຜິດຊອບບັນຊີຂອງຜູ້ລົງທຶນ (ໝາຍເຖິງ ບໍລິສັດຫຼັກຊັບ ທີ່ຜູ້ຖືຮຸ້ນໄດ້ເປີດບັນຊີຫຼັກຊັບນຳ) ກວດກາເອກະສານ ແບບຕອບຮັບການສະເໜີຊື້ຮຸ້ນ ແລະ ເອກະສານປະກອບໃນການຢັ້ງຢືນການຖືຄອງຮຸ້ນໃນບັນຊີຂອງຜູ້ລົງທຶນ.

1.5. ບໍລິສັດຫຼັກຊັບທີ່ຮັບຜິດຊອບບັນຊີຂອງຜູ້ລົງທຶນ ສົ່ງລວມເອກະສານຕ່າງໆ ຈາກຜູ້ຖືຮຸ້ນທັງໝົດທີ່ມີຈຸດປະສົງຂາຍຮຸ້ນ ແລ້ວສົ່ງໃຫ້ບໍລິສັດຫຼັກຊັບທີ່ເປັນຕົວແທນການຮັບຊື້ຮຸ້ນ ຕາມທີ່ຢູ່ດັ່ງຕໍ່ໄປນີ້:

ຊື່ບໍລິສັດ	:	ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
ທີ່ຢູ່	:	ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 5, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
ໂທລະສັບ	:	021 265461, 021 265462, 021 265463
ຜູ້ຕິດຕໍ່	:	ທ່ານ ວຽງແກ້ວ ພົງສາ, ເບີຕິດຕໍ່: 020 55491414 ທ່ານ ນາງ ທິບພະພອນ ເພັດທະວີແສງ, ເບີຕິດຕໍ່: 020 54886648 (ພະແນກ ນາຍໜ້າຊື້-ຂາຍຫຼັກຊັບ)

2. ວິທີການຮັບຊື້ຮຸ້ນ

ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ໃນຖານະເປັນຕົວແທນໃນການຮັບຊື້ຮຸ້ນ ດຳເນີນການຮັບຊື້ຮຸ້ນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ທັງໝົດຈາກຜູ້ຖືຮຸ້ນທີ່ສະເໜີຂາຍຕາມເອກະສານຕ່າງໆທີ່ ແຕ່ລະບໍລິສັດຫຼັກຊັບຮັບຜິດຊອບບັນຊີລູກຄ້າຂອງຕົນ ສົ່ງລວມສົ່ງມາໃຫ້ ຕາມກຳນົດໄລຍະເວລາຮັບຊື້ຮຸ້ນ.

ຫຼັງຈາກກວດກາເອກະສານຕ່າງໆ ຖືກຕ້ອງຄົບຖ້ວນແລ້ວ ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການຮັບຊື້ຮຸ້ນ ດຳເນີນການປະກອບເອກະສານຕ່າງໆຕາມແບບຟອມຂອງ ຕລຊລ ເພື່ອກະກຽມໂອນຮຸ້ນຈຳນວນທັງໝົດ ທີ່ຜູ້ຖືຮຸ້ນສະເໜີຂາຍ ໃຫ້ຜູ້ສະເໜີຊື້ ແລ້ວສົ່ງເອກະສານດັ່ງກ່າວໃຫ້ ຕລຊລ ເພື່ອກະກຽມດຳເນີນການໂອນ. ພ້ອມດຽວກັນນັ້ນ ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການຮັບຊື້ຮຸ້ນ ສົ່ງລວມຍອດມູນຄ່າຈາກການສະເໜີຂາຍຮຸ້ນ ຂອງຜູ້ຖືຮຸ້ນລາຍຍ່ອຍ ລວມທັງຄ່າທຳນຽມໃນການໂອນຮຸ້ນຕ່າງໆ ແລ້ວເຣັດໜັງສືແຈ້ງເຖິງຜູ້ສະເໜີຊື້ ເພື່ອດຳເນີນການຊຳລະສະສາງ.

3. ວິທີການຊຳລະລາຄາ

ຫຼັງຈາກໄດ້ຮັບໜັງສືແຈ້ງຈາກ ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການຮັບຊື້ຮຸ້ນແລ້ວ ຜູ້ສະເໜີຊື້ ຕ້ອງດຳເນີນການໂອນເງິນເຂົ້າບັນຊີຫຼັກຊັບຂອງຕົນ ໃຫ້ຄົບຕາມຈຳນວນມູນຄ່າທີ່ຮັບແຈ້ງຈາກ ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການຮັບຊື້ຮຸ້ນ ເພື່ອກະກຽມຊຳລະລາຄາຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນລາຍຍ່ອຍ.

ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການຮັບຊື້ຮຸ້ນ ເຣັດໜັງສືຢັ້ງຢືນວ່າເງິນຊຳລະລາຄາຮຸ້ນ ແລະ ຄ່າທຳນຽມ ຈາກຜູ້ສະເໜີຊື້ ແຈ້ງໃຫ້ ຕລຊລ ຮັບຊາບ ເພື່ອດຳເນີນການໂອນຮຸ້ນ ຈາກບັນຊີຜູ້ຖືຮຸ້ນ ໄປເຂົ້າບັນຊີ ຜູ້ສະເໜີຊື້ ແລະ ດຳເນີນການຊຳລະສະສາງ ກໍຄື ໂອນເງິນໃນບັນຊີຫຼັກຊັບຂອງ ຜູ້ສະເໜີຊື້ ເຂົ້າບັນຊີຫຼັກຊັບຂອງຜູ້ຖືຮຸ້ນແຕ່ລະລາຍ.

4. ສິດຂອງຜູ້ຖືຮຸ້ນທີ່ມີຈຸດປະສົງທີ່ຈະຂາຍຮຸ້ນ

ຜູ້ຖືຮຸ້ນທີ່ມີຈຸດປະສົງທີ່ຈະຂາຍຮຸ້ນ ມີສິດໃນການໄດ້ຮັບເງິນຊຳລະລາຄາຮຸ້ນຕາມມູນຄ່າທີ່ສະເໜີຂາຍ ຫຼັງຈາກຜູ້ສະເໜີຊື້ໄດ້ຮັບຮຸ້ນ ຈາກການໂອນຮຸ້ນຜ່ານຕະຫຼາດຫຼັກຊັບລາວ ເປັນທີ່ຮຽບຮ້ອຍແລ້ວ.

ກໍລະນີມີເຫດການເກີດຂຶ້ນຊຶ່ງສົ່ງຜົນໃຫ້ມີການປ່ຽນແປງໃນລາຄາສະເໜີຊື້ ຕາມທີ່ໄດ້ກຳນົດໄວ້ໃນ ພາກທີ 1 ຂໍ້ ທີ 6 ຂອງໜັງສືສະເໜີຊື້ສະບັບນີ້ ຜູ້ສະເໜີຊື້ຈະດຳເນີນການດັ່ງຕໍ່ໄປນີ້:

- ກໍລະນີທີ່ມີການປັບລາຄາສະເໜີຊື້ເພີ່ມຂຶ້ນ ຜູ້ສະເໜີຊື້ຈະຊຳລະລາຄາຮຸ້ນຕາມລາຄາທີ່ເພີ່ມຂຶ້ນນັ້ນ ໃຫ້ແກ່ຜູ້ ສະເໜີຂາຍທຸກລາຍ ເວັ້ນແຕ່ຈຳນວນຮຸ້ນທີ່ຜູ້ຖືຮຸ້ນທີ່ໄດ້ສະແດງເຈດຈຳນົງທີ່ຈະຂາຍໄວ້ກ່ອນວັນທີ ຜູ້ສະເໜີຊື້ ປະກາດແກ້ໄຂຂໍ້ສະເໜີນັ້ນ ໂດຍມີຈຸດປະສົງທີ່ບໍ່ສາມາດຍົກເລີກໄດ້ ຜູ້ສະເໜີຊື້ ຈະຕ້ອງຊຳລະລາຄາຮຸ້ນ ຈຳນວນດັ່ງກ່າວ ຕາມລາຄາສະເໜີຊື້ເດີມ ກ່ອນມີການແກ້ໄຂ;
- ກໍລະນີທີ່ມີການປັບລາຄາສະເໜີຊື້ຫຼຸດລົງ ຜູ້ສະເໜີຊື້ຈະຊຳລະລາຄາຮຸ້ນຕາມລາຄາທີ່ຫຼຸດລົງນັ້ນ ໃຫ້ແກ່ຜູ້ສະເ ໜີຂາຍທຸກລາຍ ເວັ້ນແຕ່ຈຳນວນຮຸ້ນທີ່ຜູ້ຖືຮຸ້ນທີ່ໄດ້ສະແດງເຈດຈຳນົງທີ່ຈະຂາຍໄວ້ກ່ອນວັນທີ ຜູ້ສະເໜີຊື້ ປະກາດແກ້ໄຂຂໍ້ສະເໜີນັ້ນ ໂດຍມີຈຸດປະສົງທີ່ບໍ່ສາມາດຍົກເລີກໄດ້ ຜູ້ສະເໜີຊື້ ຈະຕ້ອງຊຳລະລາຄາຮຸ້ນ ຈຳນວນດັ່ງກ່າວ ຕາມລາຄາສະເໜີຊື້ເດີມ ກ່ອນມີການແກ້ໄຂ.

5. ເງື່ອນໄຂການຍົກເລີກຈຸດປະສົງໃນການຂາຍຮຸ້ນ

ຜູ້ຖືຮຸ້ນທີ່ຕອບຮັບການສະເໜີຮຸ້ນແລ້ວ ຖ້າຕ້ອງການຍົກເລີກການສະເໜີຂາຍດັ່ງກ່າວ ສາມາດດຳເນີນການໄດ້ດັ່ງ ຕໍ່ໄປນີ້:

5.1 ໄລຍະເວລາໃນການຍົກເລີກການສະເໜີຂາຍ

ຜູ້ຖືຮຸ້ນທີ່ມີຈຸດປະສົງທີ່ຈະຂາຍຮຸ້ນ ສາມາດຍົກເລີກການສະເໜີຂາຍຮຸ້ນ ໄດ້ກ່ອນ 5 ວັນສຸດທ້າຍຂອງ ໄລຍະເວລາຮັບຊື້ຮຸ້ນຕາມທີ່ໄດ້ກຳນົດໄວ້ໃນ ພາກທີ 1 ຂໍ້ທີ 7 ຂອງໜັງສືສະເໜີຊື້ສະບັບນີ້;

5.2 ວິທີການຍົກເລີກການສະແດງຄວາມຕ້ອງການຂາຍ

- ຂຽນແບບຟອມ ຄຳຮ້ອງຂໍຍົກເລີກການສະແດງເຈດຈຳນົງໃນການຂາຍ **(ຕາມເອກະສານຊ້ອນທ້າຍ 3)** ຢ່າງ ຖືກຕ້ອງ ແລະ ຄົບຖ້ວນ ພ້ອມທັງລົງລາຍເຊັນຢັ້ງຢືນ ຫຼື ກໍລະນີມອບສິດໃຫ້ບຸກຄົນທີສາມດຳເນີນການ ແທນ ຕ້ອງມີໃບມອບສິດ ຕາມແບບຟອມທີ່ໄດ້ກຳນົດໄວ້;
- ສົ່ງແບບຄຳຂໍຍົກເລີກການສະເໜີຂາຍຮຸ້ນ ໃຫ້ກັບບໍລິສັດຫຼັກຊັບທີ່ຕົນເອງໄດ້ເປີດບັນຊີຢູ່ນຳ ເພື່ອດຳເນີນ ການຍົກເລີກການຕອບຮັບການສະເໜີຊື້ຮຸ້ນ;
- ບໍລິສັດຫຼັກຊັບທີ່ຮັບຜິດຊອບບັນຊີຜູ້ລົງທຶນ ດຳເນີນການຍົກເລີກການຕອບຮັບການສະເໜີຊື້ຮຸ້ນ ຕາມ ການສະເໜີຂອງຜູ້ຖືຮຸ້ນ ກ່ອນຈະສົ່ງລວມເອກະສານຕ່າງໆເພື່ອສົ່ງໃຫ້ ບໍລິສັດຫຼັກຊັບທີ່ເປັນຕົວແທນ ດຳເນີນການສະເໜີຊື້.

5.3 ຈຳນວນຮຸ້ນຂອງຜູ້ຖືຮຸ້ນ ທີ່ໄດ້ຍົກເລີກການຕອບຮັບການສະເໜີຊື້ ຈາກຜູ້ສະເໜີຊື້ຮຸ້ນ ແມ່ນຈະຍັງຄົງຢູ່ໃນ ບັນຊີຫຼັກຊັບ ທີ່ຕົນເອງໄດ້ເປີດບັນຊີໄວ້ກັບບໍລິສັດຫຼັກຊັບທີ່ຮັບຜິດຊອບ ໂດຍຈະບໍ່ມີການດຳເນີນການໂອນ ຮຸ້ນ ໃຫ້ແກ່ຜູ້ສະເໜີຊື້.

6. ການກຳນົດລາຄາສະເໜີຊື້

ລາຄາສະເໜີຂໍຊື້ຮຸ້ນແມ່ນ 9.100 ກີບຕໍ່ຮຸ້ນ ເປັນລາຄາສູງສຸດພາຍໃນ 90 ວັນຊື້ ຂາຍ (ນັບແຕ່ວັນທີ 02/09/2022 ຫາ ວັນທີ 13/01/2023) ເຊິ່ງລາຄາດັ່ງກ່າວ ສອດຄ່ອງຕາມໜັງສືແຈ້ງການຂອງ ຕລຊລ (ເລື່ອງ: ກົນໄກ ການຖອນຈົດທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 1510/ຕລຊລ, ລົງວັນທີ 03 ພະຈິກ 2022) ເຊິ່ງກຳນົດໃຫ້ ຄິດໄລ່ດ້ວຍ 4 ວິທີ ແລະ ລາຄາສະເໜີຊື້ຮຸ້ນ ຕ້ອງບໍ່ຕ່ຳກວ່າລາຄາສູງສຸດຂອງລາຄາທີ່ຄິດໄລ່ຕາມ 4 ວິທີ.

V ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ

ຂ້າພະເຈົ້າຮັບຮອງວ່າ:

(1) ຂ້າພະເຈົ້າມີຄວາມຕັ້ງໃຈຍື່ນສະເໜີຂໍຊື້ຮຸ້ນໃນຄັ້ງນີ້ຢ່າງແທ້ຈິງ;

(2) ລາຄາສະເໜີຊື້ໃນຄັ້ງນີ້ ເປັນໄປຕາມຂໍ້ກຳນົດ ຂອງ ຕລຊ;

(3) ຂ້າພະເຈົ້າມີຄວາມຕັ້ງໃຈທີ່ຈະປະຕິບັດຕາມເງື່ອນໄຂ ທີ່ຂ້າພະເຈົ້າລະບຸໄວ້ໃນໜັງສືສະເໜີຊື້ຮຸ້ນສະບັບນີ້.

(4) ຂໍ້ມູນຕາມໜັງສືສະເໜີຊື້ຮຸ້ນ ແມ່ນຖືກຕ້ອງຄົບຖ້ວນຕາມຄວາມຈິງ, ບໍ່ມີຂໍ້ມູນທີ່ອາດເຮັດໃຫ້ບຸກຄົນອື່ນເຂົ້າໃຈຜິດໃນປະເດັນສຳຄັນ ແລະ ບໍ່ໄດ້ມີການປົກປິດຂໍ້ມູນທີ່ເປັນປະເດັນສຳຄັນ ທີ່ຄວນບອກໃຫ້ຊະແຈ້ງ.

ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ
(ຜູ້ຍື່ນສະເໜີຂໍຊື້ຮຸ້ນ)

ທ່ານ ນາງ ສີພອນຄຳ ດວງດາລາ
ຜູ້ອຳນວຍການໃຫຍ່

ຂ້າພະເຈົ້າໃນຖານະຜູ້ຈັດກຽມໜັງສືສະເໜີຂໍຊື້ຮຸ້ນ ຂໍຮັບຮອງວ່າໃນການປະຕິບັດໜ້າທີ່ດັ່ງນີ້.

(1) ໄດ້ພິຈາລະນາຂໍ້ມູນຂອງຜູ້ຍື່ນສະເໜີຂໍຊື້ຮຸ້ນຈົນເຊື່ອໝັ້ນວ່າ ຂໍ້ມູນກ່ຽວກັບຜູ້ຍື່ນສະເໜີຂໍຊື້ຮຸ້ນທີ່ເປີດເຜີຍໃນໜັງສືສະເໜີຂໍຊື້ຮຸ້ນ ມີຄວາມຖືກຕ້ອງຄົບຖ້ວນ, ບໍ່ມີຂໍ້ມູນທີ່ອາດເຮັດໃຫ້ບຸກຄົນອື່ນເຂົ້າໃຈຜິດໃນປະເດັນສຳຄັນ ລວມເຖິງບໍ່ມີການປົກປິດຂໍ້ມູນທີ່ເປັນປະເດັນສຳຄັນ ທີ່ຄວນບອກໃຫ້ຈະແຈ້ງ;

(2) ໄດ້ກວດສອບຫຼັກຖານທາງການເງິນແລ້ວເຫັນວ່າ ຜູ້ຍື່ນສະເໜີຂໍຊື້ ສາມາດດຳເນີນການຕາມຂໍ້ກຳນົດສະເໜີຊື້ຂ້າງເທິງໄດ້ຈິງ;

(3) ຈາກຂໍ້ມູນການເຄື່ອນໄຫວຂອງລາຄາຮຸ້ນໃນໄລຍະເວລາ 90 ວັນຊື້ ຂາຍ ກ່ອນວັນຍື່ນສະເໜີຂໍຊື້ (ນັບແຕ່ວັນທີ 02/09/2022 ຫາ ວັນທີ 13/01/2023) ແລະ ລາຄາສະເໜີຂໍຊື້ ທີ່ຂ້າພະເຈົ້າໄດ້ກວດສອບແລ້ວນັ້ນ ບໍ່ມີຂໍ້ສົງໃສວ່າລາຄາສະເໜີຂໍຊື້ໃນຄັ້ງນີ້ ບໍ່ເປັນໄປຕາມຂໍ້ກຳນົດຂອງ ຕລຊລ;

(4) ໄດ້ສອບຖາມຄວາມຄົບຖ້ວນຖືກຕ້ອງຂອງຂໍ້ມູນອື່ນໆ ໃນໜັງສືສະເໜີຊື້ສະບັບນີ້ ດ້ວຍຄວາມລະມັດລະວັງ ແລະ ຮອບຄອບ ເຫັນວ່າຂໍ້ມູນຖືກຕ້ອງ, ຄົບຖ້ວນ ແລະ ບໍ່ມີຂໍ້ມູນທີ່ອາດເຮັດໃຫ້ບຸກຄົນອື່ນເຂົ້າໃຈຜິດໃນປະເດັນສຳຄັນ ລວມເຖິງບໍ່ມີການປົກປິດຂໍ້ມູນທີ່ເປັນປະເດັນສຳຄັນ ທີ່ຄວນບອກໃຫ້ຈະແຈ້ງ.


ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
(ຜູ້ຈັດກຽມໜັງສືສະເໜີຊື້)

ທ່ານ ນາງ ວິໄລທອງ ທຳມະວົງສາ
ຮັກສາການ ຜູ້ອຳນວຍການ

ເອກະສານຊ້ອນທ້າຍ

1. ຂັ້ນຕອນການສະເໜີຊື້ຮຸ້ນ
2. ແບບຟອມຕອບຮັບການສະເໜີຊື້ຮຸ້ນ
3. ແບບຟອມຄຳຮ້ອງຂໍຍົກເລີກການສະແດງເຈດຈຳນົງໃນການຂາຍຮຸ້ນ
4. ໃບມອບສິດ

ຂັ້ນຕອນການດຳເນີນການສະເໜີຊື້ຮຸ້ນ ບໍລິສັດ ລາວເວີນ ມະຫາຊົນ(LWPC)



ແບບຟອມສະເໜີຊື້ຫຼັກຊັບຂອງ ບໍລິສັດ ລາວເວີນ ມະຫາຊົນ(LWPC)

ວັນທີ ..... ເລກທີ .....

ຮຽນ: ຜູ້ຕ່ຳກວ່າສະເໜີຊື້ ແລະ ບໍລິສັດຫຼັກຊັບ ລ້ານຊ້ຳງ ມະຫາຊົນ (ຕົວແທນໃນການຮັບຊື້ຫຼັກຊັບ)

ຂ້າພະເຈົ້າ/ພວກເຮົາ ..... ເລກບັນຊີຫຼັກຊັບ .....

ຊື່ບັນຊີຫຼັກຊັບ ..... ບໍລິສັດຫຼັກຊັບ .....

ສຳເນົາເອກະສານປະກອບ: ( ) ບັດປະຊາຊົນ ( ) ບັດຕ່າງດ້າວ ( ) ໜັງສືຜ່ານແດນ ( ) ໃບທະບຽນວິສາຫະກິດ ເລກທີ .....

ສັນຊາດ..... ວັນເດືອນປີເກີດ ..... ອາຊີບ ..... ທີ່ຢູ່ປະຈຸບັນ .....

ໂທລະສັບ ..... ມືຖື ..... ອີເມວ .....

ກ່ຽວກັບທີ່ຈະຂາຍຮຸ້ນສາມັນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ດັ່ງລາຍລະອຽດລຸ່ມນີ້:

ຈຳນວນຮຸ້ນທີ່ຂາຍ	ລາຄາຂາຍ (ກີບ/ຮຸ້ນ)	ມູນຄ່າຂາຍ (ກີບ)	ຄ່າທຳນຽມໃນການຂາຍຮຸ້ນ 0,34%	ຈຳນວນເງິນທີ່ໄດ້ຮັບຈາກການຂາຍຮຸ້ນ (ກີບ)
ຈຳນວນເງິນເປັນຕົວໜັງສື:				

ຂ້າພະເຈົ້າ/ພວກເຮົາ ໄດ້ສຶກສາຂໍ້ມູນເງື່ອນໄຂ ແລະ ຂໍ້ກຳນົດຢ່າງຄົບຖ້ວນ ແລະ ກ່ຽວກັບຂະບວນການສະເໜີຊື້ຫຼັກຊັບ ຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ຕາມເງື່ອນໄຂ ແລະ ຂໍ້ກຳນົດ ທີ່ລະບຸໃນການສະເໜີຊື້ຫຼັກຊັບ ແລະ ຈະບໍ່ມີການຍົກເລີກການສະແດງເຈດຕະນາສະເໜີຂາຍຫຼັກຊັບດັ່ງກ່າວບໍ່ວ່າກໍລະນີໃດໆ ເວັ້ນເສຍແຕ່ເປັນການຍົກເລີກຕາມເງື່ອນໄຂ ແລະ ຂໍ້ກຳນົດທີ່ລະບຸໄວ້ໃນການສະເໜີຊື້ຫຼັກຊັບນີ້ເທົ່ານັ້ນ.

ຂ້າພະເຈົ້າ/ພວກເຮົາ ຂໍມອບສິດໃຫ້ ບໍລິສັດຫຼັກຊັບ ລ້ານຊ້ຳງ ມະຫາຊົນ ເປັນຜູ້ຕາງໜ້າໃນການດຳເນີນການຂາຍ ແລະ ຊື່ງມອບຮຸ້ນສາມັນຂອງ ຂ້າພະເຈົ້າ/ພວກເຮົາ ຕາມລາຍລະອຽດທີ່ກ່າວມາຂ້າງເທິງນັ້ນ ລວມທັງການຊຳລະລາຄາຂາຍຮຸ້ນດັ່ງກ່າວ ລວມໄປເຖິງການດຳເນີນທຸລະກຳອື່ນໆ ທີ່ກ່ຽວຂ້ອງກັບການຂາຍ ແລະ ການຮັບຊຳລະລາຄາຮຸ້ນແທນ ຂ້າພະເຈົ້າ/ພວກເຮົາ.

ວິທີການຮັບເງິນຈາກການຂາຍຫຼັກຊັບ:

ການຊຳລະເງິນຈາກການຂາຍຮຸ້ນແມ່ນດຳເນີນການໂດຍວິທີຊຳລະສະສາງຜ່ານລະບົບຂອງ ຕະຫຼາດຫຼັກຊັບລາວ ຄື: ຜ່ານຫຼັກຊີການສະເໜີຊື້ຮຸ້ນແລ້ວ ຕະຫຼາດຫຼັກຊັບລາວ ດຳເນີນການໂອນຮຸ້ນໃຫ້ແກ່ຜູ້ສະເໜີຊື້ຮຸ້ນ ແລະ ຊຳລະສະສາງຈຳນວນເງິນໃຫ້ແກ່ຜູ້ຖືຮຸ້ນ ດ້ວຍການໂອນເງິນເຂົ້າບັນຊີຫຼັກຊັບຂອງຜູ້ຖືຮຸ້ນ, ດັ່ງລາຍລະອຽດລຸ່ມນີ້:

❑ ເລກບັນຊີຫຼັກຊັບ: ❑ ຊື່ບັນຊີຫຼັກຊັບ

ຜູ້ຖືຮຸ້ນສາມາດຮັບເງິນຈາກການຂາຍຮຸ້ນ ດ້ວຍການໂອນເງິນຈາກບັນຊີຫຼັກຊັບ ໄປຫາ ບັນຊີທີ່ຫາຄານຂອງຕົນ.

ນອກນັ້ນ ໄດ້ຄັດຄັດເອກະສານເພື່ອເປັນຫຼັກຖານປະກອບໃນການດຳເນີນການ ຄື: ໃບຢັ້ງຢືນການຖືຮຸ້ນ ຈາກບໍລິສັດຫຼັກຊັບ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນ ມາພ້ອມ ແລະ ຂ້າພະເຈົ້າ/ພວກເຮົາ ຂໍຮັບຮອງວ່າ ຮຸ້ນສາມັນທັງໝົດທີ່ສະແດງເຈດຕະນາຂາຍນີ້ເປັນກຳມະສິດຂອງ ຂ້າພະເຈົ້າ/ພວກເຮົາ ຢ່າງຖືກຕ້ອງຕາມກົດໝາຍ ໂດຍບໍ່ໄດ້ມີການນຳໄປຈຳນຳ ຫຼື ມີພັນທະກັບໃຜ ຫຼື ບຸກຄົນພາຍນອກ.

ຜູ້ຮັບ:	ຜູ້ກວດສອບ:	ຜູ້ອະນຸມັດ:
.....	.....	.....

ລາຍເຊັນຜູ້ສະເໜີ/ຜູ້ຮັບມອບສິດ.....

ຊື່ແຈ້ງ .....

ໜັງສືຢືນຢັນການຕອບຮັບການສະເໜີຊື້ຫຼັກຊັບ

ແບບຕອບຮັບການສະເໜີຊື້ເລກທີ ....., ວັນທີ.....

ບໍລິສັດຫຼັກຊັບ ລ້ານຊ້ຳງ ມະຫາຊົນ ໄດ້ຮັບແບບຕອບຮັບການສະເໜີຊື້ຮຸ້ນສາມັນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ຈາກຜູ້ສະແດງຈຸດປະສົງໃນການຂາຍ ດັ່ງນີ້:

- ຊື່ ແລະ ນາມສະກຸນ (ຜູ້ມີຈຸດປະສົງທີ່ຈະຂາຍ) .....
- ເລກບັນຊີຫຼັກຊັບ .....; ຊື່ບັນຊີຫຼັກຊັບ .....; ບໍລິສັດຫຼັກຊັບ .....;
- ຈຳນວນຮຸ້ນທີ່ສະເໜີຂາຍ .....; ລາຄາຂາຍຕໍ່ຮຸ້ນ .....;. ມູນຄ່າ .....; ຄ່າທຳນຽມຂາຍ .....; ມູນຄ່າຈາກການຂາຍ .....; ເປັນຕົວໜັງສື .....

ລາຍເຊັນຜູ້ຮັບ .....

ຊື່ແຈ້ງ .....

ແບບຄຳຮ້ອງຂໍຍົກເລີກການສະແດງເຈດຈຳນົງໃນການຂາຍຫຼັກຊັບຂອງ ບໍລິສັດ ລາວເວີນ ມະຫາຊົນ(LWPC)

ວັນທີ ..... ເລກທີ .....

ຮຽນ: ຜູ້ທຳການສະເໜີຊື້ ແລະ ຕົວແທນໃນການດຳເນີນການຮັບຊື້ຫຼັກຊັບ

ຂ້າພະເຈົ້າ/ພວກເຮົາ .... ເລກບັນຊີຫຼັກຊັບ .....

ຊື່ບັນຊີຫຼັກຊັບ ..... ບໍລິສັດຫຼັກຊັບ .....

ສຳນົກເອກະສານປະກອບ: ( ) ບັດປະຊາຊົນ ( ) ບັດຕ່າງດ້າວ ( ) ໜັງສືຜ່ານແດນ ( ) ໃບທະບຽນວິສາຫະກິດ ເລກທີ .....

ສັນຊາດ..... ວັນເດືອນປີເກີດ ..... ອາຊີບ ..... ທີ່ຢູ່ປະຈຸບັນ .....

ໂທລະສັບ ..... ມືຖື ..... ອີເມວ .....

ຂໍຍົກເລີກການສະແດງເຈດຈຳນົງໃນການຂາຍຮຸ້ນສາມັນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ຈຳນວນ ..... ຮຸ້ນ, ເຊິ່ງຂ້າພະເຈົ້າ/ພວກເຮົາ ໄດ້ຍື່ນແບບຕອບຮັບການສະເໜີຊື້ຫຼັກຊັບ ໃນວັນທີ ..... ເລກທີ.....
ໃຫ້ແກ່ບໍລິສັດຫຼັກຊັບ .....

ພ້ອມກັນນີ້ໄດ້ຕິດຄັດເອກະສານເພື່ອເປັນຫຼັກຖານປະກອບໃນການດຳເນີນການ ຄື: ແບບຕອບຮັບການສະເໜີຊື້ຫຼັກຊັບ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນ ມາພ້ອມ ແລະ ຂ້າພະເຈົ້າ/ພວກເຮົາ ຂໍຮັບຮອງວ່າການຂໍຍົກເລີກການສະແດງເຈດຈຳນົງໃນການຂາຍຫຼັກຊັບໃນຄັ້ງນີ້ ຂ້າພະເຈົ້າ/ພວກເຮົາ ຂໍຍອມຮັບຕາມເງື່ອນໄຂການຍົກເລີກ ແລະ ຂໍ້ກຳນົດຕ່າງໆທີ່ໄດ້ລະບຸໄວ້ໃນໜັງສືສະເໜີຊື້ທຸກປະການ.

ລາຍເຊັນຜູ້ຍົກເລີກ/ຜູ້ຮັບມອບສິດ .....

ຊື່ແຈ້ງ .....

ໜັງສືຢືນຢັນການຍົກເລີກການສະແດງເຈດຈຳນົງໃນການຂາຍຫຼັກຊັບ ແບບຄຳຮ້ອງຂໍຍົກເລີກເລກທີ ....., ວັນທີ.....

ບໍລິສັດຫຼັກຊັບ .....

ໄດ້ຮັບແບບຄຳຮ້ອງຂໍຍົກເລີກການສະແດງເຈດຈຳນົງໃນການຂາຍຫຼັກຊັບຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ຈາກຜູ້ລົງທຶນທີ່ໄດ້ຍື່ນເອກະສານຕອບຮັບການສະເໜີຂາຍຫຼັກຊັບ ດັ່ງລາຍລະອຽດຕໍ່ໄປນີ້:

- ຊື່ ແລະ ນາມສະກຸນ (ຜູ້ຂໍຍົກເລີກການຂາຍຫຼັກຊັບ) .....
- ເລກບັນຊີຫຼັກຊັບ .....; ຊື່ບັນຊີຫຼັກຊັບ .....
- ຈຳນວນຮຸ້ນ ..... (ເປັນຕົວໜັງສື) .....
- ແບບຕອບຮັບການສະເໜີຊື້ຫຼັກຊັບ ເລກທີ ..... ລົງວັນທີ .....

ລາຍເຊັນຜູ້ຮັບ .....

ທີ່ນະຄອນຫຼວງວຽງຈັນ, ວັນທີ .....

ໃບມອບສິດ

ຂ້າພະເຈົ້າ/ພວກເຮົາ ....., ອາຍຸ ..... ປີ, ສັນຊາດ .....
ບັດປະຊາຊົນ ( )ບັດຕ່າງດ້າວ ( )ໜັງສືຜ່ານແດນ ( )ໃບທະບຽນວິສາຫະກິດ ( ) ເລກທີ .....
ທີ່ຢູ່ປະຈຸບັນ .....
ຖືຮຸ້ນສາມັນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC) ຈຳນວນ ..... ຮຸ້ນ,

ຂໍມອບສິດໃຫ້ ....., ອາຍຸ ..... ປີ, ສັນຊາດ .....
ບັດປະຊາຊົນ ( )ບັດຕ່າງດ້າວ ( )ໜັງສືຜ່ານແດນ ( )ໃບທະບຽນວິສາຫະກິດ ( ) ເລກທີ .....
ທີ່ຢູ່ປະຈຸບັນ .....

ເປັນຜູ້ຮັບມອບສິດຈາກຂ້າພະເຈົ້າ/ພວກເຮົາ ໃນກໍລະນີ (ສາມາດເລືອກໄດ້ຫຼາຍກວ່າ 1 ກໍລະນີ):

- ☐ ດຳເນີນການຂາຍ, ໂອນ ແລະ ສົ່ງມອບຮຸ້ນຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC);
- ☐ ດຳເນີນການຮັບເງິນຈາກການຂາຍຮຸ້ນ ຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC);
- ☐ ດຳເນີນການຍົກເລີກການສະແດງເຈດຕະນາສະເໜີຂາຍຮຸ້ນ ຂອງ ບໍລິສັດ ລາວເວີນ ມະຫາຊົນ (LWPC).

ທຸລະກຳໃດທີ່ຜູ້ຮັບມອບສິດ ໄດ້ດຳເນີນການພາຍໃນຂອບເຂດສິດດັ່ງກ່າວ ແມ່ນປຽບສະເໝືອນ ຂ້າພະເຈົ້າ/ພວກເຮົາ ໃນຖານະ ຜູ້ມອບສິດ ໄດ້ດຳເນີນການດ້ວຍຕົນເອງທຸກປະການ.

ລາຍເຊັນຜູ້ຮັບມອບສິດ.....	**ລາຍເຊັນຜູ້ມອບສິດ**
.....	
(ຊື່ແຈ້ງ .....)	(ຊື່
ແຈ້ງ .....)	
ພະຍານ	
ພະຍານ	

ເອກະສານປະກອບ:

- ສຳເນົາບັດປະຊາຊົນ/ບັດຕ່າງດ້າວ/ໜັງສືຜ່ານແດນ/ໃບທະບຽນວິສາຫະກິດ ຂອງຜູ້ມອບສິດ ແລະ ຜູ້ຮັບມອບສິດ.

ເອກະສານຄັດຕິດ 7: ໃບມອບສິດ

ເລກທະບຽນຜູ້ຖືຮຸ້ນ .....

1. ຂ້າພະເຈົ້າ .....ສັນຊາດ : .....ທີ່ຢູ່

.....

ເປັນຜູ້ຖືຮຸ້ນຂອງບໍລິສັດ ລາວເວີນມະຫາຊົນ

ມີຮຸ້ນທີ່ຖືຈຳນວນ: .....ຮຸ້ນທີ່ເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

ຂໍມອບໝາຍໃຫ້ທ່ານ /ທ່ານ .....

ສັນຊາດ.....ທີ່ຢູ່

.....

ໃຫ້ເປັນຜູ້ຕາງໜ້າຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມວິສາມັນຜູ້ຖືຮຸ້ນຂອງບໍລິສັດລາວເວີນມະຫາຊົນ ທີ່ຈະຈັດຂຶ້ນໃນເວລາບ່າຍ 3:00 ໂມງ ຂອງວັນທີ 27 ເມສາ 2023.

2. ຂ້າພະເຈົ້າອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງຈາກສອງທາງ ເລືອກລຸ່ມນີ້):

2.1. ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື

2.2. ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນເຫັນດີ ຫຼື ບໍ່ເຫັນດີໃນທຸກໆວາລະລຸ່ມນີ້) :

ວາລະທີ 1: ລາຍງານ ຜົນໄດ້ຮັບ ຂອງມະຕິຕົກລົງ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ຄັ້ງກ່ອນ ເພື່ອເປັນຂໍ້ມູນເພີ່ມຕື່ມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການເງິນລວມປະຈຳປີ 2022 ທີ່ສິ້ນສຸດລົງໃນວັນທີ 31 ທັນວາ 2022, ເຊິ່ງເປັນ ບົດລາຍງານທີ່ໄດ້ຮັບການກວດສອບຈາກ ບໍລິສັດກວດສອບພາຍນອກ ກໍ່ຄືບໍລິສັດເອີນແອນຢັງລາວ ຈຳກັດ..

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກຳນົດໄວ້ໃນກົດໝາຍ ແລະ ງົບຈ່າຍເງິນປັນຜົນ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 5: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ແຜນປະຕິບັດງານປະຈຳປີ 2023 ຂອງບໍລິສັດ ລາວເວີນມະຫາຊົນ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 6: ພິຈາລະນາ ແລະ ແຕ່ງຕັ້ງ ຜູ້ກວດສອບພາຍນອກ ແລະ ກຳນົດຄ່າຈ້າງຜູ້ກວດສອບພາຍນອກ ປະຈຳປີ 2023.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາການຂຶ້ນເງິນເດືອນໃຫ້ກັບພະນັກງານບໍລິສັດລາວເວີນມະຫາຊົນ ທີ່ມີຂັ້ນຕ່ຳແໜ່ງຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາ ການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ.

☐ ເຫັນດີ ☐ ບໍ່ເຫັນດີ

3. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃນມອບສິດນີ້ໃຫ້ຖືວ່າບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.
4. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼືລະບຸໄວ້ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.
5. ທຸກການກະທຳໃດຂອງຜູ້ຕາງໜ້າຢູ່ໃນກອງປະຊຸມທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ.

ທີ່ ..... ວັນທີ .....

ເຊັນຜູ້ຖືຮຸ້ນທີ່ມອບໝາຍ

.....

ເຊັນຜູ້ຕາງໜ້າ

.....

ໝາຍເຫດ:

1. ຜູ້ຖືຮຸ້ນຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງແທນຕົນເອງ.
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ. ບໍລິສັດລາວເວີນມະຫາຊົນ ມີສິດປະຕິເສດໃບມອບສິດໃດທີ່ບໍ່ໄດ້ຈົດທະບຽນສານ.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນຄື : ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼືໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້, ແລະໜັງສືເຊີນປະຊຸມ.

ເອກະສານຄັດຕິດ 8: ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະໜີໂຕເພື່ອເຂົ້າຮ່ວມກອງປະຊຸມ

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດລາວເວີນມະຫາຊົນ, ຜູ້ຖືຮຸ້ນ ຫຼືຜູ້ຕາງ ໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ

   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນເອງດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

   1.1 ບັດປະຈຳຕົວ

   1.2 ສຳມະໂນຄົວ

   1.3 ໜັງສືຜ່ານແດນ

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ

   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ:

   2.1 ໃບອະນຸຍາດລົງທຶນ

   2.2 ໃບທະບຽນວິສະຫະກິດ

   2.3 ໃບທະບຽນອາກອນສະບັບຫຼ້າສຸດ

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາ ພ້ອມຕື່ມອີກ.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງ ແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບ ພາສາຕ່າງປະເທດແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ບໍລິສັດລາວເວີນມະຫາຊົນ ມີສິດປະຕິເສດ ເອກະສານອ້າງອີງໃດໆທີ່ບໍ່ເປັນໄປຕາມການກຳນົດນີ້.

ເອກະສານຄັດຕິດ 9: ຄຳແນະນຳກ່ຽວກັບການລົງຄະແນນສຽງ

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດລາວເວີນ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນ ນັ້ນຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດລາວເວີນ ມະຫາຊົນທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະຮວບຮວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ ທັງໝົດໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າດ້ວຍວິສະຫະກິດ.

ໝາຍເຫດ

3. ຜູ້ຖືຮຸ້ນ ຫຼືຜູ້ຕາງໜ້າ ທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
4. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

ເອກະສານຄັດຕິດ10: ແຜນທີ່ບ່ອນປະຊຸມ


Lao Premier
International Law Office
BCEL ITEC
MALL BRANCH
Google